

# 占芭 ຈຳປາ

昆明

ພະນະທ່ານ ສົມສະຫວາດ ເລັ່ງສະຫວັດ

ຮອງນາຍົກລັດຖະມົນຕີຜູ້ປະຈຳການລັດຖະບານ

ຮັບການສຳພາດພິເສດຂອງນັກຂ່າວວາລະສານ "ຈຳປາ"

ປັກກິ່ງກັບທົ່ວທັງໂລກພ້ອມກັນຕະລຸມ ບອນບາດສຸດທ້າຍ

ລາຄາ: 13000 ກີບ ¥10

ISSN 1673-3266

07/2008

ສະບັບທີ 35


MEKONG An Authoritative Magazine in Thai
AUSPICIOUS An Authoritative Magazine in Burmanese
CHAMPA An Authoritative Magazine in Lao
Preferential Activity for Advertisement Provided by the Three Publications
Foreign Media Overbalance Investment Overal Agent Lower Price
湄公河
แม่น้ำโขง
12/2006 เล่มที่ 55
吉祥
2006/12
占芭
Same Investment Different Return
In order to thank old & new customers for their kindness in giving MEKONG, AUSPICIOUS & CHAMPA support for a long time, " The Three Publications " Golden Combination Suit advertisement has been specially worked out for customers.
Please contact the general agent for detailed information:
CHAMPA Magazine
Add:Education Garden,Extensionline of Xihua Road, Kunming,Yunnan, China
Tel:86-871-8042593 Fax:86-871-8042591
E-meil:ynzhanba@163.com
http://la.yunnan.cn http://laos.cri.cn http://www.scio.gov.cn

# ແຈ້ງການ

**ກ່ຽວກັບການເຄື່ອນໄຫວ "ຈັດງານປະກວດຮ້ອງ ເພງຈີນ"**

ເພື່ອປະສານສົມທົບການຮຽນພາສາຈີນຂອງຜູ້ອ່ານວາ ລະສານ "ຈຳປາ" (ຈີນ) ແລະ ເພື່ອນມິດຊາວລາວຈຳນວນຫລວງ ຫລາຍໃຫ້ໄດ້ຮັບຜົນດີກວ່າເກົ່າ, ສະຖານເອກອັກຄະລັດຖະທູດຈີນ ປະຈຳລາວ ແລະສຳນັກງານວາລະສານ "ຈຳປາ" (ຈີນ) ຮ່ວມ ກັນເປັນເຈົ້າພາບຈັດໃຫ້ມີການເຄື່ອນໄຫວ "ງານປະກວດຮ້ອງ ເພງຈີນ" ຂື້ນ, ຈຶ່ງຂໍແຈ້ງການມາຍັງທ່ານຜູ້ອ່ານທັງຫລາຍດັ່ງຕໍ່ ໄປນີ້:

1. ເປົ້າໝາຍຂອງຜູ້ເຂົ້າຮ່ວມງານປະກວດ: ຜູ້ອ່ານວາລະສານ "ຈຳປາ" (ຈີນ), ຜູ້ທີ່ພວມຮຽນພາສາຈີນ ຢູ່ລາວ, ນັກຮຽນນັກສຶກສາ, ຊາວລາວຜູ້ມັກຮ້ອງເພງຈີນ, ຈີນ ຕ່າງດ້າວແລະ ຊາວລາວທີ່ມີເຊື້ອສາຍຈີນ.

2. ຫົວໜ່ວຍທີ່ຮັບການຈັດງານປະກວດ: ສະມາຄົມຈີນນະຄອນຫລວງວຽງຈັນ.

3. ເພງທີ່ເຂົ້າຮ່ວມການປະກວດ: ໂດຍເອົາຊື່ເພງໃນ ຄໍລຳ "ຮຽນຮ້ອງເພງຈີນ" ໃນເວັບໄຊ "ຈຳປາ" (ຈີນ) ແລະ ເພງໃນແຜ່ນສຽງທີ່ສຳນັກງານວາລະສານ "ຈຳປາ" ແຈກຢາຍນັ້ນເປັນຫລັກ.

4. ການຈັດຕັ້ງການປະກວດຮອບທຳອິດ ແລະ ຮອບຄັດເລືອກພ້ອມທັງສະຖານທີ່ຂອງການປະກວດໃຫ້ແຕ່ລະພາກສ່ວນ, ແຕ່ລະຫົວໜ່ວຍແລະແຕ່ລະທ້ອງຖິ່ນຮັບຜິດຊອບເອງ, ປະກວດເອົາຜູ້ເຂົ້າຮ່ວມການແຂ່ງຂັນຮ້ອງເພງໃນຮອບຄັດ ເລືອກ 30 ຄົນເພື່ອເຂົ້າຮ່ວມການປະກວດຊິງຊະນະເລີດ.

5. ເວລາປະກວດຊິງຊະນະເລີດ: ກາງເດືອນທັນວາ ປີ2008.

6. ສະຖານທີ່ປະກວດຊິງຊະນະເລີດ: ຫໍວັດທະນະທຳ ແຫ່ງຊາດທີ່ນະຄອນຫລວງວຽງຈັນ ສປປ ລາວ.

7. ມາດຕະຖານຂອງການໃຫ້ຄະແນນ: ອອກສຽງສຳ ນຽງຊັດ, ອອກສຽງໄດ້ມາດຕະຖານ, ອາລົມຈິດທີ່ສະແດງອອກ ສວຍງາມ, ວາດຊົງຢູ່ເທິງເວທີສະຫງ່າ.

8. ງານປະກວດຊິງຊະນະເລີດ ໂດຍແມ່ນສະຖານເອກອັກຄະລັດຖະທູດຈີນປະຈຳລາວ, ສຳນັກງານວາລະສານ "ຈຳປາ" (ຈີນ) ແລະ ຫົວໜ່ວຍຮັບຈັດງານປະກວດຮ່ວມກັນຈັດຕັ້ງຂື້ນ.

ຜ່ານການປະກວດຊິງຊະນະເລີດແລ້ວ, ສຸດ ທ້າຍປະກວດອອກຜູ້ໄດ້ລາງວັນ ທີ 1: 5 ຄົນ, ລາງວັນທີ 2: 10 ຄົນ ແລະ ລາງວັນທີ 3: 15 ຄົນ. ເງິນລາງວັນທີ 1: 500 ຢວນ, ລາງວັນທີ 2: 300 ຢວນ, ລາງວັນທີ 3: 200 ຢວນ. ຜູ້ທີ່ເຂົ້າຮ່ວມການປະກວດຊິງຊະນະເລີດທັງໝົດລ້ວນແຕ່ໄດ້ຂອງລະນຶກ 1 ອັນ. ໃນນັ້ນ, ຜູ້ທີ່ໄດ້ລາງວັນທີ 1 ຈະຖືກສຳນັກພິມວາລະສານ "ຈຳປາ" ເຊື້ອເຊີນເດີນທາງໄປທັດສະນະສຶກສາ ແລະ ທ່ຽວຊົມທີ່ຄຸນມິງ ແລະ ແຫ່ງອື່ນໆຂອງຈີນ, ຄ່າໃຊ້ຈ່າຍແມ່ນສຳນັກງານວາລະສານ "ຈຳປາ" (ຈີນ) ເປັນຜູ້ຮັບຜິດຊອບ, ຈຶ່ງແຈ້ງການມາເພື່ອຊາບ.

ໂທລະສັບຫາບທາມ: 0086-871-8042591 ຜູ້ຕິດຕໍ່ພົວພັນ: ຊູເອີນເອີນ

00856-21-214661 ຜູ້ຕິດຕໍ່ພົວພັນ: ເພິງເຈິ້ນຮົວ

ວັນທີ 18 ມິຖຸນາ ປີ 2008

ສະຖານເອກອັກຄະລັດຖະທູດ ສປ ຈີນ ປະຈຳ ສປປ ລາວ

ສຳນັກງານວາລະສານ "ຈຳປາ" ພາສາລາວ ແຫ່ງປະເທດຈີນ.

## 关于举办"学唱中文歌曲大赛"活动

## 公　告

为了更好地配合中国·《占芭》杂志读者和广大老挝朋友学习汉语，中国驻老挝大使馆、中国·《占芭》杂志社联合主办"学唱中文歌曲大赛"活动，现公告如下：

1. 参赛对象 ：中国·《占芭》杂志读者，老挝正在学习中文人员，青年学生，老挝中文歌曲爱好者，华人华侨。

2. 承办单位 ：老挝万象中华理事会。

3. 参赛歌曲 ：以中国·《占芭》网站"学唱中文歌曲"栏目中歌曲及杂志社发放的光盘歌曲为主要参赛曲目。

4. 初赛、复赛组织及地点由各系统、各单位、各地区负责，复赛后共选出 30 名选手参加决赛。

5. 决赛时间 ：2008 年 12 月中旬。

6. 决赛地点 ：老挝万象国家文化宫。

7. 评分标准 ：吐字清楚、发音准确，表情优美、台风庄重。

8. 决赛由中国驻老挝大使馆，中国·《占芭》杂志社，及承办单位共同组织。

通过大赛，最后决出一等奖 5 名，二等奖 10 名，三等奖 15 名。一等奖奖金人民币 500 元 ；二等奖奖金人民币 300 元 ；三等奖奖金人民币 200 元。凡参加决赛者均获纪念品一份。其中，一等奖获得者由中国·《占芭》杂志社邀请前往中国昆明等地观光考察，费用由《占芭》杂志社承担。

联系电话 ：0086—0871—8042591　联系人 ：苏雯雯

00856—21— 214661　联系人 ：彭正华

中国驻老挝大使馆

中国 · 老挝文《占芭》杂志社

2008年7月

# ສາລະບານ

**07/2008 ສະບັບທີ 35**


ເຈົ້າໜ້າທີ່ຄຸ້ມຄອງໂດຍ
ຫ້ອງການຂ່າວຄະນະລັດຖະບານສ ປຈີນ
ຈັດທຳໂດຍ
ສະມາຄົມແລກປ່ຽນວັດທະນະທຳກັບຕ່າງ
ປະເທດແຂວງຢູນນານສ ປຈີນ
ຮຽບຮຽງພິມຈຳໜ່າຍ
ສຳນັກພິມວາລະສານ 《ຈຳປາ》
ຫົວໜ້າບັນນາທິການ
ໄຊຊຸນແຊງ
ຫົວໜ້າບັນນາທິການບໍລິຫານ
ຢາງຢູນ
ຫົວໜ້າພິມຈຳໜ່າຍ
ຢູຢເຈິ້ງຢູຢ
ຜູ້ຄຸ້ມງານບັນນາທິການ
ຫວາງວັນລີ
ບັນນາທິການປະຈຳ
ຊູເວີນເວີນ
ຜູ້ຄຸ້ມງານຝ່າຍສິລະປະ
ຈູ້ສິນ
ຜູ້ແປພາສາລາວ
ທອງຂຽນ ຂຳຕະກຸນ
ບັນນາທິການອ່ານກວດ ພາສາລາວ
ລິວເຢີນເຫີ
ຜູ້ພິມດີດພາສາລາວ
ຈັນເຫວີວັນ
ຜູ້ຄຸ້ມງານຝ່າຍອິນເຕີເນັດ
ຈາງເຊີຢີ
ບັນນາທິການຝ່າຍອິນເຕີເນັດ
ລີທາວ
ພະນັກງານຝ່າຍປົກຄອງ
ລູຢູຢ

ພິມຈຳໜ່າຍເປີດເຜີຍ:
ພາຍໃນແລະຕ່າງປະເທດ
ອອກຈຳໜ່າຍ:
ວັນທີ 5 ທຸກເດືອນ
ລະຫັດວາລະສານມາດຖານສາກົນ:
ISSN 1673–3266
ລະຫັດວາລະສານປະເທດຈີນ:
CN53–1200/D
http://www.r ivermk.com
E–mail: ynzhanba@163.com

ເລກໃບປາຕັງທຸລະກິດໂຄສະນາ: 5300004000052

ສະຖານທີ່: ສວນດອກໄມ້ສຶກສາສາຍທາງຕໍ່ຖະ
ໜົນຊີຮວາ ນ.ຄ.ຄຸນໝິງ ຂວ.ຢູນນານ
ລະຫັດໄປສະນີ: 650228
ໂທ: 86-871-8042593
ແຟັກ: 86-871-8042591





ທ່ານສົມສະຫວາດ ເລັ່ງສະຫວັດ ຮອງນາຍົກລັດຖະມົນຕີຜູ້ປະຈຳການລັດຖະບານລາວເຂົ້າຮ່ວມພິທີການເຄື່ອນໄຫວລິເລີ່ມສົ່ງຕໍ່ທອນໄຟໂອລິມປິກປັກກິ່ງປີ2008ກໍຄືການເຄື່ອນໄຫວສົ່ງຕໍ່ນະຄອນຄຸນມິງ.

老挝人民民主共和国常务副总理宋沙瓦・凌沙瓦参与北京2008奥林匹克火炬接力云南省暨昆明市传递活动起跑仪式　王 红 图


**主　　管**：中华人民共和国国务院新闻办公室
**主　　办**：云南省对外文化交流协会
**编辑出版**：《占芭》杂志社
**总　编　辑**：蔡春生
**执行总编辑**：杨　云
**总编室主任**：禹正玉
**编辑总监**：王万里
**责任编辑**：苏雯雯
**美术总监**：祝　群
**翻　　译**：通肯・坎达古温
**老挝文译审**：刘仁和
**老挝文录入**：杨思艳
**网络总监**：张守义
**网络编辑**：李　涛
**编　　务**：陆　蕊

**发行范围**：国内外公开发行
**出版日期**：每月五日
**邮发代号**：64－36
**国际标准刊号**：ISSN 1673－3266
**国内统一刊号**：CN53－1200/D

广告经营许可证号：5300004000052

**地址**：云南省昆明市西华路延长线 教育花园三楼
编辑部电话：86-871-8042593
办公室电话：86-871-8042591
**传真**：86-871-8042591
**邮编**：650228















## ສາລະຄະດີພິເສດ 本刊特稿

04 ພະນະທ່ານ ສົມສະຫວາດ ເລັ່ງສະຫວັດ ຮອງນາຍົກລັດຖະມົນຕີ ຜູ້ປະຈຳການລັດຖະບານ ຮັບການສຳພາດພິເສດຂອງນັກຂ່າວວາລະສານ "ຈຳປາ"



## ດອກຈຳປາແບ້ງບານເພື່ອຕ້ອນຮັບງານກິລາໂອລິມປິກ 占芭花开迎奥运

08 ທອນໄຟນົງຄຸນໄດ້ສິ່ງຕໍ່ຢູ່ປຸ່ນບານທີ່ມີຫລາຍສີສັນ
10 ງານມະໂຫລານຂອງມວນມະນຸດ ກິດຈະກຳໃຫຍ່ໂຕມະໂຫລານຂອງອະລິຍະທຳ
14 ປັກກິ່ງກັບທົ່ວທັງໂລກພ້ອມກັນຕະລຸມ ບອນບາດສຸດທ້າຍ
22 ພາສາ 44 ຊະນິດຂອງອົງກອນແປພາສາງານມະ ຫະກຳກິລາໂອລິມປິກປັກກິ່ງໄດ້ແປພາສາໂດຍກົງໃນງານມະຫະກຳກິລາໂອລິມປິກຢ່າງຕໍ່ເນື່ອງ
24 ຄູ່ມືຊີ້ທິດການທ່ອງທ່ຽວງານກິລາໂອລິມປິກປັກກິ່ງ
26 ສະໜາມ ແລະ ຫໍກິລາໂອລິມປິກໄດ້ສ້າງຍີ່ຫໍ້ດັງຂອງຈີນຂຶ້ນ

## ປະຕູເມືອງຈີນ 中国之窗

28 ຈີນອ້າແຂນເປີດ ປະຕູສູ່ພາຍນອກມາປະເຊີນໜ້າກັບໂລກ
32 ມື້ໃໝ່ຈະຍິ່ງດີກວ່າເກົ່າ
36 ມວນຊົນເຂດຕີເບດໄດ້ຊົມໃຊ້ແສງສະຫວ່າງຂອງການເງິນສາທາລະນະບັບມື້ນັບຫລາຍ

## ຢູນນານທີ່ມີສະເໜ່ 魅力云南

38 ພ້ອມກັນຊອກຄົ້ນຫາກາລະໂອກາດ ແລະ ການທ້າທາຍ

## ຫຼຽວເບິ່ງອາຊຽນ 东盟瞭望

40 "ເວທີປາໄສແລວທາງເສດຖະກິດ GMS ໄດ້ຈັດຂຶ້ນ ຢູ່ທີ່ຄຸນມິງ
42 ເວທີປາໄສນັກທຸລະກິດຈີນຕ່າງດ້າວອາຊີປາຊີຟິກ ຄັ້ງທີ່ 6 ຈັດຂຶ້ນຢູ່ຄຸນມິງ



## ເມືອງລາວໃນວັນນີ້ 今日老挝

44 ຊອກຫາໂອກາດທາງການຄ້າທັນການຮ່ວມມື ເຂົ້າສູ່ລວງເລິກ

## ການທ່ອງທ່ຽວທັດສະນາຈອນ 旅游纵横

48 ແມ່ນ້ຳເຫລືອງ: ແຫລ່ງກຳເນີດອະລິຍະທຳຂອງປະຊາຊາດຈີນ
50 ເມືອງບູຮານຜິນຢ້າວ

## ລຽບຊົມວັດທະນະທຳ 文化博览

54 ສິລະປະງິ້ວຂອງຈີນ



## ປະຊາຊາດຈີນ 中华民族

56 ຖະໜົນເດືອນ 3 ຂອງຊົນເຜົ່າໄປ່ຕ່າລີ

## ບໍລິການເພື່ອທ່ານ 为您服务

60 ເອົານ້ຳສົ້ມໃສ່ອາຫານໜ້ອຍໜຶ່ງຍິ່ງມີຜົນດີຕໍ່ສຸຂະພາບ

## ຮຽນພາສາຈີນ 学 汉 语

62 ສະຖານທີ່ທ່ຽວຫລິ້ນແຄມທະເລດ້ວຍຄວາມເບີກບານມ່ວນຊື່ນຂອງຄົນຄຸນມິງ

## ນິທານສຸພາສິດ 成语故事

64 ໄດ້ຍິນສຽງໄກ່ຂັນກໍນອນຕື່ນລຸກຂຶ້ນຟ້ອນ

# ພະນະທ່ານ ສົມສະຫວາດ ເລັ່ງສະຫວັດ ຮອງນາຍົກລັດຖະມົນຕີ ຜູ້ປະຈຳ ການລັດຖະບານສປປ ລາວ ຮັບການສຳພາດພິເສດຂອງນັກຂ່າວວາລະສານ "ຈຳປາ"

## 老挝人民民主共和国 常务副总理宋沙瓦 · 凌沙瓦 接受《占芭》杂志记者专访

文 / 苏雯雯　图 / 张守义

老挝常务副总理宋沙瓦 · 凌沙瓦应邀出席第十六届昆交会和 GMS 经济走廊论坛期间，2008 年 6 月 8 日，在昆明世纪金源大酒店，接受了老挝文《占芭》杂志社执行总编辑杨云和记者的专访，并就中老经贸合作等问题回答了记者的提问。

ໃນໄລຍະພະນະທ່ານ ສົມສະຫວາດ ເລັ່ງສະຫວັດຮອງນາຍົກລັດຖະມົນຕີຜູ້ປະຈຳການລັດຖະບານສປປ ລາວຕອບສະໜອງການເຊື້ອເຊີນເຂົ້າຮ່ວມງານນິທັດສະການແລກປ່ຽນຊື້-ຂາຍທີ່ຄຸນມິງຄັ້ງທີ່ 16 ແລະ ເວທີປາໄສແລວທາງເສດຖະກິດນັ້ນ, ໃນວັນທີ່ 8 ມິຖຸນາປີ 2008, ທ່ານໄດ້ໃຫ້ກຽດຮັບການຂໍສຳພາດພິເສດຂອງທ່ານຢາງຢຸນຫົວໜ້າບັນນາທິການບໍລິຫານແລະນັກຂ່າວຂອງສຳນັກງານວາລະສານ "ຈຳປາ"ພາສາລາວທີ່ໂຮງແຮມຊື້ຈີ້ຈິ່ນຢວນ ທີ່ນະຄອນຄຸນມິງ.

ນັກຂ່າວ: ສະບາຍດີພະນະທ່ານສົມສະຫວາດເລັ່ງສະຫວັດຮອງນາຍົກລັກຖະມົນຕີຜູ້ປະຈຳການທີ່ນັບຖື. ຂ້າພະເຈົ້າຊື່: ຢາງຢຸນຫົວໜ້າບັນນາທິການບໍລິຫານວາລະສານ "ຈຳປາ". ວາລະສານ "ຈຳປາ"ພາສາລາວຊຶ່ງແມ່ນຫ້ອງວ່າການຖະແຫຼງຂ່າວຄະນະລັດຖະບານຂອງຈີນເປັນຜູ້ກຳກັບ ໂດຍກົງ, ນັບແຕ່ເດືອນກັນຍາ ປີ 2005 ພິມຈຳໜ່າຍເປັນຕົ້ນມາ, ໄດ້ຮັບການ



ທ່ານຢາງຢຸນຫົວໜ້າບັນນາທິການບໍລິຫານວາລະສານ《ຈຳປາ》(ຊາຍ1)ສຳພາດຂ່າວສະເພາະຕໍ່ທ່ານສົມສະຫວາດ ເລັ່ງສະຫວັດ ຮອງນາຍົກລັດຖະມົນຕີຜູ້ປະຈຳການລັດຖະບານລາວ(ຂວາ1)
《占芭》杂志社执行总编辑杨云专访老挝常务副总理宋沙瓦 · 凌沙瓦

ຍ້ອງຍໍສັນລະເສີນຈາກຜູ້ນຳແຕ່ລະຂັ້ນ ແລະ ຜູ້ອ່ານຊາວລາວເປັນຈຳນວນຫຼວງຫຼາຍ.ວາລະສານດັ່ງກ່າວສ້າງຂຶ້ນເພື່ອເພີ່ມທະວີມິດຕະພາບຈີນ-ລາວ,ອອກແຮງເພີ່ມທະວີການແລກປ່ຽນເສດຖະກິດວັດທະນະທຳ ແລະ ຄວາມຈະເລີນສີວິໄລຮ່ວມກັນຂອງສອງປະເທດຈີນ-ລາວ.ຂ້າພະເຈົ້າໄດ້ຮັບການມອບໝາຍຈາກຫ້ອງວ່າການໂຄສະນາຕໍ່ຕ່າງປະເທດສູນກາງ,ຫ້ອງວ່າການຖະແຫລວງຂ່າວຄະນະລັດຖະບານ,ຕາງໜ້າບຸກຄະລາກອນນັກຂ່າວ ແລະ ບັນນາທິການທັງໝົດຂອງສຳນັກງານວາລະສານ "ຈຳປາ",ສະແດງຄວາມຂອບອົກຂອບໃຈຢ່າງສຸດຊຶ້ງຕໍ່ພະ



ທ່ານວິຈິດ ຊິນດາວົງເອກອັກຄະລັດຖະທູດສ ປປ ລາວປະຈຳຈີນ(ຊາຍ2) ເຈົ້າໜ້າທີ່ກະຊວງຄົມມະນາຄົມ(ຊາຍ1)ສ ປປ ລາວເຂົ້າຮ່ວມໃນງານສຳພາດ.

老挝驻中国大使维吉 · 辛达翁，交通部官员专访时在座

ນະທ່ານສົມສະຫວາດ ເລັ່ງສະຫວັດຮອງນາຍົກລັດຖະມົນຕີຜູ້ປະຈຳການລັດຖະບານ.ໃນໄລຍະການໄວ້ອາໄລຕໍ່ດວງວິນຍານຜູ້ປະສົບໄພແຜ່ນດິນໄຫວຂະໜາດໃຫຍ່ຂອງເຂດເວີນຊວນແຂວງເສສວນຂອງຈີນນັ້ນ, ພະນະທ່ານບົວສອນ ບຸບຜາວັນນາຍົກລັດຖະມົນຕີສປປ ລາວ ແລະ ພະນະທ່ານເອງຕ່າງໄດ້ໄປສະແດງຄວາມໄວ້ອາໄລຕໍ່ປະຊາຊົນຜູ້ເສຍຊີວິດເຂດປະ ສົບໄພນະສະຖານເອກອັກຄະລັດຖະທູດສປ ຈີນປະຈຳ ສປປ ລາວ ແລະ ຍັງໄດ້ສະໜອງການຊ່ວຍເຫຼືອຢ່າງບໍລິສຸດໃຈ.ໄດ້ສະແດງອອກມິດຕະພາບ ແລະ ຄວາມຮັກໃຄ່ອັນເລິກເຊິ່ງຂອງປະຊາ ຊົນ 2 ຊາດຈີນ-ລາວ. ມື້ນີ້ຂ້າພະເຈົ້າຮູ້ສຶກເປັນກຽດຢ່າງສູງ ແລະ ປິຕິຊົມຊື່ນທີ່ສຸດທີ່ໄດ້ຮູ້ຈັກກັບພະນະທ່ານ ແລະ ຂໍສຳພາດພິເສດຕໍ່ພະນະທ່ານ.

ພະນະທ່ານ ສົມສະຫວາດ ເລັ່ງສະຫວັດ: ພັກ ແລະ ລັດຖະບານ 2 ຊາດລາວ-ຈີນ ມີມິດຕະພາບອັນເປັນມູນເຊື້ອ,ແຕ່ໃດມາລາວໄດ້ຮັບການຊ່ວຍເຫຼືອ ແລະ ສະໜັບສະໜູນຈາກຝ່າຍຈີນ. ສະໄໝສົງຄາມຕໍ່ຕ້ານ, ລັດຖະບານ ແລະ ປະຊາຊົນຈີນໄດ້ສະໜອງການຊ່ວຍເຫລືອຢ່າງຈິງໃຈໃຫ້ແກ່ລາວ, ນັບແຕ່ສປປ ລາວໄດ້ສະຖາປະນາ 30 ກວ່າປີມານີ້, ຍັງໄດ້ອອກແຮງໃຫ້ການສະໜັບສະໜູນແກ່ລາວ. ການເກີດໄພແຜ່ນດິນໄຫວຂະໜາດໃຫຍ່ທີ່ເຂດເວີນຊວນແຂວງເສສວນຄັ້ງນີ້, ໄດ້ສ້າງຄວາມເສຍຫາຍອັນໜັກໜ່ວງຕໍ່ຊີວິດ ແລະຊັບສິນຂອງປະຊາຊົນ,ພັກ,ລັດຖະບານ ແລະ ປະຊາຊົນລາວລ້ວນແຕ່ໄດ້ສະແດງຄວາມໄວ້ອາໄລ ແລະ ເສົ້າເສຍໃຈຢ່າງສຸດຊຶ້ງ. ລາວເປັນປະເທດດ້ອຍພັດທະນາ,ບໍ່ມີກຳລັງຊັບເທົ່າໃດ,ແຕ່ລັດຖະບານໄດ້ປຸກລະດົມບັນດາວົງການໃນສັງຄົມອອກແຮງຢ່າງສຸດຄວາມສາມາດຊ່ວຍ ເຫລືອຈີນຕ້ານໄພ ແລະ ກູ້ໄພ,ລາວຈະຢູ່ຄຽງບ່າຄຽງໄຫລ່ກັບປະຊາຊົນຈີນຕະຫລອດການະນານ.ຈີນມີສຸພະສິດອັນລືຊື່ຄຳໜຶ່ງວ່າ: "ຝ່າຍໜຶ່ງພົບຄວາມຫຍຸ້ງຍາກ, ຫລາຍຝ່າຍຍື່ນມືສະ ໜັບສະໜູນ"

ນັກຂ່າວ: ເວທີປາໄສແລວທາງເສດຖະກິດGMS ຍາດໄດ້ໝາກຜົນຢ່າງເປັນລະບົບ. ການຈັດໃຫ້ມີເວທີປາໄສແລວທາງເສດຖະກິດGMSຈຸດປະສົງກໍເພື່ອລິເລີ່ມສ້າງແລວທາງເສດຖະກິດອະນຸພາກພື້ນແມ່ນ້ຳຂອງ, ພະນະທ່ານເຫັນວ່າເວທີປາໄສແລວທາງເສດຖະກິດ GMS ມີບົດບາດຢ່າງຕັ້ງໜ້າແນວໃດຕໍ່ການຊຸກຍູ້ ແລະ ຍົກລະດັບການພັດທະນາເສດຖະກິດການຄ້າຂອງລາວ?

ພະນະທ່ານ ສົມສະຫວາດ ເລັ່ງສະຫວັດ:ນັບແຕ່ GMS ສ້າງຂຶ້ນໃນປີ1992ເປັນຕົ້ນມາ, ບໍ່ພຽງແຕ່ລາວຍາດໄດ້ໝາກຜົນອັນໃຫຍ່ຫລວງທີ່ສຸດ, ຕໍ່ບັນດາປະເທດGMS.ເວທີປາໄສ ເສດຖະກິດໃຕ້-ເໜືອທີ່ສະເໜີອອກໃນເວທີປາໄສແລວທາງເສດຖະກິດ GMS ຄັ້ງນີ້ເປັນເວທີແລກປ່ຽນສຳຄັນອັນໜຶ່ງສືບຕໍ່ກອງປະຊຸມສຸດຍອດ GMS ຄັ້ງທີ່ 3 ທີ່ຈັດຂຶ້ນຢູ່ລາວໃນປີນີ້. ເວທີປາໄສຄັ້ງນີ້



ທ່ານສົມສະຫວາດ ເລັ່ງສະຫວັດຮອງນາຍົກລັດຖະມົນຕີຜູ້ປະຈຳການລັດຖະບານລາວ(ຂວາ1) ຂຽນຄຳອວຍພອນແດ່ວາລະສານ《ຈຳປາ》
老挝常务副总理宋沙瓦 · 凌沙瓦为《占芭》杂志题词

ຈະສະໜອງການຊ່ວຍເຫລືອບັນດາປະເທດ GMS ຊຶ່ງນັບທັງລາວຢູ່ໃນນັ້ນດ້ວຍ. ປະຈຸບັນທາງຜ່ານໂລ່ງຫາກັນເສັ້ນໄທຍ່ສາກົນຄຸນມິງ-ບາງກອກໄດ້ເປີດໂລ່ງຫາກັນທົ່ວທັງເສັ້ນແລ້ວ, ເຮັດແນວໃດຈະເອົາທ່າແຮງດ້ານຄົມມະນາຄົມຫັນມາເປັນທ່າແຮງດ້ານເສດຖະກິດ ນີ້ເປັນບັນຫາທີ່ພວກເຮົາຈະຕ້ອງຄົ້ນຄວ້າ ແລະໃຫ້ແທດເຖິງຕົວຈິງໃນກ້າວຕໍ່ໄປ. ຢຸນນານ, ລາວແລະໄທຈະເນັ້ນໜັກໃສ່ໃນການຄົ້ນຄວ້າສົນທະນາຈະຊຸກຍູ້ພັດທະນາດ້ານຕ່າງໆດ້ວຍວິທີໃດນັບທັງເສດຖະກິດການຄ້າຢູ່ໃນນັ້ນນຳ ເຊັ່ນ: ດ່ານສາກົນໃນປະຈຸບັນ, ການຜ່ານດ່ານຂອງບຸກຄະລາກອນ ແລະ ສິນຄ້າຍັງປະສົບກັບບັນຫາທີ່ບໍ່ທັນໂລ່ງຫາກັນຫລາຍສົມຄວນ, ຕ້ອງການແກ້ໄຂໃຫ້ໄວເທົ່າທີ່ຈະໄວໄດ້. ຕົວຢ່າງ: ແຂວງຜົ້ງ ສາລີ, ແຂວງອຸດົມໄຊ ແລະແຂວງຫລວງນ້ຳທາຂອງລາວມີການຕິດຈອດດ່ານທາງບົກກັບແຂວງຢຸນນານ, ຊ້ຳພັດມີແຕ່ດ່ານສາ ກົນທາງບົກຫລວງນ້ຳທາ-ບໍ່ຫານແຫ່ງດຽວ, ຖ້າວ່າປະຊາກອນຂອງແຂວງຜົ້ງສາລີຢາກໄປຢຸນນານ, ທາງຜ່ານລະຫວ່າງ 2 ແຂວງແມ່ນບໍ່ມີບັນຫາ, ແຕ່ວ່າເຂດແຂວງອື່ນໆແມ່ນມີຄວາມ ຫຍຸ້ງຍາກທີ່ສຸດ, ເພາະວ່າບໍ່ມີອົງກອນເຮັດລະບຽບການຜ່ານ ແດນຂອງ 2 ປະເທດ, ບຸກຄະລາກອນຂອງແຂວງອື່ນໆເຖິງວ່າຈະຖືປັດສະປໍຢາກຜ່ານແຂວງຜົ້ງສາລີເຂົ້າໄປສູ່ຢຸນນານກໍຈະບໍ່ສະດວກ. ແຂກຄົນຈາກຢຸນນານໄປທ່ອງທ່ຽວແຂວງຜົ້ງສາລີ, ຢາກ ຈາກແຂວງຜົ້ງສາລີເຂົ້າເລິກໄປສູ່ທ້ອງຖິ່ນອື່ນໆຂອງລາວກໍບໍ່ສະ ດວກ, ດັ່ງນັ້ນຕ້ອງແກ້ໄຂບັນຫາດັ່ງກ່າວໃນພາກຕົວຈິງ.

ນັກສືຂ່າວ: ຊຸມປີໃກ້ໆມານີ້ການໄປມາຫາສູ່ດ້ານເສດຖະກິດການຄ້າ 2 ຝ່າຍຈີນ-ລາວ ໄດ້ປະກົດອອກມີການພັດທະນາອັນຈົບງາມ, ແຕ່ລະປະເທດລ້ວນແຕ່ນຳໃຊ້ຫລາຍມາດຕະການເພື່ອດູດດຶງເອົາປະເທດອື່ນໆມາລົງທຶນດ້ານການຄ້າໃນປະເທດຕົນເຊັ່ນ: ເລັ່ງລັດການກໍ່ສ້າງໂຄງລ່າງພື້ນຖານ, ເຮັດໃຫ້ລະບຽບການຜ່ານດ່ານຊາຍແດນຫັນເປັນແບບງ່າຍດາຍເປັນຕົ້ນ, ຈຶ່ງຂໍຖາມພະນະທ່ານວ່າ: ລັດຖະບານລາວໃນດ້ານນີ້ມີມາດຕະການ ແລະ ເງື່ອນໄຂບຸລິມະສິດອັນເປັນຮູບປະທຳແນວໃດແດ່ເພື່ອດູດດຶງນັກລົງທຶນຂອງບັນດາປະເທດ?

ພະນະທ່ານ ສົມສະຫວາດ ເລັ່ງສະຫວັດ: ລາວ-ຈີນ ແລະປະເທດອື່ນໆລ້ວນແຕ່ມີຄວາມມຸ່ງໝາດປາຖະໜາອັນດຽວກັນນັ້ນ ກໍຄື: ຫວັງວ່າຈະສາມາດດູດດຶງເອົາທຶນຈາກຕ່າງປະເທດໃຫ້ຫລາຍທີ່ສຸດເຂົ້າມາປະເທດຕົນເພື່ອພັດທະນາເສດຖະກິດ. ການດູດດຶງເອົາການລົງທຶນຈາກນັກທຸລະກິດຕ່າງປະເທດນັ້ນ, ໂຄງລ່າງ ພື້ນຖານຕ້ອງຄົບຖ້ວນ, ຂໍ້ກຳນົດຂອງການສົ່ງເສີມ ແລະຄຸ້ມຄອງ ຕ່າງໆຕ້ອງສະດວກ ແລະ ວ່ອງໄວ. ຊຸມປີໃກ້ໆມານີ້, ລັດຖະບານລາວໄດ້ເອົາໃຈໃສ່ທີ່ສຸດຕໍ່ໂຄງການກໍ່ສ້າງໂຄງລ່າງພື້ນຖານເຊັ່ນ: ຖະໜົນຫົນທາງ ແລະ ພະລັງງານໄຟຟ້າເປັນຕົ້ນ, ຕໍ່ການລົງທຶນຂອງນັກທຸລະກິດຕ່າງປະເທດ, ພະຍາຍາມເຮັດໃຫ້ໄດ້ມີປະສິດທິພາບສູງ ແລະ ວ່ອງໄວ. ສະນັ້ນ, ພວກເຮົາຈຶ່ງສະເໜີ ຄຳຂວັນຂອງການບໍລິການ "ແບບຜ່ານປະຕູດຽວ". ແຕ່ອັນນີ້ກໍແມ່ນໄລຍະຂອງຄວາມຄືບໜ້າໄປຕາມຂັ້ນຕອນ, ທິດທາງນະໂຍບາຍຂອງລາວປະຈຸບັນມີສ່ວນໜຶ່ງຍັງບໍ່ທັນໄດ້ຖືກພົນຂະຫຍາຍ ແລະ ແທດເຖິງຕົວຈິງຢ່າງຄົບຖ້ວນ. ນີ້ກໍຍ້ອນວ່າຄຸນທາດຂອງພະນັກງານຍັງຕ້ອງມີການຍົກລະດັບຂຶ້ນອີກຕື່ມກ້າວໜຶ່ງ. ນອກ ນັ້ນ, ພວມຄົ້ນຄວ້າປະກາດອອກນຳໃຊ້ກ່ຽວກັບຂໍ້ກຳນົດກົດໝາຍດ້ານການເກັບພາສີອາກອນເປັນຕົ້ນຄືະນະໂຍບາຍບຸລິມະສິດຕໍ່ການໄປລົງທຶນຢູ່ເຂດຫ່າງໄກສອກຫລີກ ແລະ ອື່ນໆເປັນຕົ້ນ.

ນັກສືຂ່າວ: ວາລະສານ "ຈຳປາ" ນັບແຕ່ໄດ້ຈັດພິມແລະຈຳໜ່າຍເປັນຕົ້ນມາ, ໄດ້ຮັບການສະໜັບສະໜູນແລະເປັນຫ່ວງເປັນໃຍຢ່າງຕັ້ງໜ້າຈາກພັກແລະ ລັດຖະບານລາວ. ໂດຍສະເພາະແມ່ນກະຊວງການຕ່າງປະເທດ, ຄະນະໂຄສະນາອົບຮົມສູນກາງ, ກະຊວງຖະແຫລງຂ່າວວັດທະນະທຳ ແລະ ກົມພາສີໄດ້ແກ້ໄຂການຍົກເວັ້ນພາສີຜ່ານດ່ານຜ່ານແດນ, ເຮັດລະບຽບການຂຶ້ນທະບຽນພິມຈຳໜ່າຍ, ຊ່ວຍສ້າງເຄືອຂ່າຍຈຳໜ່າຍ ຢ່າງທັນການທີ່ມີລັກສະນະທົ່ວປະເທດໃຫ້ແກ່ວາລະສານ

"ຈຳປາ",ພວກຂ້າພະເຈົ້າຂໍສະແດງຄວາມຂອບອົກຂອບໃຈຢ່າງສຸດຊຶ້ງ.ເພື່ອ ເຮັດໃຫ້ວາລະສານ "ຈຳປາ" ນັບມື້ນັບດີຂຶ້ນ, ຍິ່ງສອດຄ່ອງກັບ ຄວາມຊິນເຄີຍຂອງຜູ້ອ່ານຊາວລາວ,ຈຶ່ງຮ້ອງຮຽນມາຍັງພະນະ ທ່ານຈຶ່ງກະລຸນາໃຫ້ຄຳຊີ້ນຳແກ່ວາລະສານ "ຈຳປາ" ດ້ວຍຄຳຄິດຄຳເຫັນທີ່ມີລັກສະນະຊີ້ທິດດ້ວຍ.

ພະນະທ່ານ ສົມສະຫວາດເລັ່ງສະຫວັດ: ນັບແຕ່ເລີ່ມພິມຈຳໜ່າຍວາລະສານ "ຈຳປາ" ເປັນຕົ້ນມາກໍຍາດໄດ້ຜົນງານອັນໜ້າເພິ່ງພໍໃຈ,ຈັດພິມໄດ້ດີຫລາຍ, ໄດ້ຮັບຄວາມເອົາໃຈໃສ່ ແລະເປັນຫ່ວງເປັນໃຍຈາກຂະແໜງການຂອງພັກແລະລັດຖະບານ ແລະ ຄວາມນິຍົມຊົມຊອບຈາກຜູ້ອ່ານຊາວລາວຢ່າງກວ້າງຂວາງ.ວາລະສານ "ຈຳປາ"ຊຶ່ງເປັນສື່ມວນຊົນອັນໜຶ່ງ, ມວນຊົນ ຂອງລາວຜ່ານການອ່ານວາລະສານດັ່ງກ່າວແລະໄດ້ຊອກຮູ້ສະພາບການພັດທະນາດ້ານວັດທະນະທຳ ແລະ ເສດຖະກິດສັງຄົມຂອງຈີນໄດ້ຫລາຍຂຶ້ນກວ່າເກົ່າ. ວາລະສານ "ຈຳປາ" ດ້ານ ການແປຈາກພາສາຈີນມາເປັນພາສາລາວນັ້ນ,ຍັງຕ້ອງໃຫ້ລ່ຽນໄຫຼ ແລະ ຍົກສູງລະດັບການແປອີກຕື່ມກ້າວໜຶ່ງ, ນີແຕ່ເຮັດແນວນີ້ຈຶ່ງຍິ່ງສອດຄ່ອງກັບຄວາມຊິນເຄີຍການອ່ານຂອງຜູ້ອ່ານຊາວລາວ.

ຄຳອວຍພອນແດ່ວາລະສານ "ຈຳປາ" ຂອງພະນະທ່ານສົມສະຫວາດ ເລັ່ງສະຫວັດຮອງນະຍົກລັດຖະມົນຕີຜູ້ປະຈຳການລັດຊຸຖະບານ ສປປ ລາວຄື:

ຂໍໃຫ້ວາລະສານຈຳປາຈົ່ງນັບມື້ນັບສົ່ງກິ່ນຫອມຫວນແຫ່ງມິດຕະພາບຖານອ້າຍນ້ອງແລະການຮ່ວມມືຮອບດ້ານລະຫວ່າງຈີນແລະລາວ.

ທ້າຍສຸດທ່ານຢາງຢຸນ ຫົວໜ້າບັນນາທິການບໍລິຫານຂອງວາລະສານ "ຈຳປາ" ພາສາລາວໄດ້ມອບວາລະສານ "ຈຳປາ" ສະບັບຈັດເປັນຫົວດຽວຂອງປີ 2007 ແລະຂອງຂວັນມອບໃຫ້ພະນະທ່ານ ສົມສະຫວາດ ເລັ່ງສະຫວັດຮອງນາຍົກລັດຖະມົນຕີຜູ້ປະຈຳການລັດຖະບານ

ທ່ານ ວິຈິດ ຊິນດາວົງເອກອັກຄະລັດຖະທູດ ສປປ ລາວປະຈຳສປ ຈີນ,ເຈົ້າໜ້າທີ່ກະຊວງໂຍທາທິການ ແລະ ຂົນສົ່ງສປປ ລາວ ກໍໄດ້ເຂົ້າຮ່ວມ ການໃຫ້ສຳພາດພິເສດໃນຄັ້ງນີ້ດ້ວຍ.



ທ່ານສົມສະຫວາດ ເລັ່ງສະຫວັດ ຮອງນາຍົກລັດຖະມົນຕີຜູ້ປະຈຳການລັດຖະບານລາວ(ຊາຍ5)ແລະທ່ານວິຈິດ ຊິນດາວົງເອກອັກຄະລັດຖະທູດສ ປປ ລາວປະຈຳຈີນ, ເຈົ້າໜ້າທີ່ກະຊວງຄົມມະນາຄົມສ ປປລາວຖ່າຍ
老挝常务副总理宋沙瓦・凌沙瓦（左五）、老挝驻中国大使维吉・辛达翁、交通部官员与《占芭》杂志社记者合影

# ທອນໄຟມົງຄຸນໄດ້ສົ່ງຕໍ່ຢູ່ຢູນນານທີ່ມີຫລາຍສີສັນ

## “祥云”火炬在彩云之南传递

文 / 刘江林

六月的春城繁花似锦，多彩的云南共享荣光，“祥云”火炬现彩云之南。6月9日—11日分别在昆明、丽江、香格里拉进行传递，云南各族人民有幸参与并见证了这一举世瞩目的活动，共享北京奥运会的荣耀，感到无比自豪和荣幸。




ທ່ານສົມສະຫວາດ ເລັ່ງສະຫວັດ ຮອງນາຍົກລັດຖະມົນຕີຜູ້ປະຈຳການລັດຖະບານລາວຮັບເອົາທອນໄຟໂອລິມປິກຈາກມືຂອງທ່ານໄປ່ເອິນເພີຍເລຂາພັກແຂວງຢູນນານເຂົ້າຮ່ວມພິທີການເຄື່ອນໄຫວລິເລີ່ມສົ່ງຕໍ່ທອນໄຟໂອລິມປິກປັກກິ່ງປີ2008ກໍຄືການເຄື່ອນໄຫວສົ່ງຕໍ່ນະຄອນຄຸນມິງ.

老挝人民民主共和国常务副总理宋沙瓦 · 凌沙瓦从云南省省委书记白恩培手中接过火炬，参与北京2008奥林匹克火炬接力云南省暨昆明市传递活动起跑仪式　王 红 图




ທ່ານສິນກວາງຢົງເຈົ້າແຂວງຢູນນານຮັບເອົາທອນໄຟໂອລິມປິກຈາກມືຂອງທ່ານສົມສະຫວາດເລັ່ງສະຫວັດຮອງນາຍົກລັດຖະມົນຕີຜູ້ປະຈຳການລັດຖະບານລາວ.

云南省省长秦光荣从老挝人民民主共和国常务副总理宋沙瓦 · 凌沙瓦手中接过火炬　王 红 图

ເດືອນມິຖຸນາຂອງນະຄອນຄຸນມິງດອກໄມ້ເບັ່ງບານທົ່ວອານາ, ຢູນນານຊຶ່ງມີຖິ່ນຖານມີຫຼາຍສີສັນພວມພ້ອມກັນຮັບຊົມທອນໄຟມົງຄຸນທີ່ມີກຽດຊຶ່ງປະກົດຢູ່ພາກໃຕ້ຂອງດິນແດນທີ່ມີຫລາຍສີສັນແຫ່ງນີ້. ດ້ວຍການສົ່ງຕໍ່ທອນໄຟຕາມເສັ້ນທາງຄຸນມິງ,ຫລີ້ຈ່ຽງ ແລະ ຊຽງເກີ້ລີລາແຕ່ວັນທີ່ 9-11ຂອງເດືອນມິຖຸນາ, ປະຊາຊົນບັນດາເຜົ່າຂອງຢູນນານມີໂຊກດີໄດ້ມີສ່ວນຮ່ວມ ແລະ ເປັນສັກຂີພະຍານໃຫ້ແກ່ການເຄື່ອນໄຫວທີ່ທົ່ວທັງໂລກຈັບຕາມອງ, ພ້ອມກັນຮັບຊົມຢ່າງສົມກຽດຂອງງານມະຫະກຳກິລາໂອລິມປິກປັກກິ່ງ,ມີຄວາມຮູ້ສຶກທະນົງໃຈແລະເປັນກຽດຫາອັນປຽບບໍ່ໄດ້. ຢູນນານເປັນແຂວງຊົນເຜົ່າຢູ່ຊາຍແດນທີ່ພວມກ້າວໄປສູ່ຄວາມມັ່ງ ຄັ່ງສົມບູນ, ປະຊາທິປະໄຕ, ອະລິຍະທຳ, ເປີດປະຕູສູ່ພາຍນອກ ແລະມີຄວາມປອງດອງກົມກຽວກັນ, ພາບພົດອັນສະຫງ່າລາສີ ຂອງໄຟສັກສິດງານມະຫະກຳກິລາໂອລິມປິກຈະປະສົມປະສານສົ່ງແສງຮຸ່ງເຮືອງເຫຼືອງເຫຼື້ອມທີ່ມີສະເໜ່ເຂົ້າກັນກັບຢູນນານນິເວດວິທະຍາ,ຢູນນານເປີດປະຕູສູ່ພາຍນອກ,ຢູນນານວັດທະນະທຳ ແລະ ຢູນນານພັດທະນາ; ນ້ຳໃຈກິລາໂອລິມປິກທີ່ສູງກວ່າ ເກົ່າ, ໄວກວ່າເກົ່າ ແລະ ເຂັ້ມແຂງກວ່າເກົ່ານັ້ນ,ຈະປຸກລະດົມແລະກະຕຸກຊຸກຍູ້ລູກຫຼານຂອງບັນດາເຜົ່າໃນຢູນນານບຸກບືນກ້າວ ຂຶ້ນ, ພະຍາຍາມສູ້ຊົນ,ຊຸກດັນໃຫ້ເສດຖະກິດສັງຄົມຢູນນານໄດ້ພັດທະນາໄປຍິ່ງດີກວ່າເກົ່າ ແລະຍິ່ງໄວກວ່າເກົ່າ.

ໄຟສັກສິດງານມະຫະກຳກິລາໂອລິມປິກປັກກິ່ງຊຶ່ງເປັນສັນຍາລັກແຫ່ງສັນຕິພາບ, ມິດຕະພາບ ແລະ ຄວາມຝັນນັ້ນ, ທ່ານກາງການລໍຄອຍຢ່າງຈົດຈໍ່ ແລະ ກະຕືລືລົ້ນຂອງປະຊາຊົນບັນ

ດາເຜົ່າຂອງຢຸນນານ 45 ລ້ານຄົນໄດ້ມາເຖິງຖິ່ນໃຕ້ຂອງດິນແດນທີ່ມີຫລາຍສີສັນ, ໄດ້ຈຸດໄຟຢູ່ທີ່ສວນນິທັດສະການໂລກຄຸນມິງຂອງ ຢຸນນານ, ສົ່ງຕໍ່ຜ່ານຄຸນມິງຫຼີ້ຈ່ຽງ ແລະ ຕີ້ສິ້ນຊຽງເກີ້ລີລາ 3 ຕົວເມືອງ, ໄລຍະທາງປະມານ 900ກິໂລແມັດ. ມີຜູ້ຮ່ວມຊູທອນໄຟສັກສິດສົ່ງຕໍ່ 624 ທ່ານ.ໃນຈຳນວນຜູ້ຊູທອນໄຟນັ້ນ,ມີ 231 ທ່ານແມ່ນຊົນເຜົ່າສ່ວນໜ້ອຍ,ພວກທ່ານຕ່າງມາຈາກ 20 ກວ່າ ຊົນເຜົ່າສ່ວນຫນ້ອຍເຊັ່ນ: ຊົນເຜົ່າຕີເບດ, ຊົນເຜົ່ານາຊີ, ຊົນເຜົ່າໄປ໋,ຊົນເຜົ່າອີ້ ແລະ ຊົນເຜົ່າອື່ນໆ. ຫົວຂໍ້ຂອງການເຄື່ອນໄຫວສົ່ງທອນໄຟແບບມືຕໍ່ມືໃນຄັ້ງນີ້ແມ່ນ "ຂະບວນການກົມກຽວ ກັນ", ໂດຍເອົານາມບັດຊາວຕົວເມືອງສົ່ງຕໍ່ເປັນສາຍຫຼັກ,ເປີຍການສະແດງຢ່າງລວມສູນເຖິງທ່າແຮງດ້ານຊັບພະຍາກອນ, ທ່າແຮງດ້ານເຂດທີ່ຕັ້ງ ແລະ ທ່າແຮງດ້ານວັດທະນະທຳ ຊົນເຜົ່າທີ່ອຸດົມສົມບູນພິເສດຂອງແຂວງຢຸນນານ, ໃນໄລຍະທາງ ຂອງການສົ່ງຕໍ່ທອນໄຟນັ້ນມວນຊົນເປັນໝື່ນເປັນແສນໄດ້ຊູປ້າຍ ຄຳຂວັນທີ່ມີເນື້ອໃນວ່າ: "ພວກເຮົາເອົາຄວາມຮັກໃຄ່ພ້ອມກັບພີ່ ນ້ອງຜູ້ປະສົບໄພເສສວນບາກບັ່ນຕໍ່ສູ້ຜ່ານຜ່າຄວາມຫຍຸ້ງຍາກກັນດານ" ແລະ ໄດ້ຮ້ອງຄຳຂວັນຂຶ້ນວ່າ: "ປະເທດຈີນສູ້ໆ, ປັກກິ່ງ ສູ້ໆ, ເສສວນສູ້ໆ" ຈິດໃຈກິລາໂອລິມປິກວັດທະນະທຳມະນຸດວິທະຍາອັນໂດດເດັ່ນຂອງຄຸນມິງ, ສະແດງໃຫ້ເຫັນປະຫວັດສາດວັດທະນະທຳອັນອຸດົມສົມບູນແລະໝັກແໜ້ນ;ຫຼີ້ຈ່ຽງໄດ້ສະແດງ ອອກຜົນງານຂອງການສ້າງສາຫຼັງປະສົບໄພແຜ່ນດິນໄຫວອະໜາດໃຫຍ່ຢ່າງໂດດເດັ່ນ,ໄດ້ເປັນການສະຫນັບສະຫນູນການຟື້ນຟູ ສ້າງຄືນໃຫມ່ຕໍ່ເຂດປະສົບໄພແຜ່ນດິນໄຫວຂອງເສສວນດ້ານການກະທຳ; ຊຽງເກີ້ລີລາໄດ້ສະແດງເຖິງຄວາມສາມັກຄີປອງດອງ ຂອງປະຊາຊົນເຂດຊົນເຜົ່າຕີເບດ ແລະ ບັນຍາກາດອ້ອມຂ້າງອັນຈົບງາມຂອງການພັດທະນາຄວາມກົມກຽວກັນຂອງສັງຄົມ.

ເວລາ 12 ໂມງປາຍຕອນທ່ຽງຂອງວັນທີ່ 11, ການເຄື່ອນໄຫວສົ່ງຕໍ່ທອນໄຟງານກິລາໂອລິມປິກດ້ວຍມືຕໍ່ມືໄດ້ສິ້ນສຸດລົງຢ່າງງົດງາມທີ່ສວນສາທາລະນະແຫ່ງຊາດພູຕ໋າສໍ້ເຂດທົ່ວທັດຂອງເມືອງຊຽງເກີ້ລີລາກິ່ງແຂວງປົກຄອງຕົນເອງຊົນເຜົ່າຕີເບດຕີ້ສິ້ນແຂວງຢຸນນານ.



ໃນວັນທີ9ເດືອນ6 ,ບັນດານັກສະແດງສິລປະສະແດງເພື່ອຊ່ວຍເປີດບັນຍາດກາດເບີກບານມ່ວນຊື່ນຕໍ່ທອນໄຟໂອລິມປິກທີ່ສວນດອກໄມ້ໂລກ.
6月9日，演员们在昆明世博园内表演节目，为圣火传递助兴　新华社 图

# ງານມະໂຫລານຂອງມວນມະນຸດກິດຈະກຳໃຫຍ່ໂຕມະໂຫລານຂອງອະລິຍະທຳ

## 人类的盛会　文明的盛举

一个是孕育于古希腊的西方文明，一个是传承五千年的东方文明。2008 年 8 月 8 日，当奥运主火炬在北京点燃时，是两大文明的天际相汇。奥林匹克文明将因吸纳中华文明、东方文明而具有更厚重的文化沉淀，而现代中国则因相拥奥运圣火而具有更浓烈的开放特征，显示了一种源于自信而希望被世界文明所了解、所接受的诚意和底蕴。




ໃນວັນທີ1ກັນຍາປີ2003,ທ່ານລໍເກີປະທານຄະນະກຳມະການໂອລິມປິກສາກົນ(ຊາຍ3)ກັບທ່ານລິວຊີປະທານຄະນະກຳມະການໂອລິມປິກປັກກິ່ງກຳມະການກົມການເມືອງ,ເລຂາພັກນະຄອນປັກກິ່ງ(ຊາຍ2)ແລະຜູ້ອື່ນໆຢູ່ໃນພິທີລິເລີ່ມແຜນການພັດທະນາການຕະຫລາດງານກິລາໂອລິມປິກຄັ້ງທີ29.

2003 年 9 月 1 日，国际奥委会主席罗格（左三）和中共中央政治局委员、北京市委书记、北京奥组委主席刘淇（左二）等在第 29 届奥运会市场开发计划启动仪式上　新华社 图

ອັນໜຶ່ງແມ່ນຈະເລີນເຕີບໂຕມາຈາກອະລິຍະທຳຕາເວັນຕົກຂອງກະເຣັກບູຮານ, ອັນໜຶ່ງແມ່ນການສືບທອດອະລິຍິທຳຕາເວັນອອກທີ່ມີປະຫວັດ 5 ພັນປີ. ວັນທີ່ 8 ສິງຫາປີ 2008 ເມື່ອທອນໄຟຫລັກຂອງງານກິລາໂອລິມປິກໄດ້ໄຕ້ຂື້ນຢູ່ປັກກິ່ງ, ນັ້ນເປັນ ການປະສົມປະສານກັນຂອງ 2 ອະລິຍະທຳໃຫຍ່.ອະລິຍະທຳຂອງ ໂອລິມປິກຍ້ອນວ່າໄດ້ດູດຊຶມເອົາອະລິຍະທຳປະຊາຊາດຈີນ ແລະ ອະລິຍະທຳຕາເວັນອອກ, ແລ້ວກາຍເປັນກ້ອນຕະກອນທາງວັດທະນະທຳອັນໜັກແໜ້ນກວ່າເກົ່າແລະແຕ່ຈີນໃນຍຸກປະຈຸບັນກໍຍ້ອນວ່າໄດ້ມີທອນໄຟສັກສິດເຮັດໃຫ້ລັກສະນະພິເສດຂອງການເປີດປະຕູສູ່ພາຍນອກຍິ່ງເຂັ້ມຂົ້ນ ແລະ ເຂັ້ມແຂງຂຶ້ນກວ່າເກົ່າ, ສະ ແດງເຖິງຄວາມເຊື່ອໝັ້ນທີ່ອອກຈາກຄວາມຈິງໃຈ ແລະ ຕົ້ນສາຍ ປາຍເຫດເພື່ອຢາກໃຫ້ອະລິຍະທຳໂລກເຂົ້າໃຈ ແລະ ຮັບຮອງເອົາ.

ປັກກິ່ງ, ງານມະຫະກຳກິລາໂອລິມປິກປີ 2008 ທີ່ ແມ່ນຈີນເປັນເຈົ້າພາບຈັດຂຶ້ນນັ້ນ,ເປັນງານມະໂຫລານຄັ້ງໜຶ່ງຂອງມວນມະນຸດ ແລະ ເປັນກິດຈະກຳໃຫຍ່ໂຕມະໂຫລານຂອງອະລິຍະທຳຄັ້ງໜຶ່ງ! ອະລິຍະທຳຂອງໂລກຈະຍ້ອນວ່າມີອະລິຍະທຳປະ ຊາຊາດຈີນອັດຊີດເຂົ້າກາຍເປັນຄວາມສວຍສົດງົດງາມປານຂອງໃໝ່, ມີກຳລັງວັງຊາອັນຄຶກຄັກຫ້າວຫັນ. ປະຊາຊົນຈີນແມ່ນ ຜູ້ໃຫ້ກຳເນີດ ແລະ ຜູ້ໄດ້ຮັບຜົນປະໂຫຍດຂອງງານກິລາໂອລິມ ປິກປັກກິ່ງ, ປະຊາຊົນທົ່ວໂລກກໍແມ່ນຜູ້ໃຫ້ກຳເນີດ ແລະ ຜູ້ໄດ້ ຮັບຜົນປະໂຫຍດຂອງງານມະຫະກຳກິລາໂອລິມປິກປັກກິ່ງຄືກັນ.

ວັນທີ່ 8 ສິງຫາປີ 2008, ຢູ່ພາຍໃນ "ຮັງ ນົກ" ສະໜາມກິລາແຫ່ງຊາດທີ່ແມ່ນຊ່າງອອກແບບຂອງຈີນແລະຕາເວັນຕົກພ້ອມກັນອອກແບບນັ້ນ, ຈະໄດ້ສະແດງອອກພິທີເປີດງານມະຫະກຳ ກິລາໂອລິມປິກດ້ວຍຫົວຂໍ້ "ສະຫວັນກັບມືອງຄົນເປັນອັນໜຶ່ງອັນດຽວ" ຊຶ່ງເປັນການສະແດງອອກມະໂນທັດ "ຄວາມກົມກຽວກັນ" ຂອງວັດທະນະທຳທີ່ເປັນມູນເຊື້ອຂອງຈີນ, ແຂກຄົນ 205 ປະເທດ ແລະ ເຂດແຄວ້ນໃນທົ່ວໂລກຈະພ້ອມກັນມາຮັບຊົມເອົາງານສົມໂພດອັນມະໂຫລານແຫ່ງອະລິຍະທຳຄັ້ງໜຶ່ງ,ມາແບ່ງຊົມ "ສາມັກຄີ, ມິດຕະພາບ ແລະ ຄວາມກ້າວໜ້າ", ເຮັດໃຫ້ "ໂລກອັນດຽວກັນ,ຄວາມຝັນອັນດຽວກັນ" ໃຫ້ປະກົດເປັນຈິງ.

ຜ່ານການຝຶກຝົນຫລໍ່ຫລອມເປັນ 100 ກວ່າປີທີ່ຜ່ານມາ,ອຸດົມການໂອລິມປິກ ແລະ ການກິລາໂອລິມປິກໄດ້ລໍ້າໜ້າລະບອບການເມືອງ,ຮູບການຈິດສໍານຶກ,ເຊື້ອຊາດຜິວພັນ ແລະ ຄວາມແຕກຕ່າງກັນຂອງວັດທະນະທໍາ,ສ້າງທັດສະນະຄ່ານິຍົມ "ສັນຕິພາບ,ສາມັກຄີ, ມິດຕະພາບ,ກ້າວໜ້າ ແລະ ຄວາມກົມກຽວກັນ "ຂຶ້ນ, ທຸງ 5 ວົງແຫວນສັນຍາລັກໂອລິມປິກກໍເລີຍກາຍເປັນວົງດຽວກັນຂອງມວນມະນຸດ. ໃນໂລກນີ້ບໍ່ມີເລື່ອງມະໂຫລານອັນໃດຈະຄືງານມະຫະກໍາກິລາໂອລິມປິກເຮັດໃຫ້ມວນມະນຸດທັງປວງຢູ່ໃຕ້ຟ້າສີຄາມອັນດຽວກັນ,ຢູ່ໃຕ້ທຸງຝືນດຽວກັນ,ໄຟສັກສິດທອນດຽວກັນ ແລະ ກົດລະບຽບອັນດຽວກັນຄຽງບ່າຄຽງໄຫລ່ກັນ,ຈັບມືຖືແຂນກັນ,ຕະລຸມບອນປະລອງກໍາລັງເພື່ອຍາດເອົາໄຊຊະນະ,ແຂ່ງຂັນກັນເພື່ອນມິດຕະພາບຄືກັນກັບງານມະຫະກໍາກິລາໂອລິມປິກນີ້.

ງານກິລາໂອລິມປິກເຄີຍຖືກການລົບກວນເປັນຫລາຍຄັ້ງມາແລ້ວຍ້ອນປັດໄຈຕ່າງໆ, ແຕ່ບໍ່ເຄີຍໄດ້ຢຸດຕິບາດກ້າວຂອງການກ້າວເດີນໄປໜ້າ. ອຸດົມການໂອລິມປິກ,ບໍ່ແມ່ນອະລິຍະທໍາແຕ່ພາກພື້ນໜຶ່ງອີກແລ້ວ, ແຕ່ຫາກແມ່ນອະລິຍະທໍາຊະນິດໜຶ່ງຂອງທົ່ວທັງໂລກ. ໂອລິມປິກແມ່ນອະລິຍະທໍາຊະນິດໜຶ່ງ, ແມ່ນການເກາະກັນເປັນຜະລຶກແຫ່ງການດູດຊຶມເອົາສິ່ງຍອດຢ້ຽມອະລິຍະທໍາແຕ່ລະປະເພດຂອງມວນມະນຸດ. ໂອລິມປິກແມ່ນວັດທະນະທໍາຊະນິດໜຶ່ງພຽບພ້ອມໄປດ້ວຍລັກສະນະເປີດກວ້າງ, ລັກສະນະຕອບ ສະໜອງ ແລະ ລັກສະນະຍອມຮັບອັນແຮງກ້າ. ປີ1896,ຄົນຝຣັ່ງທ່ານ Pierre deCoubertin ບິດາແຫ່ງໂອລິມປິກສະໄໝປະຈຸບັນໄດ້ ຮຽກຮ້ອງສ້າງຕັ້ງງານກິລາໂອລິມປິກຂຶ້ນ.

ໃນງານກິລາໂອລິມປິກລອນດອນປີ 1908ໄດ້ມີຄໍາເວົ້າອັນລືຊື່ທີ່ຄົນເວົ້າບໍ່ເຫືອດບໍ່ຂາດອອກມາຄື: "ສໍາຄັນນັ້ນບໍ່ແມ່ນຍາດເອົາໄຊຊະນະແຕ່ຫາກແມ່ນການມີສ່ວນຮ່ວມ" ສະພາຄະນະກໍາມະການໂອລິມປິກອັງກິດຊຶ່ງເປັນເຈົ້າພາບຈັດງານກິລາໂອລິມປິກສະໄໝດັ່ງກ່າວຊຶ່ງປະກອບຂຶ້ນດ້ວຍຄະນະກໍາມະການໂອລິມປິກປະເທດອັງກິດໃນຄະນະກໍາມະການໂອລິມປິກສາກົນແລະ




ວັນທີ8ເດືອນ8ປີ2007,ນັກຮ້ອງ100ຄົນຮ້ອງເພງລວມໝູ່ທີ່ວ່າ《ພວກເຮົາກຽມພ້ອມລຽບຮອຍດີແລ້ວ》ໃນການເຄື່ອນໄຫວສະເຫຼີມສະຫຼອງງານກິລາໂອລິມປິກນັບເວລາຕ່າວຄືນຄອບຮອບ1ປີທີ່ສະໜາມຫຼວງທຽນອານເໝິງ.

2007 年 8 月 8 日，在天安门广场举行的北京奥运会倒计时一周年庆祝活动上，百名歌手一起演唱《我们准备好了》 新华社 图

ຜູ້ແທນສະມາຄົມກິລາແຕ່ລະລາຍການສະເພາະຂອງອົງກິດຈັດຕັ້ງຂຶ້ນ. ໂຄງປະກອບບຸກຄະລາກອນແບບນີ້ໄດ້ເປັນການສະໜອງແບບຢ່າງຂອງການປະກອບຄະນະກຳມະການໂອລິມປິກອື່ນໆ, ໄດ້ເປັນການກຳນົດແນ່ນອນຂອບພື້ນຖານລະບົບການຈັດຕັ້ງຂອງໂອລິມປິກ.

ຕໍ່ຈາກນັ້ນມາ 12 ປີໄດ້ມີຄະຕິພົດໂອລິມປິກທີ່ວ່າ: " ຍິ່ງໄວກວ່າເກົ່າ, ລະດັບຍິ່ງສູງກວ່າເກົ່າ ແລະ ຍິ່ງເຂັ້ມແຂງກວ່າເກົ່າ " ອອກມາ,ມັນເປັນການສືບເນື່ອງອັນສຳຄັນຂອງແນວຄິດໂອລິມ ປິກ, ມັນໄດ້ເປັນການເພີ່ມເຕີມຊຶ່ງກັນ ແລະ ກັນ ແລະສຳເລັດນຳ ກັນຂອງຈິດໃຈ "ສຳຄັນຢູ່ທີ່ມີສ່ວນຮ່ວມ",ປຸກລະດົມສິ່ງເສີມຄົນ ທັງຫລາຍໃຊ້ຈິດໃຈບຸກບືນຢ່າງຕັ້ງໜ້າມາເຂົ້າຮ່ວມງານກິລາໂອລິມປິກ.

ຕໍ່ຈາກນັ້ນມາ,ງານກິລາໂອລິມປິກລະດູໜາວໄດ້ກຳເນີດເກີດຂຶ້ນ, ລາຍການຂອງເພດຍິງກໍໄດ້ອອກໂຮງຂຶ້ນເວທີ, ທຸງ 5ວົງແຫວນໂອລິມປິກໄດ້ປະກົດຕົວອອກມາ, ການປ່ອຍນົກສັນຕິພາບ ແລະ ຄຳປະຕິຍານຂອງນັກກິລາໃນພິທີເປີດງານແຂ່ງຂັນ, ການສົ່ງຕໍ່ໄຟສັກສິດກໍໄດ້ປະກົດອອກຢູ່ໃນໂລກນີ້... ໂຄງຮ່າງຂອງງານກິລາໂອລິມປິກສະໄໝປະຈຸບັນນັບມື້ນັບຄົບຖ້ວນບໍລິບູນ ແລະ ເປັນແບບແຜນ.

ງານມະຫະກຳກິລາໂອລິມປິກປັກກິ່ງໄດ້ມີຄຳຂວັນ "ໂລກອັນດຽວກັນ, ຄວາມຝັນອັນດຽວກັນ" ກຳເນີດເກີດຂຶ້ນ, ນີ້ເປັນການປະກອບສ່ວນຕໍ່ອະລິຍະທຳຂອງໂລກ,ຕໍ່ງານແຂ່ງຂັນກິລາ



ວັນທີ23ເດືອນ6ປີ2007,ຄະນະກຳມະການຈັດຕັ້ງງານໂອລິມປິກປັກກິ່ງປະກາດ《ແຜນການຄັດເລືອກນັກທອນໄຟສົ່ງຕໍ່ງານກິລາໂອລິມປິກປັກກິ່ງປີ2008》ເປັນສັນຍາລັກການລິເລີ່ມຄັດເລືອກນັກທອນໄຟເປັນທາງການ.
2007 年 6 月 23 日，北京奥组委公布了《北京 2008 年奥运会火炬接力火炬手选拔计划》，标志着奥运火炬手选拔正式启动　新华社 图




ວັນທີ24ເດືອນ12ປີ2003,ສະໜາມກິລາແຫ່ງຊາດແລະສູນລອຍນ້ຳແຫ່ງຊາດສ ປຈີນວາງສີລະລຶກລົງມືກໍ່ສ້າງ,ໄດ້ເປີດສາກການກໍ່ສ້າງສະໜາມແລະຫໍກິລາງານໂອລິມປິກປັກກິ່ງປີ 2008.
2003 年 12 月 24 日，中国国家体育场和国家游泳中心开工奠基，从而拉开了 2008 年北京奥运会体育场馆建设的序幕　新华社 图




ໃນວັນທີ5ເດືອນ6ປີ2005,ປະກາດເລກໝາຍຂອງຜູ້ອາສາສະໝັກງານກິລາໂອລິມປິກປັກກິ່ງ.
2005 年 6 月 5 日，北京奥运会志愿者标志发布　新华社 图

ໂອລິມປິກຂອງອະລິຍະທຳປະຊາຊາດຈີນ. ທ່ານ ແດນເຜັດເຊີ ຜູ້ຮັບຜິດຊອບໂຄງການສົ່ງຕໍ່ທອນໄຟແບບມືຕໍ່ມືຂອງງານກິລາໂອລິມປິກATHENS ກໍເຫັນວ່າ,ຫົວຂໍ້ນີ້ບໍ່ໄດ້ເນັ້ນໜັກແຕ່ຈີນໂດຍສະເພາະ, ແຕ່ຫາກແມ່ນເປັນການສະແດງອອກມະໂນພາບແຫ່ງການເຊື່ອມເຂົ້າກັນຂອງໂລກ.

ງານກິລາໂອລິມປິກບໍ່ວ່າສະໄໝໃດກໍລ້ວນແຕ່ມີການປະດິດສ້າງຂຶ້ນໃໝ່ ແລະ ມີການພັດທະນາ. ມະໂນທັດທີ່ກ້າວໜ້າແລະເຕັກນິກທີ່ທັນສະໄໝສ່ວນໜຶ່ງອອກມາ,ໝາກຜົນອະລິຍະທຳປະເພດຕ່າງໆໄດ້ຖືກຮັບເອົາຈາກງານກິລາໂອລິມປິກຢ່າງບໍ່ເຫືອດບໍ່ຂາດ, ແລະ ທັງໄດ້ກ້າວອອກຈາກປະຕູຂອງປະເທດທີ່ເປັນ ເຈົ້າພາບຈັດງານ, ເດີນໄປສູ່ໂລກ. ພັກກາດດອງ ແລະແບບຟ້ອນຂອງ ສ.ເກົາຫລີ ໄດ້ຜ່ານງານກິລາໂອລິມປິກເຊອູນກ້າວໄປສູ່ໂລກ; Barcelona ໂດຍແມ່ນຜ່ານງານກິລາໂອລິມປິກ

ກາຍເປັນຕົວເມືອງທ່ອງທ່ຽວທີ່ມີຊື່ສຽງຂອງໂລກ...

ປີ 2001ພາຍຫລັງປັກກິ່ງສະເຫນີຂໍເປັນເຈົ້າພາບຈັດງານກິລາໂອລິມປິກສຳເລັດແລ້ວ, ທ່ານລິວຊີເຈົ້າຄອງກຳແພງນະຄອນປັກກິ່ງສະໄຫມນັ້ນ, ເວລາໃຫ້ສຳພາດຕໍ່ນັກສືຂ່າວກໍສະແດງວ່າ: "ຈັດງານກິລາໂອລິມປິກຢູ່ປັກກິ່ງ, ສາມາດເຮັດໃຫ້ຈີນແລະປະເທດອື່ນໆດຳເນີນການແລກປ່ຽນວັດທະນະທຳແລະແລກປ່ຽນຕະຫລາດທີ່ບໍ່ເຄີຍມີມາໃນເມື່ອກ່ອນ".

ຄວາມຈິງແລ້ວນີ້ກໍເປັນໂອກາດດີທີ່ສຸດໃຫ້ໂລກມາເຂົ້າໃຈກັບວັດທະນະທຳຈີນເຊັ່ນ: ດົນຕີຊົນເຜົ່າ, ງິ້ວ ແລະ ດົນຕີ,ການກິນດື່ມ, ສະຖາປັດຕະຍະກຳ ແລະ ການວາດພາບຂອງຈີນ... ຈະສະແດງໃຫ້ຊາວໂລກເຫັນດ້ວຍຫລາຍແງ່ມຸມ, ຫຼາຍຊັ້ນລະດັບ ແລະ ຫລາຍດ້ານ.

ງານມະຫະກຳກິລາໂອລິມປິກປັກກິ່ງໄດ້ຖອດຖອນບົດຮຽນທີ່ສຳເລັດຜົນຂອງຕົວເມືອງເຄີຍໄດ້ຈັດງານກິລາໂອລິມປິກປັກກິ່ງໃນເມື່ອກ່ອນ, ໄດ້ສະເຫນີອອກມະໂນທັດ "ງານກິລາໂອລິມປິກວັດທະນະທຳມະນຸດວິທະຍາ".ບັນດາທ່ານທີ່ມີສ່ວນກ່ຽວຂ້ອງໄດ້ເອົາເນື້ອຫາສ່ວນລັບຂອງມັນນິຍາມເປັນ:ງານມະໂຫລານແຫ່ງການແລກປ່ຽນຢ່າງກ້ວາງຂວາງລະຫວ່າງວັດທະນະທຳຕາເວັນອອກກັບຕາເວັນຕົກ ແລະ ການເຊື່ອມເຂົ້າກັນເປັນແອ່ນແຍງຊຶ່ງກັນແລະກັນ, ເປັນງານມະໂຫລານຂອງຈິດໃຈໂອລິມປິກ, ວັດທະນະທຳໂອລິມປິກກັບອະລິຍະທຳປະຊາຊາດຈີນຕ່າງເພີ່ມພູນໃຫ້ ອຸດົມສົມບູນຊຶ່ງກັນແລະກັນ ແລະ ພັດທະນາຊຶ່ງກັນແລະກັນ, ເປັນ ງານມະໂຫລານຂອງແນວຄິດວັດທະນະທຳມະນຸດວິທະຍາລະຫວ່າງ ຕາເວັນອອກກັບຕາເວັນຕົກ ແລະ ຈິດໃຈກົມກຽວກັນໃນຂົງເຂດ ກິລາ ແລະ ການດຳລົງຊີວິດຂອງມວນມະນຸດທັງຫມົດໄດ້ຖືກຜັນຂະຫຍາຍຢ່າງເຕັມທີ່.

ປັກກິ່ງຍິນດີຕ້ອນຮັບທ່ານ! ນີ້ເປັນຫົວຂໍ້ຂອງ100 ວັນຄິດໄລ່ເວລາຖອຍຫລັງຂອງງານມະຫະກຳກິລາໂອລິມປິກປັກກິ່ງ, ນີ້ເປັນ ຄຳເຊື້ອເຊີນດ້ວຍຄວາມຈິງໃຈທີ່ສຸດຕໍ່ທົ່ວໂລກຂອງຈີນຍຸກປະຈຸບັນ, ແລະ ຍິ່ງເປັນຄຳອະທິບາຍດີທີ່ສຸດຂອງການເຊື່ອມເຂົ້າກັນຂອງອະລິຍະທຳຕາເວັນອອກກັບຕາເວັນຕົກຂອງຕົ້ນສະຕະວັດທີ 21.




ວັນທີ3ເດືອນ8ປີ2003,ຈັດພິທີປະກາດກາງານກິລາໂອລິມປິກຄັ້ງທີ25 《ກາຈໍ້າຈີນ-ປັກກິ່ງທີ່ເຕັ້ນຟ້ອນ》 ທີ່ຫໍອີປຽນຕຽນທຽນຖານປັກກິ່ງ.
2003 年 8 月 3 日，第 29 届奥运会会徽“中国印舞动的北京”发布仪式在北京天坛祈年殿举行　新华社 图




ດອກຈຳປາແບ້ງບານເພື່ອຕ້ອນຮັບແມກິລາໂອລິມປິກ

占芭花开迎奥运

## 北京与全世界一起冲刺

奥运村住宿服务团队的 2700 名酒店工作人员和近 5000 名高校志愿者全部到位；顺义奥林匹克水上公园场馆的各方面工作进一步细化；第一批来自美国爱荷华大学的海外志愿者抵京；全球选手积极备战奥运瞄准北京；历史上最大的中国奥运军团呼之欲出……在奥运会即将开幕之际，北京的市民说："未来的每一天都值得庆祝"。他们向全世界热爱奥林匹克运动的人们发出了最真挚的邀请。

# ປັກກິ່ງກັບທົ່ວທັງໂ

ທີມງານບໍລິການບ່ອນຢູ່ອາໄສໝູ່ບ້ານງານມະຫະກຳກິລາໂອລິມປິກຊຶ່ງປະກອບດ້ວຍພະນັກງານເຮັດວຽກຢູ່ໂຮງແຮມ 2.700ຄົນ ແລະ ຜູ້ອາສາສະໝັກສະຖາບັນການສຶກສາຊັ້ນສູງ 5000ຄົນນັ້ນໄດ້ເຂົ້າປະຈຳໜ້າທີ່ທັງໝົດແລ້ວ; ວຽກງານດ້ານຕ່າງໆຂອງສະໜາມ ແລະ ຫໍຂອງສວນສາທາລະນະໜ້ານ້ຳໂອລິມປິກທີ່ສຸ້ນອີໄດ້ທັນເຂົ້າສູ່ເຮັດເປັນແບບລະອຽກອີກຕື່ມກ້າວໜຶ່ງ; ຜູ້ອາສາສະໝັກຊາວຕ່າງປະເທດທີ່ມາຈາກມະຫາວິທະຍາໄລIowa ຂອງອາເມລິກາຊຸດທຳອິດກໍຈະມາເຖິງປັກກິ່ງທ້າຍອາທິດນີ້,ນັກກິລາທີ່ໄດ້ຮັບການຄັດເລືອກຢູ່ທົ່ວໂລກທີ່ພວມຕັ້ງໜ້າກຽມເຂົ້າສູ່ສະໜາມສູ້ຮົບງານກິລາໂອລິມປິກກໍພາກັນແນເປົ້າໃສ່ປັກກິ່ງ; ກອງກຳລັງກິລາໂອລິມປິກທີ່ໃຫຍ່ທີ່ສຸດໃນປະຫວັດສາດຂອງຈີນຮຽກປຶບກໍມາປັບ...ໃນຂະນະງານມະຫະກຳກິລາໂອລິມປິກຈະເປີດສາກນັ້ນ,ຊາວເມືອງຂອງປັກກິ່ງໄດ້ເວົ້າວ່າ: "ມື້ຕໍ່ ໄປແຕ່ລະວັນລ້ວນແຕ່ມີຄຸນຄ່າຂອງການສະເຫຼີມສະຫຼອງ",ພວກເຂົາເຈົ້າໄດ້ເຊື້ອເຊີນຜູ້ຄົນທີ່ຮັກຫອມງານກິລາໂອລິມປິກທົ່ວ ທັງໂລກດ້ວຍຄວາມບໍລິສຸດໃຈ.

ໝູ່ບ້ານງານກິລາໂອລິມປິກ: ການກໍ່ສ້າງ "ເຮືອນ"ທີ່ສຸກສະບາຍ, ປອດໄພແລະ ສະອາດຮຽບຮ້ອຍ

ໃນໄລຍະງານກິລາໂອລິມປິກນັ້ນໝູ່ບ້ານງານກິລາໂອລິມປິກຈະຕ້ອນຮັບຄະນະນັກກິລາ ແລະ ເຈົ້າໜ້າທີ່ຕິດຕາມມານຳ



ຕ້ອນຮັບມື້ທີ5 0ນັບເວລາຕ່າວຄືນທີ່ເປີດງານກິລາໂອລິມປິກຢ່າງເບີກບານມ່ວນຊື່ນ
喜迎奥运倒计时 50 天

# ລກພ້ອມກັນຕະລຸມບອນບາເດສຸດທ້າຍ

ຄະນະ 16.000 ຄົນຈາກ 205 ປະເທດ ແລະ ເຂດແຄ້ວນ, ບຸກຄະລາກອນສື່ມວນຊົນ 7.000 ກວ່າຄົນ ແລະເຈົ້າໜ້າທີ່ເຫລືອການຈັດສັນ 800 ຄົນ,ຈຳນວນຄົນຂອງຮັບຕ້ອນໄລ່ເປັນວັນໃນການໝູ່ບ້ານນັກກິລາຄາດກັນວ່າສູງສຸດຈະບັນລຸເຖິງ 12.000 ຄົນ...ຈຳນວນຮັບຕ້ອນທີ່ໃຫຍ່ໂຕມະໂຫລານຄືແນວນີ້, ເຮັດໃຫ້ ໝູ່ບ້ານງານກິລາໂອລິມປິກປັກກິ່ງທີ່ກິນເນື້ອທີ່ 660.000 ຕາ ແມັດນັ້ນໄດ້ກາຍເປັນຄວາມຮຽກຮ້ອງຕ້ອງການຕໍ່ການບໍລິການສູງທີ່ສຸດ, ພ້ອມກັນນັ້ນກໍແມ່ນທຳ ແລະ ສະໜາມບໍ່ໃຊ້ເປັນບ່ອນແຂ່ງ ຂັນກິລາທີ່ມີລະດັບຄວາມຍາກຂອງການບໍລິການກວ່າເພິ່ນ.

ທ່ານຢູຍເຕີ້ປິ່ນຮອງຫົວໜ້າຂະແໜງການໝູ່ບ້ານງານກິລາໂອລິມປິກທີ່ພວມເຮັດວຽກຢ່າງຂຸ້ນຂ້ຽວຢູ່ພາຍໃນໝູ່ບ້ານງານກິລາໂອລິມປິກໄດ້ເວົ້າວ່າ: "ທີມງານບໍລິການບ່ອນຢູ່ອາໄສໝູ່ບ້ານກິລາໂອລິມປິກ,ໝູ່ບ້ານກິລາໂອລິມປິກຜູ້ຜິການຈະຮັບພາລະການບໍລິການໝູ່ບ້ານນັກກິລາແຫ່ງໜຶ່ງ, ໝູ່ບ້ານສື່ມວນຊົນ 2 ແຫ່ງ; ໝູ່ບ້ານສື່ມວນຊົນເຮືອນໃນສວນສີຂຽວ, ໝູ່ບ້ານ ສື່ມວນຊົນຮູ້ຍຢວນກົ່ງຢູ້ເປັນຕົ້ນລວມມີຕຶກອາຄານຂອງທຳພັກ 64 ຕຶກ,ທຳພັກລວມທັງໝົດ 6.204ຊຸດ, ຫ້ອງນອນ 17.470 ຫ້ອງ. ອີງຕາມການຄິດໄລ່ຂໍ້ມູນຈຳນວນສະເລ່ຍຂອງຫ້ອງນອນໃນໂຮງແຮມທົ່ວທັງນະຄອນປັກກິ່ງແລ້ວຂະໜາດ

ຂອງການຄຸ້ມຄອງຄືທີ່ໄດ້ກ່າວມານີ້ຈະເທົ່າກັບຫ້ອງຊຸດ 108 ໂຮງແຮມ".ປະຈຸບັນ ທີມງານບໍລິການບ່ອນພັດອາໄສທີ່ປະກອບດ້ວຍພະນັກງານປະຕິບັດ ງານຢູ່ໂຮງແຮມ 2.700 ຄົນ ແລະ ຜູ້ອາສາສະໝັກທີ່ມາຈາກ ສະຖາບັນການສຶກສາຊັ້ນສູງເກືອບ 5.000 ຄົນໄດ້ເຂົ້າປະຈຳທີ່ທັງ ໝົດແລ້ວ. ໃນໄລຍະໃກ້ໆນີ້, ຜູ້ປະຕິບັດງານກ່ຽວກັບວັດຖຸສິ່ງຂອງ ເພື່ອໃຊ້ໃນລາຍການສະເພາະ, ວັດຖຸສິ່ງຂອງເພື່ອໃຊ້ທົ່ວໄປ, ວັດ ຖຸສິ່ງຂອງດ້ານເຕັກນິກທີ່ມີຈຳນວນຫລວງຫລາຍເຖິງ 455 ຊະນິດ ເກືອບ 20 ລ້ານພັນຊິ້ນໄດ້ຈັດການຍ້າຍເຂົ້າ, ຕິດຕັ້ງ ແລະ ທຳການໝູນໃຊທົດລອງຕໍ່ອຸປະກອນຢູ່ພາຍໃນຕຶກອາຄານ. ວັນທີ 3 ກໍລະກົດນີ້ ໝູ່ບ້ານນັກກິລາຈະຮັບເອົາການທົດລອງວັດແທກເຕັມອັດຕາຂອງການບັນຈຸຢ່າງຮອບດ້ານ, ທຳການກວດກາວັດແທກຕໍ່ນ້ຳປະປາ, ໄຟຟ້າ, ທໍ່ລະບາຍນ້ຳຢູ່ເທິງໜ້າດິນ ແລະ ໃຕ້ດິນຂອງ ພາຍໃນຕຶກອາຄານ, ເພື່ອຮັບປະກັນຢ່າງແນ່ວແນ່ຕໍ່ໂຄງສ້າງແຕ່ລະລາຍການດຳເນີນງານໄດ້ຢ່າງປອດໄພບໍ່ມີການພາດພັ້ງຢ່າງເດັດຂາດ.

ສະນັ້ນ, ທີມງານບ່ອນພັກອາໄສຂອງໝູ່ບ້ານງານກິລາໂອລິມປິກ ແລະ ໝູ່ບ້ານງານກິລາໂອລິມປິກຜູ້ພິການຂອງງານກິລາໂອລິມປິກປັກກິ່ງໄດ້ຖອດຖອນບົດຮຽນເອົາບ່ອນສຳເລັດຜົນ ຂອງງານກິລາໂອລິມປິກໃນແຕ່ລະຄັ້ງທີ່ຜ່ານມາຢ່າງເຕັມທີ່ພ້ອມ ທັງທ່າມກາງການບໍລິການນັ້ນໄດ້ສະແດງອອກສີສັນພິເສດຂອງຈີນຢ່າງເຕັມທີ່. ບັດຕ້ອນຮັບຊົມເຊີຍ,ບັດອວຍພອນວັນເກີດ,ບັດຕິດຕໍ່ພົວພັນ, ການບໍລິການແປພາສາດ້ວຍຫຼາຍພາສາ...ໃນໄລ ຍະງານກິລາໂອລິມປິກນັ້ນ, ຄົນທັງຫລາຍຈະໄດ້ເຫັນຈຸດປະກາຍ ໃໝ່ຂອງການບໍລິການແບບຫລາຍບຸກຄະລິກຢູ່ພາຍໃນໝູ່ບ້ານ ງານກິລາໂອລິມປິກ.ພະນັກງານປະຕິບັດງານທັງໝົດຂອງໝູ່ ບ້ານງານກິລໂອລິມປິກພວມສ້າງ"ເຮືອນ" ໃຫ້ແກ່ນັກກິລາທີ່ເຂົ້າ ຮ່ວມການແຂ່ງຂັນແລະ ນັກສື່ຂ່າວສື່ມວນຊົນ 20.000 ກວ່າຄົນ ຢ່າງສະດວກ,ສຸກສະບາຍ, ປອດໄພ ແລະ ສະອາດຮຽບຮ້ອຍ.

ຫົວຂໍ້ສະໜາມ ແລະ ທ່າ: ການຕະລຸມບອນເທື່ອສຸດທ້າຍ



ບັນດານັກຮຽນນັກສຶກສາໄດ້ຮັບວົງຍິ້ມແຍ້ມຕ້ອນຮັບງານກິລາໂອລິມປິກ
学生们领到了迎奥微笑圈 CFP 图

ກ່ອນການແຂ່ງຂັນເພື່ອສະແຫວງຫາຜົນໄດ້ຮັບທີ່ດີທີ່ສຸດ.

ເວລາຫ່າງໄກຈາກວັນເປີດສາກງານມະຫະກຳກິລາໂອລິມປິກນັບມື້ນັບໃກ້ເຂົ້າແລ້ວ, ປະຈຸບັນ, ທີມງານສະໜາມ ແລະ ທ່າສວນສາທາລະນະໜ້ານ້ຳໂອລິມປິກສຸ້ນອີ້ທີ່ຮັບຜາລະບໍລິການງານແຂ່ງຂັນການແຂ່ງເຮືອ ແລະ ແຂ່ງຂັນkayakຂອງງານກິລາໂອລິມປິກປັກກິ່ງນັ້ນພວມວຽກງານຕະລຸມບອນເທື່ອສຸດທ້າຍໃຫ້ແກ່ເວລາການແຂ່ງຂັນຂອງງານກິລາໂອລິມປິກ.ທີມງານໄດ້ ແນໃສ່ອຸປະກອນໂຄງລ່າງ hard ware, ການຝຶກອົບຮົມອາສາສະໝັກ, ການເຜີຍແຜ່ຄວາມຮູ້ຢ່າງທົ່ວເຖິງກ່ຽວກັບກິລາງານ ໂອລິມປິກຜູ້ພິການ ແລະ ອື່ນໆເພື່ອດຳເນີນວຽກງານກວດກາບ່ອນ ທີ່ອາດຫລົງລືມ ແລະ ຢ່ຽວຢາວຽກທີ່ຍັງຄົງຄ້າງໃນຂັ້ນຕອນສຸດ ທ້າຍ. ໃນນັ້ນທີມງານສະໜາມ ແລະ ທ່າໄດ້ຈັດຄະນະຊ່ຽວຊານບັນລະຍາຍຕໍ່ຜູ້ອາສາສະໝັກສຳລັບງານແຂ່ງຂັນ 950 ຄົນ ແລະ ກ່ອນການແຂ່ງຂັນໄດ້ຝຶກການອົບຮົມແບບເພີ່ມຄວາມໜັກຕື່ມ, ພ້ອມທັງໄດ້ດຳເນີນການສອບເສັງແບບວົງປິດຕໍ່ຜູ້ອາສາສະໝັກ, ຄະແນນໄດ້ຕາມຄາດໝາຍ100%.

ທ່າກິລາມະຫາວິທະຍາໄລວິສະວະກຳສາດປັກກິ່ງຮັບຜາລະການແຂ່ງຂັນດອກປີກໄກ່ ແລະ ກິລາກາຍຍະກຳສີລະປະຂອງງານມະຫະກຳກິລາໂອລິມປິກປັກກິ່ງ.ຍ້ອນວ່າການຈັດຕັ້ງຂອງກິລາລາຍການສະເພາະສາກົນມີຄວາມຮຽກຮ້ອງຕ້ອງການເຄັ່ງຄັດທີ່ສຸດຕໍ່ຄວາມໄວຂອງລົມພັດ ແລະ ອຸນນະຫະພູມຂອງການແຂ່ງຂັນ, ທີມງານສະໜາມ ແລະ ທ່າໄດ້ທຸ່ມເທກຳລັງໃສ່ເພື່ອ

ຄວບຄຸມອາກາດ. ອີງຕາມຄວາມຮຽກຮ້ອງຕ້ອງການຂອງການແຂ່ງຂັນງານແຂ່ງຂັນດອກປີກໄກ່ແລະການແຂ່ງຂັນສາຍໂບວຂອງງານແຂ່ງຂັນກາຍຍະກໍາສີລະປະຮຽກຮ້ອງໃຫ້ລະດັບຄວາມໄວຂອງລົມຢູ່ໃນຫ້ອງບໍ່ໃຫ້ເກີນກວ່າ໐,2ແມັດຕໍ່ວິນາທີ, ແຕ່ໃນຂະນະດຽວກັນນັ້ນ, ຍັງຕ້ອງຄໍານຶງເຖິງລະດັບຄວາມສະບາຍຂອງຜູ້ຊົມການແຂ່ງຂັນ, ອຸນນະຫະພູມຂອງທົ່ວສະໜາມຊໍ້າບໍ່ໃຫ້ສູງກວ່າ 26 ອົງສາເຊ, ພ້ອມກັນນັ້ນຍັງໄດ້ຄໍານຶງເຖິງການປະຫຍັດພະລັງງານ ແລະ ບັນຫາດ້ານຄວາມອະນາໄມສະພາບແວດລ້ອມ ສາທາລະນະອີກດ້ວຍ. ນັບແຕ່ທ້າຍປີທີ່ແລ້ວ, ໄດ້ຈັດໃຫ້ມີການແຂ່ງຂັນກິລາ "ປັກກິ່ງໂຊກດີ" ເປັນຕົ້ນມາ, ພວກເຂົາເຈົ້າໄດ້ທໍາການຝຶກຫັດສະແດງທີ່ມີລັກສະນະເຈາະຈິ່ງເປັນຫລາຍຄັ້ງມາແລ້ວ, ໄດ້ຊອກພົບແຜນງານແກ້ໄຂທີ່ດີທີ່ສຸດອອກມາແລ້ວ, ນັ້ນກໍຄືກ່ອນການແຂ່ງຂັນ 2ຊົ່ວໂມງໃຊ້ລົມຂະໜາດແຮງພັດໃສ່ເພື່ອຫລຸດຜ່ອນອຸນນະຫະພູມ, ເວລາພວມແຂ່ງຂັນໃຊ້ລົມອ່ອນມາຜ່ອນຄວາມ ຮ້ອນທີ່ເກີດຈາກຮ່າງກາຍຂອງຄົນແລະແຫລ່ງທີ່ມາຂອງແສງ ສະຫວ່າງ, ໄດ້ຮັບໝາກຜົນດີສົມຄວນ. ໝູ່ສະໜາມ ແລະ ທໍາເຂດເໜືອຂອງສວນສາທາລະນະໂອລິມປິກຮັບພາລະການແຂ່ງ ຂັນ 3 ລາຍການຄື: ການຍິງທະນູ, ເທັນນິດ ແລະ ກິລາຮ້ອກກີ້ ເວລາແຂ່ງຂັນ3ລາຍການດັ່ງກ່າວຂອງງານກິລາໂອລິມປິກຈະດໍາເນີນໄປໃນຈັງຫວະດຽວກັນໃນ 6 ວັນ. ແຕ່ການ ຈັດວາງບຸກຄະລາກອນຂອງທີມງານທີ່ດໍາເນີນງານຂອງ 3 ລາຍ ການກິລາດັ່ງກ່າວຊໍ້າບໍ່ຄືຕາມການນຶກຄິດແບບ 1×3 ມີບາງຄົນ ປະຕິບັດບາງກິດຈະການນັ້ນຕ້ອງຮັບພາລະວຽກງານທີ່ມີສ່ວນກ່ຽວ ຂ້ອງການແຂ່ງຂັນ 3 ລາຍການພ້ອມກັນໃນເວລາດຽວກັນ, ດັ່ງ ນັ້ນກ່ອນມີການແຂ່ງຂັນມັນຕ້ອງຜ່ານແຜນການອັນລະອຽດຖີ່ຖ້ວນ ແລະພາກປະຕິບັດເຮັດໃຫ້ເຂົ້າກັນຢ່າງເໝາະເຈາະຊໍ້າແລ້ວຊໍ້າ ອີກເສຍກ່ອນ. ການຝຶກຊ້ອມເທື່ອໃດລ້ວນແຕ່ໄດ້ຖອດຖອນບົດຮຽນ ເຫັນໄດ້ບັນຫາທີ່ຍັງຄົງຄ້າງ ແລະ ເປົ້າໝາຍທີ່ໄດ້ຕິດຕາມ ແລະ ໄດ້ແກ້ໄຂໄປຕາມແຕ່ລະລາຍທ່າມກາງການຝຶກຊ້ອມໃນຄັ້ງຕໍ່ມາ.



ທີມບານເຕະເພດຍິງຈີນກຽມພ້ອມສູ້ຮົບເພື່ອຕ້ອນຮັບງານກິລາໂອລິມປິກ
中国女足在沈阳备战奥运　新华社 图

ບັນຫາດັ່ງກ່າວຜ່ານການຝຶກຊ້ອມຊ້ຳແລ້ວຊ້ຳອີກໄດ້ດັດແປງໃຫ້ດີ ຂຶ້ນ, ດ້ວຍການສະແຫວງຫາແຜນແມ່ບົດອັນດີທີ່ສຸດເປັນຫລາຍໆຄັ້ງ, ເພື່ອໃຫ້ການແຂ່ງຂັນງານກິລາໂອລິມປິກບັນລຸຜົນດີທີ່ສຸດ.

ຜູ້ອາສາສະຫມັກ: "ທີມອາສາສະຫມັກຕ່າງປະເທດ" ຊຸດທຳອິດມາເຖິງປັກກິ່ງ

ທ່ານນາງຫວາງນາຜູ້ຈັດການທີມງານອາສາສະຫມັກເດີ່ນບິນນະຄອນຫລວງໄດ້ເວົ້າຢ່າງທະນົງກຽດວ່າ: "ຮອຍຍິ້ມຂອງພວກເຮົາແມ່ນຮອຍຍິ້ມທຳອິດຂອງການຕ້ອນຮັບແຂກງານກິລາໂອລິມປິກ". ເວລາເປີດງານແຂ່ງຂັນກິລາໂອລິມປິກນັ້ນ, ແຂກຄົນຢູ່ທຸກ ທີ່ນທຸກແຫ່ງມາແຕ່ໄກແສນໄກພາກັນມາປັກກິ່ງພໍລົງຈາກເຄື່ອງບິນກໍເຫັນອາສາສະຫມັກມາຕ້ອນຮັບໂລດ,ດັ່ງນັ້ນອາສາສະຫມັກທີ່ສະຫນາມບິນຕ້ອງໄດ້ຍົກສູງຄຸນທາດ, ປັບປຸງວາດຊົງອີກຕື່ມ ກ້າວຫນຶ່ງໃນ 50 ວັນສຸດທ້າຍ, ເຮັດໃຫ້ຮອຍຍິ້ມເທື່ອທຳອິດຍິ່ງສວຍງາມສະແດງທ່ວງທ່າອັນສະຫງ່າຜ່າເຜີຍຂອງໄວລຸ້ນຜູ້ອາສາສະຫມັກອອກມາຕໍ່ຊາວໂລກ.

ວັນທີ່ 1 ກໍລະກົດອາສາສະຫມັກງານມະຫະກຳກິລາໂອລິມປິກ 2200 ຄົນຂອງທີມງານນະຄອນຫລວງໄດ້ເລີ່ມໃຫ້ການບໍລິການຕໍ່ງານແຂ່ງຂັນກິລາຢ່າງຂຸ້ນຂ້ຽວ,ຈົນຮອດງານແຂ່ງຂັນກິລາໂອລິມປິກຜູ້ພິການໄດ້ສິ້ນສຸດລົງໃນວັນທີ່ 17 ກັນຍາສົ່ງແຂກຜູ້ສຸດທ້າຍກັບຄືນປະເທດ. ອີງຕາມຄວາມຮຽກຮ້ອງຕ້ອງການຂອງ ພາລະຫນ້າທີ່ຮັບ ແລະ ສົ່ງແຂກທີ່ເຂົ້າຮ່ວມງານກິລາໂອລິມປິກ, ທີມງານຕ້ອງປະຕິບັດງານ 24ຊົ່ວໂມງຕໍ່ເນື່ອງກັນຂອງການ ຮັບສົ່ງພາກສະຫນາມຢູ່ຕຶກສະຖານີການບິນT1, T2ແລະ T3ຊ່ວຍຜູ້ທີ່ມາເຂົ້າຮ່ວມການແຂ່ງຂັນແກ້ໄຂບັນຫາຮີບດ່ວນກ່ຽວກັບເຄື່ອງໂດຍສານ,ການເຊັນວີຊາ,ປີ້ຍົນແລະຄົມມະນາຄົມເປັນຕົ້ນ. ນັບແຕ່ເດືອນ 6 ຂອງປີທີ່ແລ້ວເລີ່ມດຳເນີນງານເປັນ ຕົ້ນມາລວມມີອາສາສະໝັກ 1474ຄົນເຂົ້າຮ່ວມວຽກງານບໍລິ ການອາສາສະຫມັກເດີ່ນບິນສຳລັບງານແຂ່ງຂັນກິລາຢ່າງເປັນລະບົບຂອງການເຄື່ອນໄຫວແຂ່ງຂັນກິລາ "ປັກກິ່ງໂຊກດີ",ໄດ້ສຳ ເລັດງານແຂ່ງຂັນກິລາ "ປັກກິ່ງໂຊກດີ" 42 ລາຍການ, ກອງປະ ຊຸມສຳຄັນ ແລະ ການເຄື່ອນໄຫວກ່ຽວກັບງານກິລາໂອລິມປິກ 10 ກວ່າລາຍການ ແລະ ຈັດເຂົ້າຢູ່ໃນພາລະຫນ້າທີ່ຮັບ ແລະ ສົ່ງທີ່ເດີ່ນບິນສຳລັບຜູ້ມາຮ່ວມກິລາຜູ້ພິການ



ການແຂ່ງຂັນເຮືອໃບໂອລິມປິກ,ພວກເຮົາກຽມພ້ອມລຽບຮ້ອຍດີແລ້ວ
奥帆赛，我们准备好了

ໃນຂອບເຂດການຮັບປະກັນ, ຈັດໃຫ້ມີຖ້ຽວບິນຮັບປະກັນ4.000 ກວ່າຖ້ຽວຈຳນວນຄົນ ທີ່ຖືກຮັບປະກັນ 26.000 ກວ່າຄົນ.ເວລາເປີດງານກິລາໂອລິມ ປິກ, ພາລະໜ້າທີ່ການບໍລິການຂອງບັນດາອາສາສະໝັກກໍຈະ ຍິ່ງຂຸ້ນຂ້ຽວ ແລະ ໜັກໜ່ວງ, ປະຈຸບັນຢູ່ໃນໄລຍະຕອນສຸດທ້າຍ ດັ່ງກ່າວນີ້,ພວກເຂົາເຈົ້າພວມດຳເນີນການຝຶກອົບຮົມ ແລະ ຝຶກ ຊ້ອມທົດລອງທີ່ມີລັກສະນະເຈາະຈົ່ງ,ເພື່ອເຮັດວຽກກະກຽມ ກ່ອນການແຂ່ງຂັນໃຫ້ໄດ້ຮັບຜົນດີ.

ທ້າຍເດືອນມິຖຸນານີ້ອາສາສະໝັກຕ່າງປະເທດດຳເນີນງານສິ່ມວນຊົນ 24 ຄົນທີ່ມາຈາກມະຫາວິທະຍາໄລອາຍໂອວາຂອງອາເມລິກາຈະມາເຖິງປັກກິ່ງ.ພວກເຂົາເຈົ້າແມ່ນອາສາສະ ໝັກຕ່າງປະເທດດຳເນີນງານສິ່ມວນຊົນຊຸດທຳອິດມາເຖິງປັກກິ່ງ. ພວກເຂົາເຈົ້າຈະຜ່ານການຝຶກອົບຮົມວັດທະນະທຳຈີນ 1 ອາທິດທີ່ມະຫາວິທະຍາໄລຊິ່ງຮົວ, ຫຼັກສູດບໍ່ພຽງແຕ່ປະກອບເນື້ອໃນປະ ຫວັດວັດທະນະທຳ, ເສດຖະກິດ, ສະພາບແວດລ້ອມຂອງຈີນ,ຍັງມີສິລະປະແບບຂຽນໜັງສືຈີນທີ່ເປັນມູນເຊື້ອຂອງຈີນ ແລະ ອື່ນໆ. ຕໍ່ຈາກນັ້ນອາສາສະໝັກຕ່າງປະເທດທັງຫຼາຍກໍຈະທະຍອຍກັນມາເຖິງປັກກິ່ງ.

ອາສາສະໝັກຕ່າງປະເທດດຳເນີນງານສິ່ມວນຊົນທັງໝົດ 292ຄົນຈະດຳເນີນວຽກງານບໍລິການຖະແຫລງຂ່າວງານກິລາໂອລິມປິກ (ONS). ເມື່ອເຂົ້າ ຮ່ວມການຝຶກອົບຮົມຫໍ ແລະ ສະໜາມ ແລະ ໜ້າທີ່ຕຳແໜ່ງແລ້ວ, ພວກເຂົາເຈົ້າຈະປະກົດຕົວໃນບັນດາຫໍ ແລະ ສະໜາມກິລາຂອງງານມະຫະກຳກິລາໂອລິມປິກ, ຫໍ ແລະ ສະໜາມທີ່ບໍ່ໃຊ້ມາແຂ່ງຂັນກິລາເຊັ່ນະສູນຖະແຫຼງຂ່າວຫຼັກ,ສູນກະຈາຍສຽງສາກົນແລະບໍລິການງານມະຫະກຳກິລາໂອລິມປິກປັກກິ່ງ.

ຊາວເມືອງະແຕ່ລະວັນໃນພາຍໜ້າລ້ວນແຕ່ມີຄຸນຄ່າຂອງການສະເຫລີມສະຫລອງ

ເວົ້າສຳລັບຜູ້ປະກອບການຂະແໜງອາຊີບບໍລິການປາກປ່ອງປ່ຽນແລ້ວ, ປະຈຸບັນກໍເປັນການຝຶກແອບຂອງວຽກງານຝຶກອົບຮົມໄລຍະຕົ້ນແລ້ວ. ຕາມການແນະນຳຂອງຜູ້ຮັບຜິດຊອບໂຄສະນາຂອງສະຫະບໍລິສັດລົດເມປະຈຳທາງປັກປິ່ງ, ພະນັກງານຂັບລົດ ແລະ ຂາຍປີ້ລົດເມປະຈຳທາງປະຈຸບັນໄດ້ມັດກາລະວັດ ຫລື bowtie ໄປປະຈຳໜ້າທີ່ແລ້ວ,ພະນັກງານຂາຍປີ້ກໍກັບການ ປ່ຽນສາຍທາງລົດຕາມບັນດາຫໍ ແລະສະໜາມກິລາໂອລິມປິກ ນັ້ນຢູ່ຕາມທາງລົດເມປະຈຳທາງເຂົາເຈົ້າຍັງຈະແນະນຳໃຫ້ຜູ້ໂດຍສານຮູ້ລາຍການແຂ່ງຂັນຂອງງານກິລາໂອລິມປິກ. ພ້ອມກັນນັ້ນ ສະຖານີລົດປະຈຳທາງເປັນຈຳນວນຫລວງຫລາຍລ້ວນແຕ່ໄດ້ປະ ກອບອາສາສະໝັກ 3 ຄົນ, ໃນນັ້ນມີຜູ້ໜຶ່ງຍັງສາມາດສະໜອງການບໍລິການດ້ວຍພາສາອັງກິດ.

ທ້າວອູ້ຢູ່ຍເວີຍຮັບຜິດຊອບວຽກງານແປພາສາປາກເປົ່າຂອງເວລາແຂ່ງຂັນຂອງງານມະຫະກຳກິລາໂອລິມປິກໄດ້ກ່າວວ່າ: "ເພື່ອຮັບປະກັນວຽກງານແປພາສາເວລາເປີດງານມະຫະກຳກິລາໂອລິມປິກສາມາດດຳເນີນໄປໄດ້ຢ່າງສະດວກ, ໃນໄລຍະໃກ້ນີ້ຈະຮັບສະໝັກນາຍແປພາສາປາກເປົ່າທີ່ຢູ່ຕາມສັງຄົມຈັດຕັ້ງເປັນທີມງານແປພາສາຊົ່ວຄາວຂຶ້ນ, ພ້ອມທັງດຳເນີນການຝຶກອົບຮົມໃຫ້ ແກ່ເຂົາເຈົ້າເພື່ອໃຫ້ກາຍເປັນຜູ້ແປພາສາເປັນທາງການເພີ່ມໃສ່ທີມງານແປພາສາ".

ຢູ່ໃນສາຍຕາຂອງນາງທ່ານຣຸຍອ່ຽນນັກສຶກສາ ສ. ເກົາຫລີທີ່ມາຮຽນຢູ່ມະຫາວິທະລາໄລປັກກິ່ງວ່າ: ການພັກເຝິງລະດູຮ້ອນປີນີ້ຈະຕ່າງກັບທຸກປີ.ເວລາເປີດງານມະຫະກຳກິລາໂອລິມປິກນາງຈະຢູ່ປັກກິ່ງ,ເພື່ອສຳເລັດວຽກງານອາສາສະໝັກຢູ່ສວນສາທາລະນະໂອລິມປິກ.ນາງທ່ານຣຸຍອ່ຽນຍິ້ມແຍ້ມແຈ່ມໃສສະແດງຄວາມຄອງຄອຍຈະໄດ້ນຸ່ງເຄື່ອງຊຸດເຮັດວຽກອາສາສະໝັກຊຸດໃໝ່ນາງໄດ້ເວົ້າວ່າ:ບໍ່ເທົ່າໃດມື້ກ່ອນໜ້ານີ້ມີຄົນມາແທກຄິງເພື່ອຕັດເຄື່ອງຊຸດເຮັດວຽກອາສາສະໝັກໃຫ້ເຮົາແລ້ວ, ອີກບໍ່ດົນຄົງຈະໄດ້ນຸ່ງແລ້ວ".

ນັກກິລາທີ່ຖືກຄັດເລືອກທົ່ວໂລກກຽມສູ້ຮົບຢ່າງຕັ້ງໜ້າແນເປົ້າໃສ່ປັກກິ່ງ

ຄາດວ່າຄົງຈະມີແຕ່ງານມະໂຫລານກິລາໂອລິມປິກນີ້ເທົ່ານັ້ນ,ຈຶ່ງສາມາດເຮັດໃຫ້ຄົນທັງຫລາຍໃນທົ່ວໂລກນີ້ເກີດມີຄວາມຝັນຄືກັນໃນເວລາດຽວ ກັນ.ແຕ່ວ່າປີ 2008 ນີ້, ຄວາມຝັນດັ່ງກ່າວໄດ້ບອກ "ປັກກິ່ງ" 2 ຕົວໜັງສືນີ້ເຂົ້ານຳ.

ໃນຂະນະນີ້ທີ 50 ໄລ່ເວລາຄືນຫລັງມື້ເປີດພິທີງານກິລາ

ໂອລິມປິກປັກກິ່ງນັ້ນບັນດານັກກິລາທົ່ວໂລກກໍພວມມີຄວາມຝັນປາກໃຫ້ລື່ນກາຍຕົນເອງຢ່າງຕໍ່ເນື່ອງນັ້ນ, ກໍເຫມືອນດັ່ງໄດ້ຕິດປ້າຍເຄື່ອງໝາຍ "ຄວາມຝັນຂອງງານກິລາໂອລິລິມປິກ" ທີ່ຕ່າງກັນໃຫ້ແກ່ຕົນເອງ.

ອາເມລິກາຊຶ່ງເປັນປະເທດມະຫາອຳນາດດ້ານການກິລາລະດັບທີ1 ຂອງໂລກ, ເທື່ອນີ້ຈະສົ່ງຄະນະຜູ້ແທນ ທີ່ມີຈຳນວນ 2.000 ຄົນມາເຂົ້າຮ່ວມງານກິລາໂອລິມປິກປັກກິ່ງເປັນຄັ້ງຫນຶ່ງ ທີ່ອາເມລິກາມີຈຳນວນຄົນເຂົ້າຮ່ວມງານມະຫະກຳກິລາໂອລິມປິກຫລາຍທີ່ສຸດໃນປະຫວັດສາດ. ພວກເຂົາເຈົ້າຈະເຂົ້າຮ່ວມຍາດຊິງເອົາ 27 ລາຍການກິລາໃນ 28 ລາຍການໃຫຍ່ຂອງງານກິລາ ຄັ້ງນີ້ຂອງທຸກລາຍການແຂ່ງຂັນ, ນອກຈາກມີທ່າແຮງອັນເດັດ ຖານໃນລາຍງານລອຍນ້ຳ, ລາຍການລູ່ ແລະ ລານTrack and field ນັ້ນແລ້ວ, ທີມກິລາຂອງອາເມລິກາຍັງເປັນຜູ້ຊິງເອົາຫລຽນຄຳທີ່ມີກຳລັງກວ່າເພິ່ນໃນລາຍການແຂ່ງຂັນກິລາກາຍຍະກຳ, ໂມຍປ້ຳ, ເບສບອນ ເພດຍິງ ແລະ ບານບ້ວງເປັນ ຕົ້ນ. ສິ່ງທີ່ຫນ້າຫຍິບຍົກຂຶ້ນມາເວົ້ານັ້ນກໍຄື, ເພື່ອບໍ່ໃຫ້ຊ້ຳຮອຍຂອງການແຂ່ງຂັນຍາດຊິງຊະນະເລີດໄດ້ແຕ່ຫຼຽນທອງຄືງານກິລາໂອລິມປິກຄັ້ງກ່ອນ, ທີມບານບ້ວງ "ເມິງປ່ຳ" ທີ່ຈະເຂົ້າຮ່ວມງານແຂ່ງ ຂັນກິລາໂອລິມປິກຄັ້ງນີ້ໄດ້ລວບລວມເອົາດາລາບານບ້ວງທີ່ໂດດເດັ່ນທີ່ສຸດຂອງອາເມລິກາເຊັ່ນ: Kobe James Wade ແລະ ຜູ້ອື່ນໆ.

ມີແນວຄິດແບບດຽວກັນນັ້ນຍັງມີທີມບານເຕະເພດຍິງ, ທີມກິລາຍູໂດຂອງ ສ. ປປ ເກົາຫລີ. ປະຈຸບັນ ສປປ ເກົາຫລີໄດ້ເອົາການເຂົ້າຮ່ວມງານມະຫະກຳກິລາໂອລິມປິກປັກກິ່ງຖືເປັນວຽກງານກິລາສຳຄັນກວ່າເພິ່ນຂອງວຽກງານກິລາຂອງປີນີ້. ທີມບານ ເຕະເພດຍິງຂອງເກົາຫລີຍ້ອນວ່າຊຸມປີໃກ້ໆມານີ້ຜົນງານໂດດເດັ່ນ ສົມຄວນ, ທົ່ວທັງປະເທດເກົາຫລີໄດ້ຝາກຄວາມຫວັງອັນແຮງກ້າ ໄວ້ນຳທີມດັ່ງກ່າວ. ເວົ້າສຳລັບນາງກູ້ຍຊຸນຈີ້ນັກກິລາທີ່ຖືກຄັດ ເລືອກຂອງທີມກິລາຍູໂດເພດຍິງຂອງເກົາຫຼີຊຶ່ງເຄີຍຖືກຂະໜານ ນາມວ່າ: "ລາຊິນີ 5 ຊະ ນະເລີດ" ຈາກງານກິລາໂອລິມປິກ, ງານແຂ່ງຂັນຍິງຊະນະເລີດຂອງໂລກມາກ່ອນແລ້ວ, ໃນງານກິລາ ໂອລິມປິກຊິດນີ ແລະ ງານກິລາໂອລິມປິກເອເທນນັ້ນເຄີຍໄດ້ ຫລຽນທອງ ແລະ ຫລຽນເງິນ, ດັ່ງນັ້ນຈຶ່ງມີຄວາມປາຖະໜາ ປາກຊິງເອົາຫລຽນຄຳໃນງານກິລາໂອລິມປິກປັກກິ່ງເປັນພິເສດ ນາງເຄີຍໄດ້ເວົ້ານຳສື່ມວນຊົນວ່າ "ເປົ້າໝາຍຂອງເຮົາປະຈຸບັນມີ ແຕ່ອັນດຽວ, ນັ້ນກໍຄືຊິງເອົາຫລຽນຄຳໃນງານມະຫະກຳກິລາ ໂອລິມປິກປັກກິ່ງ" ນາງໄດ້ເວົ້າຕໍ່ໄປວ່າ: "ຫລຽນຄຳຂອງງານມະ ຫະກຳກິລາໂອລິມປິກປັກກິ່ງປະເສີດເລີດລ້ຳກວ່າຫລຽນຄຳທີ່ເຄີຍໄດ້ມາໃນເມື່ອກ່ອນ".

ນອກຈາກນີ້ແລ້ວ, ມີບາງປະເທດຍັງໃຊ້ນະໂຍບາຍກະ ຕຸກຊຸກຍູ້ດ້ວຍການໃຫ້ລາງວັນນັກກິລາທີ່ຖືກຄັດເລືອກເພື່ອຍາດໄດ້ຜົນງານການແຂ່ງຂັນອັນຈົບງາມ. ລັດຖະບານລູມານີເພື່ອສົ່ງເສີມໃຫ້ນັກກິລາທີ່ຖືກຄັດເລືອກຍາດໄດ້ຫລຽນຄຳໃນງານມະຫະກຳກິລາໂອລິມປິກຄັ້ງນີ້ໄດ້ປະກາດເງິນລາງວັນໃຫ້ແກ່ຜູ້ຊະນະເລີດມູນຄ່າ ຂອງລາງວັນອາດຈະແມ່ນສູງສຸດໃນປະຫວັດສາດຂອງການແຂ່ງຂັນກິລາໂອລິມປິກຂອງປະເທດດັ່ງກ່າວ.

ຖ້າທຽບກັບການໄດ້ເງິນລາງວັນແລ້ວ, ທ່ານ Hoogenband ນັກກິລາທີ່ຖືກຄັດເລືອກຂອງທີມລອຍນ້ຳໂຮນລັງອາດຈະຖືໂຕຫລຽນຄຳນັ້ນມີນ້ຳຫນັກກວ່າ. ໃນງານມະຫະກຳກິລາໂອລິມປິກຊິດນີ ແລະ ມະຫະກຳກິລາໂອລິມປິກເອເທນ Hoogenband ເຄີຍໄດ້ຮັບ 3 ຫລຽນຄຳ, 2 ຫລຽນເງິນ ແລະ 2 ຫລຽນທອງ, ແຕ່ວ່າປະຈຸບັນເຂົາມີອາຍຸ 30 ປີແລ້ວໄດ້ກ້າວເຂົ້າສູ່ໄລຍະປາຍຂອງການດຳລົງຊີວິດທາງອາຊີບແລ້ວ, ປັກກິ່ງອາດຈະເປັນ



ສູນບັນຊາຮັກສາຄວາມປອດໄພງານໂອລິມປິກປັກກິ່ງຈັດຕັ້ງພະນັກງານກວດກາໂຄງສ້າງພື້ນຖານໃຕ້ນ້ຳຂອງແມັດກ້ອນນ້ຳ.
北京奥运安保指挥中心组织工作人员检查“水立方”的水下设施 新华社 图

ໂອກາດສຸດທ້າຍຂອງເຂົາມາຍາດຊິງເອົາຫລຽນຄຳຂອງງານມະຫະກຳກິລາໂອລິມປິກ. ໄຊປັດ Cyprus ແລະ ອັບການິສະຖານ ນັບແຕ່ໄດ້ແຕ່ງຄະນະເຂົ້າຮ່ວມງານມະຫະກຳກິລາໂອລິມປິກຢ່າງເປັນທາງການເປັນຕົ້ນມາ, ມາຮອດປະຈຸບັນກໍຍັງບໍ່ເຄີຍໄດ້ຫລຽນແຂ່ງຂັນຈັກຫລຽນເລີຍ,. ຊຸມປີໃກ້ໆມານີ້, ດ້ານລາຍການແຂ່ງຂັນຍິງປືນ, ລູ່ ແລະ ລານ, ບານສົ່ງ, ເຮືອໃບແລະລອຍນ້ຳນັກກິລາຂອງໄຊປັດຍາດໄດ້ຄວາມກ້າວຫນ້າຢ່າງໄວວາ, ທ່ານ Lazarides ປະທານຄະນະກຳມະການໂອບລິມປິກໄຊປັດໄດ້ສະແດງວ່າ: ຄຳຂວັນທີ່ເປັນຫົວຂໍ້ຂອງງານມະຫະກຳກິລາໂອລິມ ປິກກິ່ງຄື: "ໂລກອັນດຽວກັນ, ຄວາມຝັນອັນດຽວກັນ", ແຕ່ຄວາມຝັນຂອງໄຊປັດກໍຄື: ໃນງານມະຫະກຳກິລາໂອລິມປິກປັກກິ່ງທັບມ້າງເລກ "ສູນ" ຂອງຫລຽນກິລາໂອລິມປິກໃຫ້ປະກົດເປັນຈິງ.

ຜູ້ທີ່ຄອງຄອຍສ້າງຫນ້າປະຫວັດສາດໃຫມ່ຄືກັນນັ້ນຍັງມີຟິລິບປິນ. ລາຍການຕີໂມຍເປັນລາຍການທ່າແຮງຂອງຟີລິບປິນ, ເຖິງວ່າໃນທີມຕີໂມຍຂອງຟີລິບປິນທີ່ໄດ້ຮັບການຝາກຝັງຢ່າງລົ້ນເຫລືອນັ້ນມີແຕ່Harry Tanamorນັກໂມຍອາວຸໂສຜູ້ດຽວໄດ້ຖືກເລື່ອນຂັ້ນກໍຕາມແຕ່ວົງການກິລາຂອງຟີລິບປິນຍັງມີຄວາມຫວັງຈະສາມາດທັບມ້າງສະຖິຕິ "ສູນ" ຫລຽນຄຳຂອງງານກິລາ ໂອລິມປິກໃນລາຍການແຂ່ງຂັນຕີໂມຍໃນຄັ້ງນີ້ທ່ານ Puentevella ຮອງປະທານຜູ້ທີ1 ຂອງຄະນະກຳມະການໂອລິມປິກຟີລິບປິນມີຄຳ ເຫັນວ່າ: ໃນສະຫນາມແຂ່ງຂັນກິລາມັກມີສິ່ງອັດສະຈັນເກີດຂຶ້ນເລື້ອຍໆ, ດັ່ງນັ້ນບໍ່ແມ່ນວ່າຈະບໍ່ມີຄວາມຫວັງແຕ່ປະການໃດເລີຍ.

ນັບແຕ່ທ້າຍປີທີ່ແລ້ວຈົນເທົ່າປະຈຸບັນ, ຄະນະກຳມະການໂອລິມປິກຟິນແລນໄດ້ປະກາດລາຍຊື່ນັກກິລາ 2 ຊຸດເຂົ້າຮ່ວມງານ ກິລາໂອລິມປິກປັກກິ່ງແລ້ວ, ປະຈຸບັນຈຳນວນນັກກິລາທີ່ເຂົ້າຮ່ວມການແຂ່ງຂັນໄດ້ມີເຖິງ 20 ຄົນ. ຕາມການລາຍງານຂອງ ສື່ມວນຊົນແຫ່ງດັ່ງກ່າວ, ເຖິງວ່ານັກກິລາຟິນແລນທີ່ຈະໄປຍາດຊິງເອົາຫລຽນໃນງານແຂ່ງຂັນຄັ້ງນີ້ຄວາມຫວັງບໍ່ຫຼາຍກໍຕາມ, ແຕ່ມວນຊົນທົ່ວໄປໄດ້ຄອງຄອຍ ຢ່າງໃຈຈົດໃຈຈໍ່ເພື່ອຈະໄດ້ຮັບຊົມງານແຂ່ງຂັນໂອລິມປິກຄັ້ງນີ້. ບໍລິສັດກະຈາຍສຽງຂອງຟິນແລນໄດ້ລາຍງານວ່າ, ປະຈຸບັນບັດຜ່ານປະຕູງານກິລາໂອລິມປິກ ປັກກິ່ງ 10.000 ໃບທີ່ແບ່ງປັນໃຫ້ຟິນແລນນັ້ນ, ໄດ້ຂາຍຫມົດແລ້ວ, ແຕ່ຊາວຟິນແລນຍັງມີຫລາຍໆຄົນຫວັງຢາກໃຫ້ເຈົ້າຫນ້າ ທີ່ມີສ່ວນກ່ຽວຂ້ອງຍາດແຍ່ງໄດ້ບັດຜ່ານປະຕູຍິ່ງຫລາຍກວ່າເກົ່າອີກ, ເພື່ອຕອບສະຫນອງຕາມຄວາມມຸ່ງມາດປາຖະຫນາທີ່ເຂົາ ເຈົ້າຈະໄດ້ເດີນທາງໄປປັກກິ່ງຊົມງານມະຫະກຳກິລາໂອລິມປິກຄັ້ງນີ້.

ກອງກຳລັງເຂົ້າຮ່ວມງານກິລາໂອລິມປິກຂອງຈີນທີ່ມີນັກກິລາເຂົ້າຮ່ວມຫລາຍຂອງປະຫວັດສາດໄດ້ກຽມພ້ອມແລ້ວເອີ້ນປີບກໍມາປັບມີນັກກິລາໃດແດຈະປະກົດຕົວຢູ່ໃນງານກິລາໂອລິມປິກປັກກິ່ງ?ພວກເຮົາຈົ່ງຄອຍເບິ່ງໂສມຫນ້າອັນເລິກລັບຂອງກອງກຳລັງກິລາໂອລິມປິກປັກກິ່ງຂອງຈີນທີ່ຈະໄດ້ຖືກເຜີຍແບແມ່ນລື້ວຊ່ຽງ? ຢ້າວມິງ? ໃຜຈະມີແສງປະກາຍກວ່າເພິ່ນ? ລາຍການໄດ້ຊະນະ ເລີດຂອງງານກິລາໂອລິມປິກປັກກິ່ງໃດແດ່ປັກກິ່ງຈະບໍ່ມີອາດມະຫນາ?ໃນຂະນະພິທີເປີດງານກິລາໂອລິມປິກປັກກິ່ງຫຍັບເຂົ້າໃກ້ນຳທຸກມື້ນັ້ນ.

ຄຽງຄູ່ກັບການແຂ່ງຂັນເລືອກເຟັ້ນນັກກິລາແຕ່ລະລາຍການສະເພາະໄດ້ໃກ້ຈະຈົບລົງ, ໂສມຫນ້າກອງກຳກິລາລັງຂອງຈີນໄດ້ນັບມື້ນັບແຈ່ມແຈ້ງອອກມາ. ໃນງານມະຫະກຳກິລາໂອລິມປິກເອເທນຂອງ 4 ປີ ກ່ອນ, ນັກກິລາໃນຄະນະຜູ້ແທນຂອງຈີນນັ້ນມີ 407 ຄົນເຂົ້າຮ່ວມການແຂ່ງຂັນ, ເປັນຄັ້ງທຳອິດທີ່ຈີນມີຈຳນວນ ພົນເຂົ້າຮ່ວມການແຂ່ງຂັນຫລາຍທີ່ສຸດຂອງງານກິລາໂອລິມປິກຄັ້ງກ່ອນໆຜ່ານມາ, ໃນງານກິລາໂອລິມປິກປັກກິ່ງຕົວເລກດັ່ງກ່າວຈະຖືກລື່ນກາຍຢ່າງຫຼວງຫຼາຍ, ໄລມາຮອດປະຈຸບັນ, ຈີນໄດ້ມີນັກກິລາ 500 ກວ່າຄົນໄດ້ຮັບຄຸນວຸດທິຈາກຄະນະກຳມະການກິລາໂອລິມປິກປັກກິ່ງສາມາດເຂົ້າຮ່ວມແຂ່ງຂັນໃນງານມະຫະກຳກິລາໂອລິມປິກປັກກິ່ງ. ຕາມການຄາດຄະເນຂອງທ່ານຊຸ່ນຕ່ຳມີງຮອງຫົວໜ້າໃຫຍ່ກົມກິລາແຫ່ງຊາດຂອງຈີນ, ນັກກິລາທີ່ຈະ ເຂົ້າຮ່ວມການແຂ່ງຂັນນັ້ນສຸດທ້າຍຈະບັນລຸເຖິງ 550-570 ຄົນຈຳນວນນັກກິລາເຂົ້າຮ່ວມການແຂ່ງຂັນແລະລາຍການຂອງການແຂ່ງຂັນລ້ວນແຕ່ສ້າງສະຖິຕິໃໝ່.

# ພາສາ 44 ຊະນິດຂອງອົງກອນແປພາສາງານມະ ຫະກຳກິລາໂອລິມປິກປັກກິ່ງໄດ້ແປພາສາໂດຍກົງໃນງານມະຫະກຳກິລາໂອລິມປິກຢ່າງຕໍ່ເນື່ອງ

## 北京奥运翻译机构 44 种语言不间断直译奥运

你听说过僧加罗语、豪萨语等语种吗？尽管讲这些语言的人数很少，尽管它们之中有些还不是官方语言，但在北京奥运会期间，如果你拨打多语言服务中心的总机，你就会听到这些“稀有”的声音。44 个语种，24 小时不间断服务，这就是北京奥运会多语言服务中心的职能所在。

ທ່ານເຄີຍໄດ້ຍິນພາສາ Simhale,ພາສາຮາວຊາ ນັ້ນແດ່ບໍ່? ເຖິງວ່າພົນລະເມືອງທີ່ປາກພາສາດັ່ງກ່າວໜ້ອຍທີ່ສຸດ, ເຖິງວ່າພາສາດັ່ງກ່າວນັ້ນມີບາງຄຳຍັງບໍ່ທັນແມ່ນເປັນພາສາທາງລັດຖະການກໍຕາມ,ແຕ່ຢູ່ໃນໄລຍະເວລາງານມະຫະກຳກິລາໂອລິມປິກປັກກິ່ງນັ້ນ,ຖ້າທ່ານກົດເລກໂທໄປຈັກລວມສູນບໍລິການຫລາຍ ພາສາ, ທ່ານຈະໄດ້ຮັບຟັງສຽງພາສາ "ຫາໄດ້ຍາກ "ດັ່ງກ່າວ.ພາສາ44ຊະນິດໃຫ້ການບໍລິການຢ່າງຕໍ່ເນື່ອງໃນ24ຊົ່ວໂມງ,ນີ້ກໍຄືພາລະບົດບາດຂອງສູນບໍລິການຫລາຍພາສາຂອງງານມະຫະກຳກິລາໂອລິມປິກປັກກິ່ງ.

ນັບແຕ່ວັນທີ່24ກໍລະກົດເປັນຕົ້ນໄປ,ຈັກລວມບໍລິການຫລາຍພາສາ ແລະ ທີມງານຮັບມືຢ່າງສຸກເສີນຂອງຫລາຍພາສາແລະບຸກຄະລາກອນຮັບບໍລິການອື່ນໆໄດ້ເລີ່ມເຂົ້າເຮັດວຽກໃນສູນບໍລິການຫລາຍພາສາຢ່າງເປັນທາງການ,ສູນດັ່ງກ່າວຈະຖືກອັດລົງໃນວັນທີ່ 21 ກັນຍາ.

ພະນັກງານປະຕິບັດງານຂອງສູນບໍລິການຫລາຍພາສາຂອງງານມະຫະກຳກິລາໂອລິມປິກປັກກິ່ງສ່ວນໃຫຍ່ແມ່ນເອົາອາສາສະໝັກຂອງມະຫາວິທະຍາໄລພາສາຕ່າງປະເທດປັກກິ່ງເປັນຫລັກ.ໃນໄລຍະເວລາຂອງງານກິລາໂອລິມປິກ ແລະ ງານມະຫະກຳກິລາໂອລິມປິກຜູ້ພິການ,ຈັກລວມບໍລິການຫລາຍພາສາຜ່ານຮູບແບບພາສາທາງໂທລະສັບມາສະໜອງພາສາ10ຊະນິດດ້ວຍ ການຕຶກຝຶກຝົນ 24 ຊົ່ວໂມງຂອງການເຝົ້າສາຍດ່ວນໃຫ້ແກ່ພະນັກງານປະຕິບັດງານງານມະຫະກຳກິລາໂອລິມປິກ ແລະ ສະມາຊິກຂອງບັນດາຄະນະຜູ້ແທນ ແລະ ພາສາ34ປະເພດດ້ວຍການຕຶກຝຶກຝົນຮັບສາຍດ່ວນ18ຊົ່ວໂມງ,ສະໜອງພາສາ9ຊະນິດດ້ວຍການຕຶກຝຶກຝົນເຝົ້າສາຍດ່ວນ24ຊົ່ວໂມງໃຫ້ແກ່ພະນັກງານປະຕິບັດງານງານມະຫະກຳກິລາໂອລິມປິກ ແລະ ສະມາຊິກຂອງບັນດາຄະນະຜູ້ແທນ.ພາສາ44ຊະນິດດັ່ງກ່າວເກືອບເວົ້າ ໄດ້ວ່າໄດ້ກວມເອົາພາສາຂອງສະມາຊິກວົງຄະນະຍາດທີ່ເຂົ້າຮ່ວມງານມະຫະກຳກິລາໂອລິມປິກ,ນັບທັງພາສາທີ່ມີປະຊາກອນບໍ່ຫລາຍເຊັ່ນະພາສາ Island Simhale ແລະ ພາສາຮາວຊາເປັນຕົ້ນ.

ຈັກລວມບໍລິການຫລາຍພາສາເປັນພາກສ່ວນເພີ່ມເຕີມອັນສຳຄັນຂອງການບໍລິການພາສາງານມະຫະກຳກິລາໂອລິມປິ,ມັນໃຊ້ຮູບການແປພາສາດ້ວຍໂທລະສັບມາສະໜອງການບໍລິການໂທລະສັບໃຫ້ ແກ່ສະມາຊິກວົງຄະນະຍາດງານມະຫະກຳກິລາໂອລິມປິກ ແລະ ສະມາຊິກວົງຄະນະຍາດງານກິລາໂອລິມປິກຜູ້ພິການ,ສະໜາມແລະຫໍກິລາກັບຂະແໜງກິດຈະການທີ່ມີພາລະບົດບາດ,ຕອບສະໜອງຕາມຄວາມຕ້ອງການແປພາສາດ້ວຍປາກເປົ່າທີ່ບໍ່ຕ້ອງສະໜອງການແປພາສາແບບໜ້າຕໍ່ໜ້າ.

ເລກໂທລະສັບຂອງຈັກລວມບໍລການຫລາຍພາສາ,ແມ່ນເລກໃຊ້ສະເພາະຂອງງານມະຫະກຳກິລາໂອລິມປິກ,ເລກໝາຍມີແຕ່ໃຫ້ຜູ້ຈັດການບໍລິການພາສາຂອງແຕ່ລະສະໜາມ ແລະ ຫໍກິລາເທົ່ານັ້ນ,ເມື່ອພົບກັບບັນຫາການກີດກັ້ນຂອງພາສາແລ້ວໂດຍແມ່ນຜູ້ຈັດການບໍລິການພາສາກົດເລກໂທຂອງຈັກລວມມາແກ້ໄຂບັນຫາ,ແຕ່ລະປະເພດພາສາລ້ວນແຕ່ມີເລກໝາຍໂທລະສັບທີ່ຄວບຄູ່ກັນໄປ,ຈັກລວມບໍລິການພາສາມີແຕ່ສະໜອງການບໍລິການແປພາສາປາກເປົ່າ,ບໍ່ສະໜອງການບໍລິການຂໍ້ມູນຂ່າວສານ.

ແຕ່ວ່າ,ຖ້າມີຄວາມຈຳເປັນອາສາສະໝັກຂອງທີມງານຮັບມືສຸກເສີນກໍຈະເລັ່ງໄປສູ່ພາກສະໜາມຕົວຈິງເພື່ອສະໜອງ



ທີມບໍລິການຜູ້ອາສາສະໝັກພາສາຕ່າງປະເທດຂອງງານໂອລິມປິກປັກກິ່ງໄດ້ສ້າງຕັ້ງຂຶ້ນ
奥运维权外语志愿者服务队成立 CFP 图

ການບໍລິການແປພາສາປາກເປົ່າດ້ວຍໜ້າເຊິ່ງໜ້າໃນທົ່ວໂລກ.

ໂຄງການພະນັກງານຕິດຕໍ່ພົວພັນແມ່ນອີງຕາມສະພາບຕົວຈິງຂອງຈີນ, ຈັດວາງອາສາສະໝັກຊັ້ນສູງເພື່ອຄະນະກຳມະການໂອລິມປິກ (NOC) ແລະ ຄະນະຜູ້ແທນຄະນະກຳມະການໂອລິມປິກຜູ້ພິການຂອງປະເທດ ແລະ ເຂດແຄວ້ນ, ແມ່ນໜ້າທີ່ຕຳແໜ່ງຫົວລ້ຽວຫົວຕໍ່ຂອງອາສາສະໝັກວິຊາສະເພາະຂອງຄະນະກຳມະການຈັດຕັ້ງໂອລິມປິກ ແລະ ຄະນະກຳມະການສະຫະພາບການກິລາໂອລິມປິກສາກົນ. ເປົ້າໝາຍການບໍລິການຂອງເຂົາເຈົ້າແມ່ນນັກກິລາ ແລະ ເຈົ້າໜ້າທີ່ຂອງຄະນະຜູ້ແທນໂອລິມປິກຂອງແຕ່ລະປະເທດ ແລະ ເຂດແຄວ້ນ, ອາສາ ສະໝັກດັ່ງກ່າວສ່ວນຫລາຍແມ່ນພະນັກງານບຳນານຫລືຄູອາຈານຜູ້ອາວຸໂສທີ່ກິນເບັ້ຍບຳນານຂອງກະຊວງການຕ່າງປະເທດ, ສະມາຄົມມິດຕະພາບຕໍ່ຕ່າງປະເທດ, ສະພາບັນດິດສັງຄົມວິທະຍາສາດ, ມະຫາວິທະຍາໄລພາສາຕ່າງປະເທດປັກກິ່ງ ແລະ ພະແນກການທີ່ມີສ່ວນກ່ຽວຂ້ອງ.

ງານກິລາໂອລິມປິກປັກກິ່ງຍັງບໍ່ທັນໄດ້ເລີ່ມດຳເນີນງານ, ທີມງານແປພາສາONSກໍເລີ່ມດຳເນີນການແປພາສາກ່ຽວກັບພູມຫລັງ ແລະ ຂໍ້ມູນຂ່າວສານຂອງນັກກິລາ, ຄູຝຶກ ແລະກຳມະການຕັດສິນ, ເຈົ້າໜ້າທີ່ ແລະ ຜູ້ອື່ນໆຂອງບຸກຄົນເຫລົ່ານີ້, ໄດ້ສ້າງສັບວິຊາສະເພາະ ແລະ ສາງຕົວເລກອ້າງອີງຫລວງຫລາຍຂຶ້ນ, ເພື່ອໃຫ້ອາສາສະໝັກຂອງຈັກລວມບໍລິການຫລາຍພາສາແປພາສາຢ່າງແມ່ນຢຳທີ່ສຸດໃນເວລາການແຂ່ງຂັນ. ONS ແມ່ນສຳນັກງານຂ່າວສານຝ່າຍລັດຖະບານພາຍໃນຄະນະກຳມະການຈັດຕັ້ງກິລາໂອລິມປິກ, ຈຸດໜັກແມ່ນສະໜອງວຽກງານແປພາສາຂໍ້ມູນຂ່າວສານກ່ອນການແຂ່ງຂັນແລະການຖະແຫລງຂ່າວເວລາແຂ່ງຂັນຂອງສື່ມວນຊົນທີ່ໄດ້ຂຶ້ນທະບຽນ, ຄະນະກຳມະການໂອລິມປິກສາກົນ, ສະຫະສະມາຄົມກິລາລາຍການສະເພາະສາກົນ ແລະ ຄະນະຜູ້ແທນຂອງບັນດາປະເທດຊຶ່ງເປັນສະມາຊິກວົງຄະນະຍາດຂອງໂອລິມປິກ. ONS ປະຈຸບັນຍັງຮັບວຽກງານແປພາສາ9ຊະນິດເຊັ່ນພາສາອັງກິດ, ພາສາລັດເຊຍ, ພາສາເຢຍລະມັນ, ພາສາ ສ.ເກົາຫລີ ແລະ ພາສາອາລັບຂອງ "ປື້ມຄູ່ມືບໍລິການແກ່ຜູ້ຊົມ" ຂອງນະ ຄອນປັກກິ່ງ.

ການບໍລິການຂອງ ONS ໂດຍເອົາພາສາອັງກິດເປັນ ພາສາເຮັດວຽກ, ທີມງານແປພາສາONSມີພາລະໜ້າທີ່ເອົາຂໍ້ມູນຂ່າວສານ ແລະ ຖະແຫລງຂ່າວຈາກສະບັບພາສາອັງກິດແປເປັນພາສາຈີນ ແລະ ພາສາຝຣັ່ງ. ບົນຫລັກການຂອງການແປເປັນພາສາຊົນເຜົ່າຂອງຕົນ, ການແປພາສາເປັນພາສາຝຣັ່ງລ້ວນແຕ່ໃຫ້ບຸກຄົນທີ່ເປັນສັນຊາດອື່ນມາຮັບຜິດຊອບ, ການແປພາສາເປັນພາສາຈີນໃຫ້ນັກແປພາສາພາຍໃນປະເທດເປັນຜູ້ຮັບຜິດຊອບ, ຖ້າວ່າ ONS ພົບຄວາມຫຍຸ້ງ ຍາກໃນເວລາແປພາສາແລ້ວ, ກໍ່ຈະໃຫ້ທີມງານຮັບມືສຸກເສີນຫລາຍຊະນິດພາສາອອກໜ້າມາແປ.



ພະລາຊະວັງກູ້ກົງປັກກິ່ງ
北京故宫

# ຄູ່ມືຊີ້ທິດການທ່ອງທ່ຽວງານກິລາໂອລິມປິກປັກກິ່ງ

## 北京奥运旅游指南

许多中外游客想在奥运会期间到北京观赛、旅游。据奥组委和北京市旅游局估计，奥运会期间北京将接待50万至55万境外宾客和225万至258万国内观众。那么，奥运期间住哪里？吃些什么？北京的交通有能力运输这么多的游客吗？如果您有幸前往北京看奥运，我们提供以下信息请参考。

ມີແຂກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດຈຳນວນຫລາຍ ສົມຄວນຄິດຢາກໄປຊົມການແຂ່ງຂັນກິລາ ແລະ ທ່ອງທ່ຽວ ປັກກິ່ງໃນໄລຍະເປີດງານກິລາໂອລິມປິກ,ຕາມການຄາດຄະເນຂອງຄະນະກຳມະການຈັດຕັ້ງງານກິລາໂອລິມປິກແລະ ພະແນກທ່ອງທ່ຽວນະຄອນປັກກິ່ງໃຫ້ຮູ້ວ່າ,ໃນໄລຍະຂອງການຈັດງານກິລາໂອລິມປິກນັ້ນ,ປັກກິ່ງຈະຮັບຕ້ອນແຂກຕ່າງປະເທດຫ້າແສນເຖິງຫ້າແສນຫ້າຫມື່ນຄົນແລະຜູ້ຊົມພາຍໃນປະເທດ2.250.000-2.580.000ຄົນ.ຄັນຊັ້ນໃນໄລຍະຈັດງານ ກິລາໂອລິມປິກຈະໄປພັກເຊົາຢູ່ບ່ອນໃດ?ກິນຫຍັງ?ຄວາມສາມາດ ດ້ານຄົມມະນາຄົມຂອງປັກກິ່ງຈະເປັນແນວໃດ ແລະ ອື່ນໆ.ຖ້າວ່າ ທ່ານໂຊກດີປີ 2008 ນີ້ຈະໄປຊົມງານກິລາໂອລິມປິກທີ່ປັກກິ່ງ, ພວກຂ້ອຍຂໍສະຫນອງຂໍ້ມູນຂ່າວສານທີ່ມີສ່ວນກ່ຽວຂ້ອງດັ່ງຕໍ່ໄປນີ້ເພື່ອໃຊ້ສຳລັບຄົ້ນຄວ້າພິຈາລະນາ.

ປັກກິ່ງ:ລະດູຮ້ອນຂອງປັກກິ່ງຮ້ອນເອົ້າ,ມີຝົນຫລາຍ.ຕາມພາກສ່ວນກ່ຽວຂ້ອງຜ່ານການວິໄຈຂໍ້ມູນເກືອບ20ປີມານີ້ໄດ້ຂໍ້ສະຫລຸບວ່າ,ໃນໄລຍະງານກິລາໂອລິມປິກປີ2008ຄືແຕ່ວັນທີ 8-24ສິງຫາ,ອຸນນະຫະພູມສະເລ່ຍຂອງປັກກິ່ງແມ່ນປະມານ 24˚Cຮອດເວລານັ້ນຜູ້ຄົນທີ່ເດີນທາງໄປປັກກິ່ງ,ຕ້ອງການມີການຜ່ອນຄາຍຄວາມຮ້ອນ, ປ້ອງກັນການຕາກແດດໃນໄລຍະງານມະຫະກຳກິລາໂອລິມປິກປັກກິ່ງຈຳນວນແຂກຕ່າງປະເທດທີ່ມາຈົດທະບຽນແມ່ນ50.200ຄົນ,ໃນນັ້ນ,ນັບທັງນັກກິລາ ແລະເຈົ້າຫນ້າທີ່ຕິດຕາມຄະນະກິລາມາພ້ອມ17.000ຄົນ,ສະມາຊິກວົງຄະນາຍາດໂອລິມປິກ(ນັບທັງຄະນະກຳມະການໂອລິມປິກສາກົນ,ຄະນະກຳມະການໂອລິມປິກຂອງແຕ່ລະປະເທດ ແລະ ຜູ້ແທນຂອງສະມາຄົມກິລາລາຍການສະເພາະຕ່າງໆ 4.600ຄົນ,ນັກສື່ຂ່າວ,ສື່ມວນຊົນທີ່ຈົດທະບຽນ21.600ຄົນ,ນັກທຸລະກິດອຸປະຖຳ ແລະ ແຂກຂອງເຂົາເຈົ້າ7.000ຄົນ.

ໃນຈຳນວນຄົນດັ່ງກ່າວ, ນອກຈາກນັກກິລາ ແລະ ເຈົ້າຫນ້າທີ່ຕິດຕາມນັກກິລາເຂົ້າໄປພັກເຊົາຢູ່ຫມູ່ບ້ານງານກິລາໂອລິມປິກ,ນັກຂ່າວສື່ມວນຊົນທີ່ຈົດທະບຽນເຂົ້າໄປພັກເຊົາຢູ່ບ້ານສື່ມວນຊົນແລ້ວ, ແຂກຕ່າງປະເທດທີ່ຈົດທະບຽນອື່ນໆລ້ວນແຕ່ຈະໄດ້ເຂົ້າໄປພັກເຊົາຢູ່ໂຮງແຮມນ້ອຍໆໃຫຍ່ໆຂອງປັກກິ່ງ.ຮອດປີ2008ໂຮງແຮມຊັ້ນດາວຂອງປັກກິ່ງຈະຫລາຍກວ່າ800ແຫ່ງສາມາດສະຫນອງຫ້ອງນອນ130.000ຫ້ອງ.ນອກຈາກໂຮງແຮມຊັ້ນດາວແລ້ວ,ປັກກິ່ງຍັງມີໂຮງແຮມ,ຫໍຮັບແຂກ,ເຮືອນພັກ ແລະ ສູນຝຶກອົບຮົມເປັນຕົ້ນຊຶ່ງບໍ່ໄດ້ຫມາຍດາວນັ້ນຍັງມີ 4.000ກວ່າແຫ່ງ,ສະຖານທີ່ດັ່ງກ່າວສາມາດສະຫນອງຫ້ອງ

ນອນໄດ້290.000ຫ້ອງ.ເວລາປັກກິ່ງສະເໜີຂໍເປັນເຈົ້າພາບຈັດງານກິລາໂອລິມປິກເຄີຍໄດ້ໃຫ້ຄຳໝັ້ນສັນຍາຕໍ່ຄະນະກຳມະການໂອລິມປິກສາກົນ,ລາຄາພັກເຊົາຫ້ອງນອນຂອງໂຮງແຮມມີດາວແຕ່ລະແຫ່ງຂອງປັກກິ່ງຈັດແບ່ງອອກເປັນລາຄາພິເສດ, ລາຄານະໂຍບາຍພິເສດ ແລະ ລາຄາສາມັນ.

ທາງເລືອກອີກອັນໜຶ່ງຄື,ເຂົ້າຮ່ວມຄະນະນຳທ່ຽວງານກິລາໂອລິມປິກທີ່ແມ່ນສຳນັກງານທ່ອງທ່ຽວເປັນຜູ້ຈັດຕັ້ງຂຶ້ນ.ອີງຕາມສະພາບທົ່ວໄປແລ້ວການໄປທ່ຽວເປັນຄະນະ,ອາດສາມາດເສຍຄ່າພັກເຊົາ ແລະ ຄ່າທ່ອງທ່ຽວຂ້ອນຂ້າງຖືກ.

ນອກນັ້ນຍັງມີອີກວິທີໜຶ່ງ-ຖ້າຢາກພັກເຊົາໃຫ້ຖືກວ່ານັ້ນ, ສາມາດເລືອກເອົາບໍ່ໄປພັກເຊົາຢູ່ໃນເຂດຕົວເມືອງປັກກິ່ງ,ໄປພັກເຊົາຢູ່ຊານເມືອງຫລືກະທັ້ງໄປພັກເຊົາຢູ່ຕົວເມືອງຂ້ອນ ຂ້າງໃກ້ກັບປັກກິ່ງເຊັ່ນ:ເຮີໄປ໋ ແລະ ທຽນສິນເປັນຕົ້ນ.

ຖ້າຫາກທ່ານໂຊກດີໄດ້ໄປຊົມງານກິລາໂອລິມປິກທີ່ປັກກິ່ງ, ຕ້ອງໃຫ້ຄົ້ນຄວ້າເບິ່ງແຜນທີ່ປັກກິ່ງກ່ອນ.ໃນໄລຍະງານມະຫະກຳກິລາໂອລິມປິກ,ປະລິມານການສັນຈອນຂອງລົດໃນເຂດຕົວເມືອງປັກກິ່ງມີຫລວງຫລາຍພາຍມາກ,ປະກົດການຄົມມະນາຄົມບຽດສຽດຕິດຂັດຈະຕ້ອງເກີດຂຶ້ນໂດຍບໍ່ສາມາດຫລີກລຽງໄດ້.ຖ້າວ່າທ່ານກ່ອນຈະອອກໄປນອກໃຫ້ຄົ້ນຄວ້າເບິ່ງເສັ້ນທາງກ່ອນແລ້ວຈະສາມາດປະຫຍັດເວລາໄດ້.ນັກຊ່ຽວຊານສະເໜີ,ໃນໄລຍະງານກິລາໂອລິມປິກ,ຄົນທັງຫລາຍໄປຊົມງານແຂ່ງຂັນກິລາທີ່ສະໜາມ ແລະຫໍກິລານັ້ນ,ຮູບແບບຂອງການອອກເດີນທາງທີ່ດີທີ່ສຸດຄືຂີ່ລົດໄຟໃຕ້ດິນ,ທັງປະຫຍັດເວລາ ແລະທັງສະດວກ.

ກ່ອນງານກິລາໂອລິມປິກປັກກິ່ງ,ປັກກິ່ງຈະໃຫ້ມີເສັ້ນທາງສາຍລົດໄຟໃຕ້ດິນສາຍເລກ1,ສາຍເລກ2,ສາຍເລກ8ຊອດສາຍເລກ13,ສາຍເລກ5,ສາຍເລກ10,ສາຍສາຂາງານກິລາໂອລິມປິກ ແລະ ທາງມີລາງເຂົ້າສູ່ສະໜາມບິນເປີດນຳໃຊ້,ຈະສາມາດສົ່ງຜູ້ຊົມໄປສູ່ບັນດາສະໜາມ ແລະ ຫໍແຂ່ງຂັນກິລາຢ່າງສະດວກ ແລະ ວ່ອງໄວ.ເມືອງ,ເຮັດແນວນີ້ສາມາດເຮັດໃຫ້ຜູ້ອອກເດີນທາງຍິ່ງສະດວກ ຂຶ້ນຕື່ມ.

ນອກຈາກທາງລົດໄຟໃຕ້ດິນແລ້ວສາຍທາງລົດເມສະເພາະງານກິລາໂອລິມປິກທີ່ແຜ່ກະຈາຍຢູ່ທົ່ວທັງເມືອງປັກກິ່ງນັ້ນກໍ່ຈະສາມາດສະໜອງຄວາມສະດວກໃຫ້ແກ່ຜູ້ຄົນທັງຫລາຍ.ໃນການວາງແຜນສາຍທາງ ສະເພາະງານກິລາໂອລິມປິກປັກກິ່ງນັ້ນ, ແຜນການເບື້ອງຕົ້ນຈະສ້າງສາຍທາງສະເພາະງານກິລາໂອລິມປິກ 38 ສາຍຈັດໄວ້ຢູ່ 16 ແຫ່ງຂອງສະໜາມ ແລະຫໍແຂ່ງຂັນກິລາໂອລິມປິກພາຍໃນເຂດຕົວເມືອງ.ສະຖານີເລີ່ມອອກເດີນທາງ ຂອງສາຍທາງລົດເມສະເພາະງານກິລາໂອລິມປິກຈະຈັດໄວ້ຢູ່ ບ່ອນທີ່ມີປະຊາກອນລວມສູນຢູ່ຢ່າງໜາແໜ້ນຂອງເຂດຕົວເມືອງ,ເຮັດແນວນີ້ສາມາດເຮັດໃຫ້ຜູ້ອອກເດີນທາງຍິ່ງສະດວກຂຶ້ນຕື່ມ.

ຖ້າວ່າທ່ານໂຊກດີໄດ້ໄປທ່ອງທ່ຽວງານກິລາໂອລິມປິກທີ່ປັກກິ່ງປີ2008,ທຳມະດາແລ້ວວ່າຢ່າພາດໂອກາດໄປຊີມລົດຊາດອາຫານການກິນທີ່ເປັນມູນເຊື້ອທ້ອງຖິ່ນຕ່າງໆຂອງປັກກິ່ງ ທີ່ເກົ່າແກ່ບູຮານເຊັ່ນ: ຊີ້ນແບ້ຈຸ່ມ,ອົບຊີ້ນ,ປ້າວຕູ້,ຢູ້ຕູຮົວຊ່າວ ແລະ ຢາງເສັ້ຍຈີເປັນຕົ້ນລ້ວນແຕ່ເປັນລົດຊາດສະເພາະຕົວຂອງປັກກິ່ງ.ແລະອາຫານປັກກິ່ງກໍແມ່ນຄົນທັງຫລາຍພາດບໍ່ໄດ້,ອາຫານປັກກິ່ງແມ່ນມີຂື້ນບົນພື້ນຖານຂອງອາຫານຊ່ານຕົ່ງທີ່ປະສົມປະສານກັບອາຫານຊູເຫລົ່າຊຶ່ງມີສີສັນພິເສດທີ່ສຸດ. ນອກນັ້ນປັກກິ່ງຍັງລວບລວມເອົາອາຫານແຊບທີ່ມີລົດຊາດຕ່າງກັນຂອງບັນດາປະເທດໃນໂລກເຊັ່ນ:ລົດຊາດຂອງເອີລົບ,ລົດຊາດຂອງອາເມລິກາລາຕິງ,ແບບປຸງແຕ່ງຂອງຍີ່ປຸ່ນ,ອາຫານອົບແລະປີ້ງຂອງ ສ.ເກົາຫລີເປັນຕົ້ນ,ມີແຕ່ອາຫານທີ່ທ່ານຄິດບໍ່ເຖິງເທົ່ານັ້ນ,ບໍ່ມີສິ່ງທີ່ທ່ານບໍ່ໄດ້ກິນ.



ອະນຸສະວະລີສະຕະວັດຈີນ.
中华世纪坛



ຮັງນົກຊຶ່ງເປັນສະໜາມກິລາຫຼັກຂອງງານກິລາໂອລິມປິກປັກກິ່ງ
北京奥运会的主体育场“鸟巢” 新华社 图

# ສະໜາມ ແລະ ຫໍກິລາໂອລິມປິກ ໄດ້ສ້າງຍີ່ຫໍ້ດັງຂອງຈີນຂຶ້ນ

## 奥运场馆打造中国品牌

历届奥运会场馆都引人注目，2008 年北京奥运会的场馆建设更吸引了世人的目光。北京奥运场馆建设中一个个崛起的“中国”品牌，见证了人类在建筑领域里不懈的追求，也彰显了现代中国自主创新的强大实力。

ສະໜາມແລະຫໍກິລາງານໂອລິມປິກແຕ່ລະສະໄໝກໍລ້ວນແຕ່ພາໃຫ້ຄົນຈັບຕາມອງ,ການກໍ່ສ້າງສະໜາມ ແລະ ຫໍກິລາໂອລິມປິກປັກກິ່ງປີ2008ຍິ່ງເປັນການດູດດຶງເອົາສາຍຕາຂອງຊາວໂລກເມື່ອຍ່າງເຂົ້າໃກ້ "ຮັງນົກ" , "ນໍ້າຮູບກ້ອນກໍາລັງສາມ" , ໝູ່ບ້ານກິລາໂອລິມປິກ,ສວນສາທາລະນະໜ້ານໍ້າໂອລິມປິກ, ສະໜາມ ແລະ ຫໍກິລາໂອລິກປິກຂອງແຕ່ລະສະຖາບັນການສຶກສາຊັ້ນສູງ,ຄົນທັງຫລາຍໄດ້ພົບເຫັນຢ່າງມະຫັດສະຈັນຕໍ່ສິ່ງທີ່ປຽມຫລົ້ນໄປດ້ວຍສີສັນອັນແປກປະຫລາດຂອງໝາກຜົນລິເລີ່ມໃໝ່ເປັນເຈົ້າຕົນເອງທີ່ເກາະຕິດກັບພູມປັນຍາພາກຕະເວັນອອກຄືທີ່ກ່າວມາຂ້າງເທິງ. ເພື່ອຄວາມຮຽກຮ້ອງຕ້ອງການການແຂ່ງຂັນຂອງງານມະຫະກໍາກິລາໂອລິມປິກປີ 2008,ປັກກິ່ງໄດ້ສ້າງສະໜາມ ແລະ ຫໍກິລາຂຶ້ນ 31 ແຫ່ງ,ໃນນັ້ນສ້າງຂຶ້ນໃໝ່ 12 ແຫ່ງ, ດັດແປງຂະຫຍາຍກວ້າງ 11 ແຫ່ງ,ຍັງມີ 8 ແຫ່ງເປັນສະໜາມ ແລະ ຫໍກິລາໃຊ້ຊົ່ວຄາວ. "ສະໜາມ ແລະ ຫໍແມ່ນໃຜໃຫ້ຕົນເອງເປັນຜູ້ສ້າງຂຶ້ນ" ສະໜາມ ແລະ ຫໍກິລາດັ່ງກ່າວແຕ່ແຜນງານແຫ່ງການອອກແບບຢ່າງຄົບຖ້ວນບໍລິບູນ, ຮອດການຄິດໄລ່ໂຄງປະກອບ,ຮອດກໍາມະວິທີແຫ່ງການດໍາເນີນການກໍ່ສ້າງ ແລະ ມາດຕະຖານຂອງການກວດກາທົດລອງຄຸນນະ ພາບ,ລ້ວນແຕ່ແມ່ນຄົນຈີນເປັນຜູ້ກໍານົດ ແລະ ລົງມືກໍ່ສ້າງໃຫ້ສໍາເລັດຜົນດ້ວຍການເປັນເຈົ້າຕົນເອງ,ໄດ້ເປັນການເຮັດໃຫ້ຊ່ອງຫວ່າງທາງເຕັກນິກຢູ່ພາຍໃນປະເທດຫລາຍລາຍການຖືກປະດິດຄິດສ້າງອອກມາ. ໂດຍເອົາການກໍ່ສ້າງສະໜາມ ແລະ ຫໍກິລາງານໂອລິມປິກປັກກິ່ງທີ່ມີຮູບແບບກໍ່ສ້າງອັນໂດດເດັ່ນ,ມີລະດັບຄວາມຍາກດ້ານເຕັກນິກລະດັບໂລກເຊັ່ນ: ຮັງນົກ ແລະ "ນໍ້າ ຮູບກ້ອນກໍາລັງສາມ" ເປັນຕົວແທນໄດ້ເຮັດໃຫ້ເປັນກໍາລັງສິ່ງຜົນສະເທືອນ ແລະ ກໍາລັງສິ່ງຜົນສະທ້ອນຕໍ່ໂລກ,ອັນນີ້ກໍຍ້ອນວ່າ ກ່ອນໜ້ານີ້ຍັງບໍ່ເຄີຍມີລັກສະນະການລິເລີ່ມສ້າງຢ່າງເປັນເອກະລາດ ແລະ ການລິເລີ່ມໃໝ່ດ້ວຍການເປັນເຈົ້າຕົນເອງ.ໃນການ ສ້າງສາສະໜາມ ແລະ ຫໍກິລາງານໂອລິມປິກປັກກິ່ງດ້ວຍຍີ່ຫໍ້ດັງຂອງຈີນ" ທີ່ປະກົດຂຶ້ນແຕ່ລະອັນ,ມັນໄດ້ເປັນພະຍານຮູ້ເຫັນການສະແຫວງຫາຢ່າງບໍ່ລົດລະຕໍ່ຂົງເຂດການກໍ່ສ້າງຂອງມວນມະນຸດ,ແລະ ກໍເປັນການສັນລະເສີນ ແລະ ສະແດງກໍາລັງຕົວຈິງອັນມະຫາສານຂອງການລິເລີ່ມໃໝ່ດ້ວຍການເປັນເຈົ້າຕົນເອງ ຂອງຈີນຍຸກປະຈຸບັນ.




ຕ້ອນຮັບງານກິລາໂອລິມປິກ ພິຖີພິຖັນມາລະຍາດ ສ້າງແບບແຜນທຳນອງໃໝ່

迎奥运 讲文明 树新风

# ມື້ໃໝ່ຈະຍິ່ງດີກວ່າເກົ່າ

## – ເລື່ອງ: ການສ້າງຄືນໃໝ່ຫລັງປະສົບໄພ ແຜ່ນດິນໄຫວ ວຽງເຂດເວີນຊວນແຂວງເສສວນ

## 明天更美好

## - - 记四川汶川地震灾后重建

2008 年 5 月 12 日下午 14 时 28 分，四川省汶川县发生 8.0 级地震，瞬间夺走了无数鲜活的生命，摧毁了无数幸福的家园……灾后重建是未来三年到五年乃至十年当中，中国政府和灾区人民所必须面对的重要课题。日前，国家的重建规划方案已经出台，民间的力量也正在积极相应参与，为了“重建更加美好的家园”，中国政府从教育、医疗、生活、水和卫生、住房以及关注弱势群体需求等多个方面进行详细规划。




ຕອນບ່າຍຂອງວັນທີ່ 12ພຶດສະພາ ປີ 2008 ເວລາ14:28 ໂມງເມືອງເວີນຊ່ວນແຂວງເສສວນເກີດແຜ່ນດິນໄຫວຂັ້ນ8 ເຣັກເຕີ, ພຽງແຕ່ຫຍັບຕາດຽວກໍຍາດຊີງເອົາຊີວິດຂອງຄົນຢ່າງນັບບໍ່ຖ້ວນ ແລະ ທຳລາຍເຮືອນຊານບ້ານຊ່ອງອັນສຸກສັນເປັນຈຳນວນເຫລືອຈະພັນລະນາໄດ້...

ຫຼັງຈາກຄວາມເສຍຫາຍຊັບສິນອັນມະຫາສານແລະຄວາມລົ້ມຫາຍຕາຍຈາກຂອງຜູ້ຄົນຢ່າງນັບບໍ່ຖ້ວນແລ້ວ, ພາລະກິາແລະຄວາມຮັບຜິດຊອບທີ່ຕົກໃສ່ສອງບ່າໄຫລ່ຊາວຈີນແລະຜູ້ມີເຊື້ອສາຍຈີນໃນທົ່ວໂລກເປັນຮ້ອຍລ້ານພັນລ້ານທີ່ບໍ່ອາດຈະປາສະຈາກໄດ້ຄືກັນນັ້ນກໍຄື: ສ້າງສາຄືນໃໝ່ຫລັງປະສົບໄພພິບັດ.

ການສ້າງສາຄືນໃໝ່ຫຼັງໄພພິບັດເປັນປະເດັນສຳຄັນທີ່ລັດຖະບານ ແລະ ປະຊາຊົນເຂດປະສົບໄພຂອງຈີນ, ໃນ 3-5ປີ ຫຼືເປັນເວລາ 10 ປີຂ້າງໜ້າຕ້ອງປະເຊີນໜ້າ . ພາຍຫຼັງເກີດໄພແຜ່ນດິນໄຫວແລ້ວປະຊາຊົນທົ່ວປະເທດແລະອົງການຕ່າງໆໃນສັງຄົມພ້ອມກັບເພື່ອນມິດ,ອົງການຈັດຕັ້ງ ແລະ ລັດຖະບານໃນທົ່ວໂລກລ້ວນໄດ້ແຕ່ຍື່ນມືຊ່ວຍເຫລືອມາຍັງເຂດເວີນຊ່ວນທີ່ປະສົບໄພແຜ່ນດິນໄຫວຂະໜາດໃຫຍ່,ຫວ່າງມໍ່ໆນີ້, ແຜນແມ່

ພະນັກງານໝໍແພດຂອງໂຮງໝໍຢາພື້ນເມືອງຈີນນະຄອນຮາງໂຈວຕ້ອນຮັບຄົນເຈັບຖືກບາດເຈັບຈາກແຜ່ນດິນໄຫວເວີນຊວນເຊສວນເພື່ອມາປິ່ນປົວ.
杭州市中医院的医务人员迎接转来治疗的四川灾区伤员　新华社 图

ປົດການວາງແຜນສ້າງສາຄືນໃໝ່ທີ່ລັດວາງອອກກໍໄດ້ປະກາດອອກມາແລ້ວ,ຝ່າຍພົນລະເຮືອນກໍພວມກຽມກຳລັງຕອບສະໜອງມີສ່ວນຮ່ວມຢ່າງຕັ້ງໜ້າ. ທີມງານໃນສັງຄົມກໍທະຍອຍກັນໃຊ້ທ່າ ແຮງຂອງຕົນມາສະໜອງການຊ່ວຍເຫລືອທີ່ມີສ່ວນກ່ຽວຂ້ອງ, ໃຊ້ ຮູບແບບຕ່າງໆມາສະ ໜອງການຊ່ວຍເຫລືອໃນພາກຕົວຈິງຢ່າງຫ້າວຫັນຍາວນານໃຫ້ແກ່ການສ້າງສາເຂດປະສົບໄພຄືນໃໝ່. ເພື່ອ "ສ້າງສາເຮືອນຊານບ້ານຊ່ອງຄືນໃໝ່ໃຫ້ດີງາມກວ່າເກົ່າ", ລັດຖະບານຈີນໄດ້ວາງແຜນຢ່າງລະອຽດຫຼາຍດ້ານນັບທັງການສຶກສາ, ສາທາລະນະສຸກ, ການດຳລົງຊີວິດ,ນ້ຳ ແລະ ອະນາໄມ, ເຮືອນຢູ່ອາໄສ ແລະ ເອົາໃຈໃສ່ຕໍ່ຄວາມຮຽກຮ້ອງຕ້ອງການຂອງຊຸມຊົນທີ່ດ້ອຍ ໂອກາດ ແລະອື່ນໆ.

ນັບມາຮອດປະຈຸບັນ, ການກູ້ໄພ ແລະ ຕ້ານໄພຍາດໄດ້ໝາກຜົນທີ່ມີລັກສະນະຂັ້ນຕອນແລ້ວ.ປະຈຸບັນວຽກງານຕ້ານໄພແລະກູ້ໄພໄດ້ກ້າວເຂົ້າສູ່ໄລຍະໃຫມ່ແລ້ວ, ວຽກງານຟື້ນຟູການສ້າງສາຫຼັງປະສົບໄພແຜ່ນດິນໄຫວກໍພວມດຳເນີນໄປຢ່າງຕັ້ງໜ້າ.ເພື່ອຮັບປະກັນວຽກງານຟື້ນຟູການສ້າງສາຄືນໃຫມ່ຫຼັງປະສົບໄພແຜ່ນດິນໄຫວໃຫ້ດຳເນີນໄປຢ່າງມີພະລັງ,ມີລະບຽບຮຽບຮ້ອຍ ແລະ ມີປະສິດທິຜົນ, ລັດຖະບານໄດ້ປະກາດໃຊ້ "ຂໍ້ກຳນົດວ່າດ້ວຍຟື້ນຟູສ້າງສາເຂດເວີນຊວນຄືນໃຫມ່ຫລັງປະສົບໄພແຜ່ນດິນໄຫວ".

ໄພພິບັດແຜ່ນດິນໄຫວຂະໜາດໃຫຍ່ຄັ້ງນີ້, ເຮັດໃຫ້ເຮືອນຊານບ້ານຊ່ອງໄຮ່ນາຮົ້ວສວນເປັນຈຳນວນຫລວງຫລາຍພັງທະລາຍ,ມີນວນຊົນເປັນໝື່ນເປັນແສນຕ້ອງການໃຫ້ມີການຈັດສັນ,ເງື່ອນໄຂການຄອງຊີບພື້ນຖານເຊັ່ນ:ເສື້ອຜ້າ,ອາຫານການກິນແລະທີ່ຢູ່ອາໄສຕ້ອງໄດ້ຮັບການແກ້ໄຂ. ລັດຖະບານໄດ້ເອົາການຈັດສັນຊີວິດການເປັນຢູ່ຂອງມວນຊົນເຂດປະສົບໄພຈັດໄວ້ຢູ່ບ່ອນທີ່ໂດດເດັ່ນ,ວຽກງານແຕ່ດ້ານການໄດ້ດຳເນີນໄປຢ່າງໂດດເດັ່ນ, ມີຈຸດສຸມ, ເປັນລະບຽບທັນການ ແລະ ຮຽບຮ້ອຍເສັດສັດ. ໄດ້ຊຸກຍູ້ວຽກງານຕ້ານໄພ ແລະກູ້ໄພຢ່າງມີປະສິດທິຜົນເຮັດໃຫ້ສັງຄົມຂອງເຂດປະສົບໄພມີສະຖຽນລະພາບຢ່າງໝັ້ນທ່ຽງ, ໄດ້ເປັນການປູພື້ນຖານອັນໜັກແໜ້ນໃຫ້ແກ່ການໄດ້ຮັບໄຊຊະນະຂອງການຕໍ່ສູ້ກູ້ໄພ ແລະຕ້ານໄພແຜ່ນດິນໄຫວຄັ້ງນີ້.

ການສະໜັບສະໜູນ ແລະ ຊ່ວຍເຫລືອຊຶ່ງກັນແລະກັນຕໍ່ເຂດປະສົບໄພແຜ່ນດິນໄຫວແບບຂະແໜງການດຽວກັນ: ຄຳນຶງ ເຖິງການກໍ່ສ້າງທີ່ຢູ່ອາໄສລັກສະນະຖາວອນຄືນໃໝ່ຫຼັງປະສົບໄພ ນັ້ນ,ຕ້ອງການມີເວລາໄລຍະໜຶ່ງ,ຜູ້ນຳຄະນະລັດຖະບານໄດ້ຕົກລົງເພີ່ມທະວີລະດັບຄວາມແຮງໃສ່ການສ້າງສາເຮືອນຈັດສັນໃນໄລຍະຂ້າມຜ່ານ.ເພື່ອແກ້ໄຂທີ່ຢູ່ອາໄສຊົ່ວຄາວຂອງເຂດປະສົບໄພແບບສະໜັບສະໜູນ ແລະຊ່ວຍເຫຼືອດ້ວຍຂະແໜງດຽວກັນຕໍ່ຂະແໜງການດຽວກັນ, ໂດຍແມ່ນລັດຖະບານສູນກາງ ແລະ ອົງການປົກຄອງທ້ອງຖິ່ນຮ່ວມກັນຮັບພາລະ. ຜ່ານການຄົ້ນຄວ້າແລ້ວ, ໄດ້ຕົກລົງກໍ່ສ້າງເຮືອນຈັດສັນດ້ວຍລັກສະນະຂ້າມຜ່ານ. ຊຶ່ງການກໍ່ສ້າງເຮືອນຈັດສັນລັກສະນະຂ້າມຜ່ານ ນັ້ນໃຫ້ດຳເນີນໄປຕາມຫລັກການຮັບປະກັນໃຫ້ທັນເວລາ, ຮັບປະກັນຄຸນນະພາບ, ຮັບປະກັນຈຳນວນຊຸດ,ຮັບປະກັນຄວາມປອດໄພ ແລະ ເງິນທຶນເໝົາຂາດຕົວຢ່າງເຄັ່ງຄັດຄື: 1. ກຳນົດເນື້ອທີ່ເຮືອນຈັດສັນລັກສະນະຂ້າມຜ່ານຂອງແຕ່ລະຊຸດຢ່າງສົມເຫດສົມ ຜົນ. ທົ່ວໄປແລ້ວແມ່ນຄວບຄຸມຢູ່ພາຍໃນ20ຕາແມັດ. 2.ນຳໃຊ້ໂຄງປະກອບເຫຼັກກ້າເບົາຫຼືອຸປະກອນອື່ນໆທີ່ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການໃຊ້ສຳລັບຕ້ານແຜ່ນດິນໄຫວໄດ້. 3. ເລືອກໃຊ້ອຸປະກອນຮັກສາຄວາມອຸ່ນຮ້ອນໄດ້ ແລະ ອຸປະກອນເຮັດ ຝາເຮືອນທີ່ສາມາດປ້ອງກັນອັກຄີໄພ,ອຸປະກອນສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງການປົກປັກຮັກສາສິ່ງແວດລ້ອມ, ທີ່ຢູ່ອາໄສຊົ່ວຄາວທີ່ສ້າງຂຶ້ນນັ້ນ, ໃຫ້ສາມາດປ້ອງກັນແຜ່ນດິນໄຫວ, ປ້ອງກັນອັກຄີໄພ, ປ້ອງກັນລົມ,ປ້ອງກັນການຮົ່ວຊຶມ. 4. ຮັບປະ ກັນຄຸນນະພາບຂອງການກໍ່ສ້າງ, ຮັບປະກັນອາຍຸການນຳໃຊ້ໃຫ້ ໄດ້3ປີຂຶ້ນໄປ. 5. ຢູ່ພາຍໃນຫ້ອງເຮືອນຈັດສັນລັກສະນະຂ້າມຜ່ານຕ້ອງຈັດໃຫ້ມີໂຄງປະກອບສະໜອງແສງສະຫວ່າງ. 6. ການກໍ່ສ້າງໂຄງລ່າງສາທາລະນະໃຫ້ມີອັດຕາສ່ວນອັນແນ່ນອນຄວບຄູ່ກັນໄປ. ອີງຕາມລະດັບລວມສູນຂອງເຮືອນຈັດສັນລັກສະນະຂ້າມຜ່ານ, ລະດັບຄວາມ

ສືບໜ້າຂອງການກໍ່ສ້າງ ໂຄງລ່າງສາທາລະນະທີ່ຄອບຄູ່ກັນໄປ ເຊັ່ນ: ໂຮງຮຽນ,ຫ້ອງກວດພະຍາດ ແລະ ອື່ນໆສາມາດເພີ່ມຄວາມໄວຂຶ້ນໄດ້.

ການວາງແຜນທີ່ຢູ່ອາໄສລັກສະນະຖາວອນໄດ້ເລີ່ມມີການຈັດວາງ: ການຈັດວາງກ່ຽວກັບການຈັດສັນຫລັງປະສົບໄພໄດ້ກ້າວເຂົ້າສູ່ໄລຍະທີ່ 3 ແລ້ວ,ອະນຸກຳມະການໜ່ວຍຊ່ຽວຊານວາງແຜນຈັດສັນຫຼັງປະສົບໄພໄດ້ເລີ່ມດຳເນີນງານຈັດສັນເຮືອນທີ່ຢູ່ອາໄສລັກສະນະຖາວອນໃນເຂດປະສົບໄພແຜ່ນດິນໄຫວແລ້ວ.

ການໂຍກຍ້າຍຄົນເຈັບທີ່ຖືກບາດເຈັບຢູ່ເຂດປະສົບໄພແຜ່ນດິນໄຫວ: ພາຍຫລັງເກີດແຜ່ນດິນໄຫວແລ້ວບໍ່ດົນ, ອົງການປົກຄອງທ້ອງຖິ່ນຕ່າງໆໄດ້ສົມທົບກັນຢ່າງຕັ້ງໜ້າກັບລັດຖະບານສູນກາງຈັດຕັ້ງ ແລະ ປະສານງານໂຮງໝໍ ແລະ ພະນັກງານແພດໝໍ,ເອົາຄົນເຈັບເຂດປະສົບໄພແຜ່ນດິນໄຫວໂຍກຍ້າຍໄປເຂດນອກບັນດາແຂວງ, ກຳແພງນະຄອນ ແລະ ເຂດປົກຄອງຕົນເອງ, ເພື່ອໄດ້ຮັບການປິ່ນປົວໃຫ້ດີຂຶ້ນກວ່າເກົ່າ.

ການເກີດແຜ່ນດິນໄຫວລະດັບ 8 ເຣັກເຕີຢູ່ເຂດເວິນຊວ່ນແຂວງເສສວນນັ້ນ, ບໍ່ພຽງແຕ່ທຳລາຍເຮືອນຊານບ້ານຊ່ອງ ແລະໄຮ່ນາຮົ້ວສວນອັນສວຍງາມເທົ່ານັ້ນ, ຄວາມໂສກເສົ້າເສຍໃຈ, ຄວາມກັງວົນ, ຄວາມສະທ້ານຢ້ານກົວ, ຄວາມສິ້ນຫວັງທີ່ໄພພິບັດ ນຳມານັ້ນກໍໄດ້ທຳລາຍຊ່ອງຫວ່າງແນວຄິດຈິດໃຈຂອງມວນຊົນໃນເຂດປະສົບໄພພິບັດທີ່ໃສແຈ້ງມາແຕ່ເດີມ. ເພື່ອໃຫ້ມວນຊົນໃນ ເຂດປະສົບໄພສ້າງໂຄງປະກອບຈິດຕະວິທະຍາຄືນໃໝ່, ເຮັດໃຫ້ເຂົາເຈົ້າຜ່ານຜ່າວິກິດການຢ່າງສະດວກ, ປ້ອງກັນຫລັງຈາກມີການບວມຊ້ຳແລ້ວເກີດການກິດກັນການຮັບມືກັບການໂມໂຫໂທໂສ ເກີນໄປ, ຍົກສູງລະດັບສຸຂະພາບດ້ານຈິດຕະວິທະຍາ,ແຕ່ລະທ້ອງຖິ່ນຂອງທົ່ວປະເທດໄດ້ທະຍອຍກັນຈັດຕັ້ງໜ່ວຍງານເຂົ້າແຊກແຊງທາງດ້ານຈິດຕະວິທະຍາໄປສູ່ເຂດປະສົບໄພ, ໃຊ້ຫລາຍ ຮູບການດຳເນີນການຊ່ວຍເຫຼືອທາງຈິດຕະວິທະຍາ. ຊ່ຽວຊານ ທາງຝ່າຍຈິດຕະວິທະຍາຂອງນະຄອນອູຫ້ານ, ຊຽງໄຮ, ປັກກິ່ງ, ຮົງກົງ ແລະ ທີ່ປຶກສາການເຂົ້າແຊກແຊງທາງດ້ານຈິດຕະວິທະ ຍາໄດ້ມຸ່ງໜ້າໄປສູ່ເຂດ


ຄຸ້ມບ້ານຂ້າມຜ່ານໄທພົນນະຄອນຈຽງຢຽວເຊິ່ງແມ່ນປັກກິ່ງເປັນຜູ້ຊ່ວຍສ້າງ
北京援建的江油市太平镇过渡安置房小区　新华社 图

ປະສົບໄພ, ເພື່ອດຳເນີນການບຳລຸງ ແລະ ສຶກສາຄວາມຮູ້ທາງດ້ານຈິດຕະວິທະຍາ; ໂຮງໝໍ 4 ແຫ່ງຂອງ ນະຄອນເຊີ່ນຕູ່ໄດ້ເປີດບໍລິການຕໍ່ກໍລະນີຮັບມືລ່ວງໜ້າເຂົ້າແຊກແຊງວິກິດການດ້ານຈິດຕະວິທະຍາຫລັງປະສົບໄພອັນຮ້າຍແຮງ,ສ້າງໜ່ວຍງານເຂົ້າແຊກແຊງວິກິດການທາງຈິດຕະວິທະຍາ,ດຳເນີນການແຊກແຊງດ້ວຍຈິດຕະວິທະຍາຕໍ່ຜູ້ບາດເຈັບ ແລະຍາດພີ່ນ້ອງໃນຄອບຄົວ; ກະຊວງສາທາລະນະສຸກໄດ້ຈັດຕັ້ງພະນັກງານແພດໝໍເປັນຈຳນວນຫລາຍໄປດຳເນີນການສຶກສາຝຶກອົບຮົມທາງດ້ານຈິດຕະວິທະຍາຢ່າງຕັ້ງໜ້າ, "ສາຍດ່ວນບໍລິການບໍ່ເກັບຄ່າເປັນຫ່ວງເປັນໃຍຕໍ່ຄົນໃນຄອບຄົວຫຼັງປະສົບໄພ---ພວກເຮົາບໍ່ແມ່ນຍາດພີ່ນ້ອງຂອງເຈົ້າ" ຂອງສູນເປັນຫ່ວງເປັນໃຍ ແລະ ໃຫ້ຄວາມຮັກຕໍ່ຄອບຄົວຂອງນະຄອນປັກກິ່ງກໍໄດ້ເປີດ



ບໍລິ ການແລ້ວ, ຜູ້ປະຕິບັດງານເຂົ້າແຊກແຊງດ້ານຈິດຕະວິທະຍາໂດຍເອົາຈິດໃຈຮັກແພງອັນເລິກເຊິ່ງມາຊ່ວຍເຫລືອຜູ້ຄົນທີ່ໄດ້ຜ່ານ ຄວາມທຸກທໍລະຈາກໄພພິບັດ,ປອບຂວັນດ້ວຍ "ການໜູນຊ່ວຍ ດ້ານຈິດຕະວິທະຍາ" ຍັງຈະສືບຕໍ່ຍຶດໝັ້ນຕໍ່ໄປຢ່າງຍາວນານ.

ລັດຖະບານໄດ້ຊ່ວຍປະຊາຊົນເຂດປະສົບໄພປົກປັກຮັກສາຄວາມປອດໄພທາງຊັບສິນເປັນຢ່າງດີ ແລະໄດ້ເຮັດວຽກງານດັ່ງກ່າວຢ່າງຫລວງຫລາຍ. ຊ່ວຍເຫລືອປະຊາຊົນເຂດປະສົບໄພກຳນົດແຈ້ງເງິນຝາກທະນາຄານ, ກຳມະສິດຕໍ່ເຮືອນຊານ, ການປະກັນໄພ, ເງິນໃນກອງທຶນ ແລະ ໃບຮຸ້ນເປັນຕົ້ນ,ຊຶ່ງເປັນຊັບສິນ ທາງການເງິນທີ່ເປັນກຳມະສິດຂອງຕົນ.ຈັດລະບຽບການຂອງການທົດແທນ...

ຢູ່ໃຕ້ການຊີ້ນຳຂອງລັດຖະບານ, ມວນຊົນໃນເຂດປະສົບໄພໄດ້ຟື້ນຟູການຜະລິດດ້ານອຸດສາຫະກຳ ແລະ ກະສິກຳໄປເທື່ອລະກ້າວ.

ທ່າມກາງລັດຖະບານ ແລະ ປະຊາຊົນທຸ່ມເທກຳລັງຢ່າງສຸດຂີດໃສ່ວຽກງານການຕ້ານໄພ, ກູ້ໄພ ແລະ ການສ້າງສາຄືນໃໝ່ຫຼັງປະສົບໄພແຕ່ລະຂັ້ນຕອນລ້ວນແຕ່ໄດ້ດຳເນີນໄປຢ່າງເປັນລະບຽບຮຽບຮ້ອຍ, ໃນຂະນະບັນດາວົງການຂອງສັງຄົມຍື່ນມືຊ່ວຍເຫຼືອແກ່ປະຊາຊົນເຂດປະສົບໄພນັ້ນ,ປະຊາຊົນເຂດປະສົບໄພກໍຕັ້ງໜ້າຈັດຕັ້ງການຜະລິດເພື່ອຊ່ວຍຕົນເອງ, ການສ້າງເຮືອນຊານບ້ານຊ່ອງໄຮ່ນາຮົ້ວສວນທີ່ສວຍງາມກວ່າເກົ່າຄືນໃໝ່" ຈະຕ້ອງປະກົດຜົນເປັນຈິງ!

ພວກເຮົາຄອງຄອຍ, ວັນໃໝ່ຂອງບ້ານເກີດເມືອງນອນຂອງເຮົາຈະຍິ່ງສວຍງາມ...,ຂໍອວຍໄຊໃຫ້ພອນປະຊາຊົນເຂດປະສົບໄພທີ່ອົງອາດກ້າຫານ.



ນັກຮົບພວມຍົກຖ່າຍແຜ່ນເຫຼັກສີສາມາດເຄື່ອນທີ່ໄດ້ຢູ່ຈຸດຕາແສງປັນແຊວນະຄອນມຽນຈູ
战士在绵竹市板桥镇安置点卸活动板房彩钢板　新华社 图



ບັນດາກຳມະກອນຍົກຖ່າຍວັດສະດຸກໍ່ສ້າງທີ່ປະກອບເປັນເຮືອນແປ້ນໄມ້ຕາແສງອິນຊຽວເວິນຊວນ
工人们在汶川映秀镇搬运活动板房的组装材料　新华社 图

# ຈີນອ້າແຂນເປີດ ປະຕູສູ່ພາຍນອກ ມາປະເຊີນຫນ້າກັບໂລກ

## 中国以开放的胸襟面对世界

作为世界上最大的发展中国家，中国在四川大地震后毅然采取接受外援等一系列开放举措，改变了自己，也改变了世界对中国的认识。进一步开放的中国正在影响世界，世界正在从一个全新的视角注视中国。



ພະນັກງານກູ້ໄພຍີ່ປຸ່ນດຳເນີນການກວດກາກູ້ໄພທີ່ເມືອງຊິນຊວນ
日本救援人员在青川县展开搜救　新华社 图

ຈີນຊຶ່ງເປັນປະເທດພວມພັດທະນາທີ່ໃຫຍ່ທີ່ສຸດຂອງໂລກນັ້ນ, ພາຍຫລັງເກີດໄພແຜ່ນດິນໄຫວອະຫນາດໃຫຍ່ຢູ່ເສສວນແລ້ວ, ໄດ້ໃຊ້ມາດຕະການຢ່າງເດັດດ່ຽວຂອງການເປີດປະຕູສູ່ພາຍນອກຢ່າງເປັນລະບົບຮັບເອົາການຊ່ວຍເຫລືອຈາກພາຍນອກ,ທັງເປັນການເຮັດໃຫ້ຕົນເອງມີການປ່ຽນແປງ ແລະ ກໍເຮັດໃຫ້ໂລກມີການປ່ຽນແປງຄວາມຮັບຮູ້ຕໍ່ຈີນ.

ຄວາມຮູ້ສຶກທາງປະຫວັດສາດເປັນປະເດັນກ່ອນອື່ນຫມົດອັນຈຳເປັນຕໍ່ການສັງເກດ ແລະ ຮັບຮູ້ຂອງຈີນຍຸກປະຈຸບັນ.ຖ້າສົມທຽບກັບໄພແຜ່ນດິນໄຫວອະຫນາດໃຫຍ່ຄືກັນທີ່ຖາງຊ່ານຂອງຈີນເມື່ອ32ປີກ່ອນແລ້ວ,ການສ່ອງແສງຄືນຂອງການຮັບມືຢ່າງຮີບດ່ວນຕໍ່ຫລັງມີໄພແຜ່ນດິນໄຫວອະຫນາດໃຫຍ່ເສສວນເກີດຂື້ນ,ໄດ້ລວມສູນສະແດງອອກພາຍຫລັງຜ່ານການຊອກຄົ້ນທາວຫາກ້າວຂື້ນຈີນຜ່ານການປະຕິຮູບເປີດປະຕູສູ່ພາຍນອກ30ປີມານີ້,ຕໍ່ການປະຕິຮູບເປີດປະຕູສູ່ພາຍນອກຕື່ມກ້າວຫນຶ່ງຈີນຍິ່ງມີຄວາມຮູ້ສຶກຕື່ມຕົວແລະຕັ້ງຫນ້າກ່າວເກົ່າສະແດງອອກຍິ່ງມີກຳລັງຮອງຮັບ ແລະ ເຊື່ອຫມັ້ນຕົນເອງ,ທີ່ມີລັກສະນະໂອບອ້ອມ

ອາລີເປີດໃຈຮັບໄດ້,ຈຶ່ງເປັນການສະແດງອອກຄວາມທະນົງກຽດຂອງປະຊາຊາດທີ່ອົງອາດສະຫງ່າ ແລະ ເຂັ້ມແຂງແຮງກ້າໂດຍຕົນເອງທີ່ເປີດອົກເປີດໃຈຢ່າງສະຫງ່າຜ່າເຜີຍ,ມັນຍິ່ງເປັນການຍຶດໝັ້ນຢ່າງແນ່ວແນ່ໃນການຕັ້ງໝັ້ນຕົນເອງຢູ່ໃນໝູ່ປະຊາຊາດຂອງໂລກ.ຈີນທີ່ເກົ່າແກ່ບູຮານໄດ້ຮັບຜົນສະທ້ອນຈາກການສືບທອດ ປະຫວັດສາດອັນໜັກໜ່ວງ,ການເປີດປະຕູສູ່ພາຍນອກນັ້ນເປັນເລື່ອງທີ່ບໍ່ງ່າຍດາຍຢູ່ແລ້ວ.ພາຍຫລັງລົ້ມລຸກຄຸກຄານບຸກບືນຫລອດກາລະນານມາເປັນຮ້ອຍປີແລ້ວຈຶ່ງໄດ້ເຫດຜົນອັນໜຶ່ງທີ່ລວມເຂົ້າເປັນສິ່ງຍອດຍິ່ງນັ້ນກໍຄື: ມີແຕ່ປະຕິຮູບເປີດປະຕູສູ່ພາຍນອກເທົ່ານັ້ນຈຶ່ງສາມາດເຮັດໃຫ້ຈີນໄດ້ພັດທະນາ.ການປະຕິຮູບເປີດປະຕູສູ່ພາຍນອກອີກຕື່ມກ້າວໜຶ່ງນັ້ນໄດ້ກາຍເປັນແຜນຍຸດທະສາດແຫ່ງຊາດຂອງຈີນແລ້ວ ແລະ ກໍຍ້ອນວ່າສົມຄວນກາຍເປັນຈຸດເຂົ້າເລິກໄປສູ່ ໝຄວາມຮັບຮູ້ຂອງຈີນຍຸກປະຈຸບັນຕໍ່ໂລກພາຍນອກ.ບົນຈຸດເລີ່ມທາງປະຫວັດສາດໃໝ່ນັ້ນ,ການປະຕິຮູບເປີດປະຕູສູ່ພາຍນອກເປັນທາງເລືອກອັນຫົວລ້ຽວຫົວຕໍ່ຕັດສິນຊີ້ຂາດຊະຕາກຳຂອງຈີນໃນຍຸກປະຈຸບັນ,ແລະກໍເປັນຈຸດພິເສດອັນໂດດເດັ່ນທີ່ສຸດໃນຂະບວນວິວັດແຫ່ງການພັດທະນາຂອງຈີນໄລຍະໃໝ່.ຍືນຢູ່ເທິງກອງຊາກສະລັກຫັກພັງຈາກແຜ່ນດິນໄຫວນາຍົກລັດຖະມົນຕີຂອງຈີນຜ່ານນັກຂ່າວພາຍໃນ ແລະ ຕ່າງປະເທດໄດ້ປະກາດຕໍ່ຊາວໂລກວ່າ:ເວລາແກ້ໄຂເຫດການຫລອນເກີດຂຶ້ນຢ່າງບັງເອີນ ແລະ ບັນຫາ ອື່ນໆນັ້ນ, ຈີນຈະຍຶດໝັ້ນທິດທາງເອົາຄົນເປັນກົກຢ່າງບໍ່ມີການປ່ຽນແປງຕະຫລອດໄປ,ການຍຶດໝັ້ນທິດທາງເປີດປະຕູສູ່ພາຍນອກນັ້ນກໍຈະບໍ່ມີການປ່ຽນແປງນີ້ບໍ່ພຽງແຕ່ ເປັນການປະກາດໃຫ້ຮູ້ ແລະເປັນຄຳໝັ້ນສັນຍາອັນເຄັ່ງຂືມ ຂອງແຜນຍຸດທະສາດແຫ່ງຊາດຂອງຈີນເທົ່ານັ້ນ,ຄຽງຄູ່ກັບບຸກຄະລາກອນ ແລະ ວັດຖຸສິ່ງຂອງຊ່ວຍກູ້ໄພຂອງຕ່າງປະເທດ ຫລາຍງວດໄປເຖິງເຂດປະສົບໄພ,ຄຽງຄູ່ກັບເຮືອບິນກອງທັບຂອງຕ່າງປະເທດເຂົ້າຮ່ວມຊ່ວຍກູ້ໄພແຜ່ນດິນໄຫວ,ໃນເວລາອັນສັ້ນໆຂອງກາງເດືອນພຶດສະພາປີ 2008 ການປະຕິຮູບເປີດປະຕູສູ່ພາຍນອກຂອງຈີນກໍໄດ້ກ້າວອອກໃນບາດກ້າວອັນໃຫຍ່ທີ່ເຮັດໃຫ້ໂລກຈັບຕາມອງ.

ການເປີດປະຕູສູ່ພາຍນອກຂອງຈີນຕ້ອງການມີຊ່ອງເອີກອັນກວ້າງຂວາງ,ຕ້ອງການມີຄວາມຮັບຮູ້ຢ່າງກ້າຫານ,ຕ້ອງການມີການລິເລີ່ມໃໝ່. ການເປີດປະຕູສູ່ຈີນຂອງໂລກພາຍນອກກໍຕ້ອງການມີຄວາມເຂົ້າໃຈ,ຕ້ອງການມີຄວາມເຫັນອົກເຫັນໃຈ ແລະ ຕ້ອງການມີການປັບປຸງໃໝ່.ຄວາມອະຄະຕິທີ່ເກີດຂຶ້ນເອັ້ນເສຍແຕ່ມີຄວາມຫ້ຽນໂຫດທາງຈິດໃຈແຝງຢູ່ແລ້ວ, ການຂາດການລຸລ່ວງຊຶ່ງກັນແລະກັນດ້ອຍບໍ່ຫັນໜ້າຫາກັນທີ່ບໍ່ເຂົ້າໃຈ ແລະ ບໍ່ເຫັນໃຈຊຶ່ງກັນແລະກັນກໍແມ່ນເຫດຜົນອັນໜຶ່ງ. ການເປີດປະຕູ ສູ່ພາຍນອກທີ່ໂປ່ງໃສໄດ້ເປັນການຊ່ວຍໃຫ້ການແລກປ່ຽນຢ່າງ ຈິງໃຈບົນພື້ນຖານພາວະວິໄສ,ຖືກກັບຄວາມຈິງ ແລະ ຮອບດ້ານໃຫ້ປະກົດເປັນຈິງຂຶ້ນ,ແລະກໍມີຜົນດີໃຫ້ແກ່ການຫລຸດຄວາມອະຄະ ຕິ ແລະ ຄວາມເຂົ້າໃຈຜິດ, ເພີ່ມຄວາມເຂົ້າໃຈ ແລະ ຄວາມ ເຫັນໃຈຂຶ້ນຕື່ມ. ຈີນທີ່ຍຶດໝັ້ນການປະຕິຮູບເປີດປະຕູສູ່ພາຍນອກ ນັ້ນໄດ້ພະຍາຍາມປະຕິບັດທັດສະນະພັດທະນາດ້ວຍວິທະຍາສາດ,ປະຕິບັດທິດທາງ "ເອົາຄົນເປັນກົກ" ແລະ ແນວຄວາມຄິດກຳອຳ ນາດການປົກຄອງດ້ວຍ "ສິດໃຊ້ເພື່ອປະຊາຊົນ, ເອົາຄວາມຮັກໃຄ່ ຜູກພັນກັບປະຊາຊົນ, ສະແຫວງຫາຜົນປະໂຫຍດເພື່ອປະຊາຊົນ",ອັນນີ້ບໍ່ພຽງແຕ່ສອດຄ່ອງກັບຜົນປະໂຫຍດຕົ້ນຕໍຂອງປະຊາຊົນຈີນ ອັນໄພສານ ແລະ ກໍສອດຄ່ອງກັບກະແສຄື້ນແຫ່ງການພັດທະນາ ສັງຄົມອະລິຍະທຳຂອງມວນມະນຸດ. ຄົນກໍມີຈິດໃຈແບບນີ້ຄືກັນ,ຄວາມໃກ້ຊິດກັນກໍມີເຫດຜົນຢ່າງນີ້ຄືກັນ. ພາຍຫລັງເກີດໄພແຜ່ນດິນໄຫວອະໜາດໃຫຍ່ຢູ່ເສສວນແລ້ວຄວາມພະຍາຍາມກູ້ໄພ ແລະ ຕ້ານ



ຫ້ອງການຂ່າວຄະນະລັດຖະບານຈີນໄດ້ຈັດງານສຳພາດຂ່າວຄັ້ງທີ28ກ່ຽວກັບໄພພິບາດແຜ່ນດິນໄຫວເວີນຊວນແລະສະພາບການຕ້ານແຜ່ນດິນໄຫວກູ້ໄພ

中国国务院新闻办就汶川地震灾害和抗震救灾情况举行第 28 次新闻发布会

CFP 图

ໄພແຜ່ນດິນໄຫວຂອງຈີນທີ່ເຮັດໃຫ້ຄົນຕື່ນຕັນໃຈຈົນນ້ຳຕາໄຫລນຳນັ້ນ, ບໍ່ພຽງແຕ່ເຮັດໃຫ້ຄົນມີຄວາມຕື່ນຕັນໃຈຕໍ່ຈີນເທົ່ານັ້ນ ແລະ ກໍເຮັດໃຫ້ໂລກມີການປ່ຽນທ່າທີ,ກ້າວເຂົ້າສູ່ເຮັດໃຫ້ໂລກພາຍນອກເພີ່ມຄວາມເຫັນໃຈຕໍ່ຈີນຫລາຍຂຶ້ນຢ່າງວ່ອງໄວ,ໃຫ້ການເຫັນອົກເຫັນໃຈ ແລະ ສະຫນັບສະຫນູນແບບຈິງໃຈແທ້ໆ, ມັນລ້ວນແຕ່ເປັນການແຍກອອກບໍ່ໄດ້ກັບຄວາມບໍລິສຸດໃຈຂອງການເປີດປະຕູສູ່ພາຍນອກຢ່າງສະຫງ່າຜ່າເຜີຍຂອງຈີນ.

ການເປີດປະຕູສູ່ພາຍນອກອີກຕື່ມກ້າວຫນຶ່ງໄດ້ເຮັດໃຫ້ຈີນມີການຕິດພັນກັບໂລກພາຍນອກແຫນ້ນແຟ້ນຍິ່ງຂຶ້ນ ແລະ ໄດ້ເປັນການອັດຊິດປັດໄຈທັນຫນ້າເຂົ້າຫາກັນຢ່າງຕັ້ງຫນ້າເຂົ້າສູ່ຂະບວນວິວັດແຫ່ງການພັດທະນາໂລກາພິວັດຢ່າງວ່ອງໄວທີ່ສຸດ. ຈາກການເພີ່ມຄວາມເຂົ້າໃຈຊຶ່ງກັນແລະກັນໄປສູ່ການສະແດງຄວາມ ຫວັງດີຕໍ່ກັນຢ່າງຕັ້ງຫນ້າ;ຈາກການບຸກເບີກຊ່ອງທາງຮ່ວມມື ຂອງການຊ່ວຍເຫລືອຊຶ່ງກັນແລະກັນໄປສູ່ການຊຸກດັນປ່ຽນແປງການ ພົວພັນລະຫວ່າງປະເທດໂດຍກວມລວມໃຫ້ດີຂຶ້ນ;ຈາກເວລາເມື່ອຕົນໄດ້ປະສົບໄພເຄາະຮ້າຍແລ້ວຮັບເອົາການຊ່ວຍເຫລືອຈາກພາຍ ນອກໄປສູ່ເມື່ອເວລາປະເທດອື່ນປະສົບໄພເຄາະຮ້າຍແລ້ວໃຫ້ການຊ່ວຍເຫລືອຢ່າງຈິງໃຈ,ທັງຫມົດເຫລົ່ານີ້ແມ່ນອນຈະເປັນການຊ່ວຍໃຫ້ມະໂນທຳຂອງປະຊາຄົມໂລກໄດ້ຖືກເສີມຂະຫຍາຍ,ຊຸກຍູ້ ການຫັນເປັນແບບປະຊາທິປະໄຕຂອງການພົວພັນສາກົນແລ້ວກ້າວໄປສູ່ການຊຸກດັນສ້າງໂລກທີ່ຍິ່ງປອງດອງກົມກຽວກັນຂຶ້ນ.

ຈີນທີ່ເປີດປະຕູສູ່ພາຍນອກອີກຕື່ມກ້າວຫນຶ່ງນັ້ນພວມປ່ຽນແປງໂລກ, ໂລກກໍພວມຈັບຕາເບິ່ງຈີນດ້ວຍມຸມມອງອັນໃຫມ່ຢ່າງ ຮອບດ້ານ. ພໍດີຄືກັນກັບຄຳເວົ້າຂອງທ່ານLee Hsien Loongນາຍົກລັດຖະມົນຕີຂອງສິງກະໂປທີ່ໄດ້ກ່າວວ່າ:ນີ້ແມ່ນຈີນໃຫມ່ຢ່າງຮອບດ້ານ ທີ່ໂລກຍັງບໍ່ເຄີຍພົບເຫັນ. ນີ້ເປັນປະເທດຫນຶ່ງທີ່ສະ ແດງອອກຄວາມງາມຂອງບຸກຄະລິກມະນຸດຮ່ວມກັນທີ່ພວມມີການປ່ຽນແປງ, ພວມພົບບັນຫາອັນຫລວງຫລາຍ,ແຕ່ຊ້ຳ ພັດເປັນກຳລັງຄວາມສາມາດທີ່ເປັນປຶກແຜ່ນແຫນ້ນຫນາມີພະລັງອັນມະຫາສານທີ່ຄົນທັງຫລາຍຄາດຄິດບໍ່ເຖິງ. ໄພແຜ່ນດິນໄຫວອະຫນາດໃຫຍ່ຢູ່ເວິນຊວນໄດ້ສະແດງຕໍ່ໂລກວ່າຈີນໄດ້ເກີດມີການປ່ຽນແປງຢ່າງ ໃຫຍ່ ຫລວງປານໃດ, ກໍເຮັດໃຫ້ຄົນທັງຫລາຍມອງເຫັນອະນາຄົດຂອງ ຈີນ, ນັ້ນກໍຄືປະເທດຫນຶ່ງທີ່ເປີດປະຕູສູ່ພາຍນອກກວ້າງກວ່າເກົ່າ ແລະ ຍິ່ງມີຄວາມເຊື່ອຫມັ້ນຕໍ່ຕົນເອງຢ່າງເຕັມເມັດເຕັມຫນ່ວຍ ກວ່າເກົ່າ.



ປະຊາກອນນະຄອນຮາງໂຈວທະຍອຍກັນບໍລິຈາກເລືອດ
杭州市民踊跃献血　新华社 图



ວັດຖຸປະກອນກູ້ໄພຂອງແຂວງເຮີລົງຈຽງຂົນສົ່ງດ່ວນໄປເຂດຖືກໄພພິບາດ
黑龙江省救援物资紧急运往地震灾区　新华社 图



ວັນທີ14ເດືອນ5,ທີ່ກູ້ໄພໂຮງຮຽນມາທະຍົມໄປ່ຊວນກູ້ເອົາຊີວິດນັກຮຽນຍິງຜູ້ຫນຶ່ງອອກມາ
5月14日，北川中学救援现场救出一名女生　周明佳　图










ບໍລິການນຳທ່ຽວພາຍໃນແລະຕ່າງປະເທດ

ບໍລິການຂາຍປີ້ຍົນພາຍໃນແລະຕ່າງປະເທດ

ບໍລິການຂາຍປີ້ລົດໄຟ ລົດບັດໄປປະເທດໄທ,ຫວຽດນາມ

ບໍລິການເຊົ່າລົດເກັ໋ງ ລົດຈິບຖ0. ລົດຕູ້12,15ບ່ອນນັ່ງ ລົດບັດ25,35,45 ບ່ອນນັ່ງ

ບໍລິການແລ່ນວີຊາໄປຕ່າງປະເທດ





ສົນໃຈເຊີນຕິດຕໍ່: ບໍລິສັດທ່ອງທ່ຽວຄຳຫລ້າຈຳກັດ

042/3 ຖະໜົນຟ້າງຸ່ມ ບ້ານມີໄຊ ເມືອງຈັນທະບູລີ

ແຂວງນະຄອນຫລວງວຽງຈັນ ສ.ປ.ປ.ລາວ

Tel/Fax: (856-21) 218677, 218107

Mobile: (856-20) 5606000, 5620161, 5519334

E-mail: khamlatours39@yahoo.com

www.khamla.com

**Inbound Tour**

We provide:

- Tour in Vientiane
- Tour in VangViene
- Tour in Luangprabang
- Tour in Pakze
- Tour in Northern Laos
- Tour in Southern Laos

**Outbound Tour**

We provide:

- Tour to China
- Tour to Malaysia
- Tour to VietNam
- Tour to Cambodia
- Tour to Thailand
- Tour to asia




ຊາວລ້ຽງສັດແລະກະສິກອນທັງໝົດຕິເບດໄດ້ມີການຮັບປະກັນດ້ານການປິ່ນປົວໂດຍແມ່ນການປິ່ນປົວບໍ່ເສຍຄ່າເປັນພື້ນຖານ
西藏所有农牧民享有以免费医疗为基础的医疗保障　新华社 图

# ມວນຊົນເຂດຕິເບດໄດ້ຊົມໃຊ້ແສງສະຫວ່າງຂອງການເງິນສາທາລະນະນັບມື້ນັບຫລາຍ

ພູພຽງຊິ່ນຮາຍ-ຕິເບດທີ່ມີລະດັບນ້ຳທະເລສະເລ່ຍເກືອບ 4000 ແມັດນັ້ນ,ປະຊາຊົນບັນດາເຜົ່າທີ່ດຳລົງຊີວິດໃນແຫ່ງນີ້ພວມໄດ້ຮັບຊົມແສງຕາເວັນທາງການເງິນສາທາລະນະຂອງສູນກາງນັບມື້ນັບຫຼາຍຂຶ້ນ.ໃຕ້ການທີ່ສ່ອງແສງຂອງກ້ອນເມກສີຂາວ ແລະ ຟ້າສີຄາມ, ພູ ແລະ ໜອງທີ່ສັກກາລະບູຊາ, ບົນທົ່ງຫຍ້າອັນກວ້າງໃຫຍ່ໄພສານ, ຢູ່ໃຕ້ແສງແດດອ່ອນ,ງົວຄວາຍ ແລະ ແບ້ແກະພວມຍ່າງຊອກກິນຫຍ້າຢ່າງສະບາຍ, ເພງພື້ນເມືອງທີ່ດັງກ້ອງກັງວານ, ເຫລົ້າທີ່ມີກິ່ນຫອມຈັບໃຈຄົນໄດ້ສົ່ງກິ່ນຫອມໄປທົ່ວທຸກຫົນທຸກແຫ່ງ, ໃບໜ້າຍິ້ມແຍ້ມແຈ່ມໃສ ແລະ ສະ ຫງ່າຜ່າເຜີຍ ແລະ ປອດໃສຂາວສະອາດຂອງປະຊາຊົນຊາວລ້ຽງສັດ, ທັດສະນີຍະພາບເປັນແບບນີ້ລ້ວນແຕ່ສາມາດເຫັນໄດ້ ຢູ່ທຸກຫົນທຸກແຫ່ງຢູ່ຝັ່ງໃຕ້ຂອງໜອງຊິ່ນຮາຍ .

ຊຳນ້ານເປັນຊາວລ້ຽງສັດເຜົ່າຕິເບດຂອງບ້ານເຊັຍກູເຊັຍເຊາະຈິຮ່າຍເມືອງກົ້ງເຮີກົ່ງແຂວງປົກຄອງຕົນເອງເຜົ່າຕິເບດຮາຍນ້ານຝັ່ງໃຕ້ຂອງໜອງຊິ່ນຮາຍແຂວງຊິ່ນຮາຍ. ເຮືອນຂອງເຂົາເປັນເຮືອນ 2 ຊັ້ນວາດຊົງແບບຕິເບດມີເດີ່ນບ້ານອັນກວ້າງ ຂວາງ, ຢູ່ໃນເດີ່ນບ້ານມີລົດຕູ້ນ້ອຍຄັນໜຶ່ງຈອດໄວ້.

ເມື່ອເວົ້າຮອດການປ່ຽນແປງໃນບໍ່ເທົ່າໃດປີທີ່ຜ່ານມາ,ຢູ່ໃນເຮືອນຊຳນ້ານ ເຂົາເຈົ້າໄດ້ນຳໃຊ້ເຕົາແກດທີ່ວາງໄວ້ຢູ່ນອກເຮືອນ,ພໍເປີດເຕົາແກດເຕົາໄຟກໍມີໄຟລຸກຂຶ້ນທ້ອນໆໂລດ.ເຂົາກ່າວວ່າ: "ນີ້ແມ່ນແກດmethane ທີ່ຫາກໍຕໍ່ທໍ່ແກດເຂົ້າມາໃນປີທີ່ແລ້ວ,ທັງສະອາດແລະທັງອະນາໄມ,ແລະກໍບໍ່ສິ້ນເປືອງເງິນ. ຫົນທາງກໍ່ປູດ້ວຍຊີມັງ,ນ້ຳປະປາ,ໄຟຟ້າ,ໂທລະສັບ ແລະ ໂທລະພາບກໍລ້ວນແຕ່ມີທັງສິ້ນ".

ທ່ານເຢີນຊົງປະທານບ້ານໄດ້ເວົ້າຂຶ້ນຢ່າງຕື່ນຕັນໃຈວ່າ: "ບໍ່ເທົ່າໃດປີມານີ້ລັດໃຫ້ການສະໜັບສະໜູນຕໍ່ເຂດລ້ຽງສັດປູກຝັງໃນລະດັບອັນຫລວງຫລາຍສົມຄວນ, ປະຈຸບັນອາກອນກະສິກຳກໍຖືກຍົກເວັ້ນແລ້ວ,ບໍ່ພຽງແຕ່ໂສມໜ້າຂອງຊົນນະບົດພວມ

ມີການປ່ຽນແປງໂຄງສ້າງທາງດ້ານການຜະລິດ ແລະ ການດຳລົງຊີວິດກໍພ້ອມມີການປ່ຽນແປງໃຫ້ດີຂຶ້ນເປັນເທື່ອລະກ້າວ, ຍິ່ງ ສຳຄັນໄປກວ່ານັ້ນຄືການໄປກວດພະຍາດ ແລະ ຊື້ຢາປິ່ນປົວສາມາດຖອນເງິນຄືນໄດ້ຕາມຫຼັງ,ພວກເດັກນ້ອຍເຂົ້າໂຮງຮຽນ ຄ່າຮຽນກໍຖືກຍົກເວັ້ນແລ້ວ".

ທ່ານ ຈ້າວເວີນຊິ່ນ ຫົວໜ້າພະແນກການສຶກສາເມືອງຣາຍອ້ຽນກົງແຂວງປົກຄອງຕົນເອງເຜົ່າຕິເບດຣາຍໄປ່ແຂວງຊິ່ນ ຣາຍໄດ້ກ່າວວ່າ, ພາຍຫຼັງລັດຈັດຕັ້ງປະຕິບັດນະໂຍບາຍ "2 ຍົກ ເວັ້ນ 1 ຊົດເຊີຍ" ແລ້ວ, ເງື່ອນໄຂຂອງການສ້າງໂຮງຮຽນລະບົບກິນນອນຢູ່ເຂດຕິເບດມີການປ່ຽນແປງໃຫ້ດີຂຶ້ນຢ່າງຫຼວງຫຼາຍ,ໄດ້ຍົກເວັ້ນຄ່າໃຊ້ຈ່າຍ ແລະ ຄ່າຮຽນ,ຄ່າປຶ້ມຮຽນຕ່າງໆຂອງນັກຮຽນຊົນເຜົ່າ, ແຕ່ລະເດືອນຍັງຈ່າຍເງິນອຸດໜູນ70ຢວນໃຫ້ແຕ່ລະຄົນອີກ.

ທ່ານເຊີນເຜີງຫົວໜ້າຂະແໜງງົບປະມານຂອງພະແນກການເງິນແຂວງຊິ່ນຣາຍໄດ້ເວົ້າວ່າ: "ບໍ່ເທົ່າໃດປີມານີ້,ລະດັບການສະໜັບສະໜູນຕໍ່ເຂດຕິເບດຂອງການເງິນສູນກາງແຕ່ລະປີໄດ້ເພີ່ມຂຶ້ນໃນອັດຕາສ່ວນອັນຫລວງຫລາຍ,ສະມັດຖະພາບການບໍລິການສາທາລະນະດ້ານການເງິນໄດ້ເພີ່ມຂຶ້ນຢ່າງບໍ່ຢຸດຢັ້ງ, ອອກແຮງຍາດແຍ່ງໃຫ້ແສງສະຫວ່າງຂອງການເງິນສາທາລະນະສ່ອງແສງໄປທົ່ວທຸກຈຸດທຸກມຸມ".

ຢູ່ຕິເບດ, ເຖິງຈະແມ່ນຢູ່ຊົນນະບົດ,ກໍຈະສາມາດເຫັນໄດ້ຊາວກະສິກອນ ແລະ ຜູ້ລ້ຽງສັດມີໂທລະສັບມືຖື. ເລື່ອງຂີ່ລົດຈັກໄປລ້ຽງສັດຢູ່ຕາມທົ່ງຫຍ້າ,ຂັບລົດບັນທຸກໄປລຳລຽງຂົນສົ່ງ, ຂັບລົດເກງໄປຄ້າຂາຍນັ້ນ,ຢູ່ທ້ອງຖິ່ນດັ່ງກ່າວສາມາດເຫັນໄດ້ທຸກຫົນທຸກແຫ່ງ.

ທ່ານຈະຊີປະທານຄະນະກຳມະການບ້ານບ້ານກ່າມ່າເມືອງປໍ່າສຸຂອງຕິເບດຕາເວັນອອກໄດ້ແນະ ນຳໃຫ້ນັກສື່ຂ່າວຮູ້ວ່າ: ກ່ອນໜ້ານີ້ 5 ປີນັບແຕ່ວິສະວະກຳການປັບປຸງທາງຫຼວງແຫ່ງຊາດເລກທີ່ 318 ຊຶ່ງໄດ້ຜ່ານບ້ານໄປນັ້ນໄດ້ເລີ່ມລົງມືກໍ່ສ້າງເປັນຕົ້ນມາ, ທົ່ວບ້ານ 71 ຄອບຄົວລ້ວນແຕ່ໄດ້ເຂົ້າຮ່ວມການກໍ່ສ້າງທາງຫລວງ, ສະເລ່ຍເພີ່ມລາຍຮັບແຕ່ລະຄອບຄົວມີເຖິງ40ພັນກວ່າຢວນຕໍ່ປີ. ປະຈຸບັນ, 70% ຂອງຄອບຄົວໃນບ້ານນີ້ໄດ້ປຸກເຮືອນໃໝ່ ແລະ ມີ 51 ຄອວຄົວໄດ້ຊື້ລົດຍົນມາແລ່ນເພື່ອເຮັດການຂົນສົ່ງ.

ທ່ານປູຍທິນສາຍຮອງຫົວໜ້າພະແນກການເງິນຂອງເຂດປົກຄອງຕົນເອງຕິເບດໄດ້ແນະນຳວ່າ: ໃນໄລຍະປະຕິບັດ "ແຜນພັດທະນາ 5 ປີເທື່ອທີ10" ເງິນທຶນອຸດໜູນທາງການເງິນທີ່ໄດ້ຮັບຜົນໂດຍກົງຂອງຊາວກະສິກອນ ແລະ ຜູ້ລ້ຽງສັດໃນຕິເບດແຕ່ລະຄົນແຕ່ລະປີສະເລ່ຍແມ່ນປະມານ400ຢວນ,ລູກຫຼານຊາວກະສິກອນ ແລະ ຜູ້ລ້ຽງສັດໄດ້ຮັບການສຶກສາພາກບັງຄັບດ້ວຍມາດຕະຖານ "3 ເໝົາຂາດ" ຈາກສະເລ່ຍຕໍ່ຄົນຕໍ່ປີ 700 ຢວນຍົກຂຶ້ນມາເປັນ 1000 ຢວນ; ກິດຈະການການກະຈາຍສຽງ ແລະ ໂທລະພາບຂອງເຂດກະສິກຳ ແລະ ລ້ຽງສັດ "ບ້ານໃດກໍໂລ່ງຫາກັນ" ແລະ "ໂຄງການວິສະວະກຳກໍ່ສ້າງຕິເບດໃໝ່" ໄດ້ຈັດຕັ້ງປະຕິບັດຢ່າງສະດວກ, ອັດຕາສ່ວນຂອງກິດຈະການການກະຈາຍສຽງ ແລະ ໂທລະພາບປົກຄຸມໃນປະຊາກອນໄດ້ບັນລຸ 85% ຂຶ້ນໄປ, ໄດ້ສ້າງຕາໜ່າງສາທາລະນະສຸກຂັ້ນຕົ້ນຂອງເຂດກະສິກຳ ແລະ ການລ້ຽງສັດຂຶ້ນໃນເບື້ອງຕົ້ນ,ພະຍາດຕິດແປດ ແລະ ພະຍາດລັກສະນະທ້ອງຖິ່ນໄດ້ຖືກຄວບຄຸມຢ່າງມີຜົນສັກສິດ,ມາດຕະຖານການປະກັນໄພປິ່ນປົວດ້ວຍການຍົກເວັ້ນການເກັບຄ່າຕໍ່ຊາວກະສິກອນ ແລະຜູ້ລ້ຽງສັດຈາກສະເລ່ຍ ຕໍ່ຄົນຕໍ່ປີ 40 ຢວນໃນເມື່ອກ່ອນຍົກຂຶ້ນມາເປັນ 80 ຢວນໃນປະຈຸບັນ; ມາດຕະຖານການລ້ຽງດູ "ຄອບຄົວ 5 ຮັບປະກັນ" ຂອງເຂດກະສິກຳ ແລະ ລ້ຽງສັດຈາກ 588 ຢວນຕໍ່ຄົນຕໍ່ປີໃນເມື່ອກ່ອນ ຍົກຂຶ້ນມາເປັນ 1300 ຢວນ.

ນັບແຕ່ທົດສະວັດຊຸມປີ 80 ຂອງສະຕະວັດກ່ອນພຸ້ນມາ, ຕິເບດກໍໄດ້ຖືກຍົກເວັ້ນເກັບອາກອນກະສິກຳ ແລະ ການລ້ຽງສັດໃນຂອບເຂດທົ່ວທັງເຂດ, ຊາວກະສິກອນ ແລະ ຜູ້ລ້ຽງສັດຢູ່ທ້ອງຖິ່ນຫຍຸ້ງຍາກກັນດານຍັງໄດ້ຮັບນະໂຍບາຍຍົກເວັ້ນຄ່າປິ່ນປົວ ແລະ ຍົກເວັ້ນຄ່າສຶກສາ. ລະດັບທ່າອຽງຂອງການຈ່າຍໂຍກຍ້າຍການເງິນຂອງສູນກາງໃຫ້ແກ່ຕິເບດນັບປີນັບຫຼາຍຂຶ້ນ. ແຜນການ 5 ປີຄັ້ງຕໍ່ໄປ, ລັດຖະບານຈີນຍັງຈະປະກອບເງິນ 100 ຕື້ຢວນລົງໃສ່ຕິເບດເພື່ອໃຊ້ເຂົ້າໃນການພັດທະນາເຂດດັ່ງກ່າວ.

# ພ້ອມກັນຊອກຄົ້ນຫາກາລະ ໂອກາດ ແລະ ການທ້າທາຍ

## ---ເວທີປາໄສກິດຈະການການຄ້າອາຊີໃຕ້ຄັ້ງທີ3 ໄດ້ຈັດຂຶ້ນຢູ່ທີ່ຄຸນມິງ



ຜູ້ແທນທີ່ເຂົ້າຮ່ວມກອງປະຊຸມນັ້ນຕັ້ງໜ້າຟັງຄຳປາໄສ
与会代表认真听取讲话　苏雯雯　图

### 共探机遇和挑战

### ——第三届南亚商务论坛在昆明举行

文 / 苏雯雯

以“ 机遇和挑战 ”为主题的第三届南亚商务论坛于 6 月 5 日在昆明举行。300 余位来自中国及南亚八国的政界、商界、学术界代表参会，他们就中国与南亚国家经济合作中所面临的机遇和挑战各抒己见，坦诚交流。

ເວທີປາໄສກິດຈະການການຄ້າອາຊີໃຕ້ຄັ້ງທີ 3 ດ້ວຍຫົວຂໍ້ "ກາລະໂອກາດ ແລະ ການທ້າທາຍ" ໄດ້ ຈັດຂຶ້ນຢູ່ທີ່ຄຸນມິງໃນວັນທີ່ 5 ມິ ຖຸນານີ້. ມີຜູ້ແທນໃນວົງການການເມືອງ, ວົງການການຄ້າ ແລະ ວົງການວິຊາການທີ່ມາຈາກຈີນ ແລະ 8 ປະເທດອາຊີໃຕ້ 300 ກວ່າທ່ານໄດ້ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້,ພວກທ່ານ ທັງຫຼາຍຕໍ່ການປະເຊີນໜ້າຂອງກາລະໂອກາດ ແລະ ການທ້າ ທາຍໃນການຮ່ວມມືເສດຖະກິດລະຫວ່າງຈີນກັບບັນດາປະເທດອາຊີໃຕ້ຕ່າງໄດ້ປະກອບຄຳຄິດຄຳເຫັນຂອງຕົນ ແລະ ແລກປ່ຽນດ້ວຍ ຄວາມຈິງໃຈຊຶ່ງກັນແລະກັນ.

ທ່ານ ຫວ້ານຈິເຝີຍ ປະທານສະມາຄົມສົ່ງເສີມການຄ້າຂອງຈີນໄດ້ກ່າວຄຳປາໄສໃນພິທີເປີດກອງປະຊຸມວ່າ: ປະຈຸບັນຂະບວນວິວັດແຫ່ງການຫັນເປັນໂລກາພິວັດ ແລະ ການຫັນເປັນອົງປະກອບດຽວກັນດ້ານເສດຖະກິດຂອງພາກພື້ນໄດ້ເລັ່ງລັດໄວຂຶ້ນອີກກ້າວໜຶ່ງ,ຂົງເຂດການຮ່ວມມືເສດຖະກິດການຄ້າລະຫວ່າງຈີນ ກັບປະເທດອາຊີໃຕ້ໄດ້ຂະຫຍາຍກວ້າງອອກ ຢ່າງຕໍ່ເນື່ອງ. "ເວທີປາໄສກິດຈະການການຄ້າຈີນ-ອາຊີໃຕ້" 2ຄັ້ງທີ່ຜ່ານມາ, ຜູ້ແທນຂອງບັນດາປະເທດໄດ້ພ້ອມກັນປຶກສາຫາລືຮູບແບບແລະວິທີການຂອງຂົງເຂດພັດທະນາການຮ່ວມມືກິດຈະການການຄ້າລະຫວ່າງຈີນກັບພາກພື້ນອາຊີໃຕ້,ພ້ອມທັງໄດ້ດຳເນີນການແລກປ່ຽນດ້ວຍການເຮັດແທ້ທຳຈິງຢ່າງກວ້າງຂວາງກ່ຽວກັບຈະເພີ່ມ ທະວີການຮ່ວມມືເສດຖະກິດການຄ້າທະວິພາຄີ ແລະ ພະຫຸພາຄີ ດ້ວຍວິທີໃດ, ມັນໄດ້ເປັນການສ່ອງແສງເຖິງຄວາມມຸ່ງໝາດປາຖະໜາອັນແຮງກ້າຂອງບັນດາປະເທດແລະເຂດແຄ້ວນຂອງ ການເພີ່ມທະວີການຮ່ວມມື ແລະສະແຫວງຫາເອົາຊະນະຮ່ວມກັນຂອງພາກພື້ນດັ່ງກ່າວຢ່າງເຕັມທີ່. ທ່ານປະທານສະມາຄົມ ຫວ້ານ ຈີ້ເຝີຍ ຍັງມີຄວາມປາຖະໜາຢາກໃຫ້ແຕ່ລະຝ່າຍໃຫ້ເອົາເວທີປາ ໄສເປັນຈຸດຫົວລ້ຽວຫົວຕໍ່ໃນການເພີ່ມທະວີການຮ່ຳຮຽນແລະລຸໂລ່ງຊຶ່ງກັນແລະກັນ, ຄົ້ນຫາແນວຄວາມຄິດການພັດທະນາຮ່ວມກັນເພື່ອສະແຫວງຫາ ການຮ່ວມມືໃຫ້ຫຼາຍກວ່າເກົ່າ.

ໃນຄຳປາໄສພິທີເປີດກອງປະຊຸມເວທີປາໄສຂອງທ່ານລໍ້ເຈີ້ນຟູ້ຮອງເຈົ້າແຂວງຜູ້ປະຈຳການວົງການປົກຄອງປະຊາຊົນແຂວງຢຸນນານນັ້ນ ທ່ານໄດ້ຊີ້ອອກວ່າ: ຈີນ ແລະ ພາກພື້ນອາ

ຊີໃຕ້ ໄດ້ເລີ່ມກາຍເປັນຂົງເຂດເສດຖະກິດທີ່ມີກຳລັງທີ່ມີຊີວິດຊີວາທີ່ສຸດ ແລະ ເພີ່ມຂຶ້ນໄວທີ່ສຸດຂອງໂລກ , ການເຊື່ອມຕໍ່ ແລະ ໂລ່ງຫາກັນລະຫວ່າງ 2 ຕະຫລາດໃຫຍ່ນັບມື້ນັບສະແດງຄວາມສຳຄັນຂອງມັນອອກມາ,ແຂວງຢຸນນານໄດ້ພັນຂະຫຍາຍແລະເຮັດໃຫ້ນະໂຍບາຍຕໍ່ຕ່າງປະເທດຂອງລັດຖະບານຈີນແທດເຖິງຕົວຈິງ,ໄດ້ຊຸກຍູ້ການຮ່ວມມືຈີນ-ອາຊີໃຕ້ຢ່າງຕັ້ງໜ້າແລະ ເຮັດແທ້ທຳຈິງ, ຍາດໄດ້ຄວາມຄືບໜ້າຂອງການສ້າງທາງຜ່ານ, ສ້າງດ່ານສາກົນ, ເສດຖະກິດສະຖານທີ່ກອງປະຊຸມ ແລະ ວາງສະແດງ,ການສຶກສາ ແລະ ການແລກປ່ຽນວັດທະນະທຳ, ການຮ່ວມມືເສດຖະກິດການຄ້າ ແລະ ອື່ນໆ,ພ້ອມກັນນັ້ນຢຸນນານຍັງຈະສືບຕໍ່ນຳໃຊ້ທ່າແຮງຂອງທີ່ຕັ້ງເປັນແນວໜ້າການເປີດປະຕູສູ່ ອາຊີໃຕຂອງຈີນໃຫ້ໄດ້ຮັບຜົນດີຂຶ້ນກວ່າເກົ່າ,ເພີ່ມລະດັບຄວາມ ແຮງການຮ່ວມມືກັບພາກພື້ນອາຊີໃຕ້,ພະຍາຍາມສ້າງຢຸນນານໃຫ້ກາຍເປັນຂົວຕໍ່ອັນສຳຄັນຂອງການເຊື່ອມຕໍ່ລະຫວ່າງຈີນກັບພາກ ພື້ນອາຊີໃຕ້ເພື່ອປະກອບສ່ວນໃໝ່ ແລະ ຍິ່ງຫຼາຍກວ່າເກົ່າໃຫ້ ແກ່ການຊຸກດັນການຮ່ວມມື ແລະ ແລກປ່ຽນລະຫວ່າງຈີນກັບຂົງເຂດອາຊີໃຕ້.

ເນື້ອໃນຂອງວາລະ "ເວທີປາໄສກິດຈະການການຄ້າຈີນ-ອາຊີໃຕ້ຄັ້ງທີ 3" ປະກອບດ້ວຍ 4 ດ້ານຄື: ການຮ່ວມມືເສດຖະກິດຈີນ-ອາຊີໃຕ້ໃນວິໄສທັດໂລກາພິວັດ, ເຮັດໃຫ້ສະພາບແວດລ້ອມການລົງທຶນທັນເປັນແບບດີເລີດ ແລະ ຊຸກຍູ້ຮ່ວມມືດ້ານກິດຈະກຳການຜະລິດ, ບົດບາດ ແລະ ຄຸນປະໂຫຍດຂອງສະມາຄົມການຄ້າ ແລະ ອົງກອນສົ່ງເສີມການຄ້າຕໍ່ການຊຸກຍູ້ການຄ້າທັນເປັນແບບອຳນວຍຄວາມສະດວກ ແລະການຮ່ວມມືເສດຖະກິດພາກພື້ນ, ກໍ່ສ້າງຄົມມະນາຄົມ ແລະ ການຈໍລະຈອນສິ່ງຂອງສາກົນຈີນ-ອາຊີໃຕ້. ເວທີປາໄສຄັ້ງນີ້ເປັນຄັ້ງໜຶ່ງທີ່ມີຄະນະຜູ້ແທນ 8 ປະເທດຂອງອາຊີໃຕ້ ແລະແຂກທຸລະກິດຂັ້ນສູງອາຊີໃຕ້ 100 ກວ່າທ່ານມາເຂົ້າຮ່ວມ ແລະ ຊຸກຍູ້ໃຫ້ກາຍເປັນການຮ່ວມມືຫຼາຍໂຄງການ, ຊຶ່ງເປັນງານມະໂຫລານທີ່ມີຜົນສະທ້ອນທາງສາກົນຂ້ອນຂ້າງຫຼາຍ.



ທີ່ປະຊຸມປາຖະກະຖາການຄ້າລະຫວ່າງຈີນກັບອາຊີໃຕ້ຄັ້ງທີ3
第三届中国—南亚商务论坛现场 黄雪飞 图

### 首届“GMS 经济走廊论坛”在昆明举办

文、图 / 苏雯雯

由中国国务院温家宝总理今年 3 月 31 日在老挝万象出席“GMS 经济合作第三次领导人会议”时倡议成立的“GMS 经济走廊论坛”，经云南省积极争取，首届论坛获准落户昆明，并于 6 月 6 日在昆交会期间举办。GMS 经济走廊论坛的设立极大地弥补了现有机制的不足，必将推动大湄公河次区域经济合作向更深、更广的领域发展。

# "ເວທີປາໄສແລວທາງເສດຖະກິດGMS" ຄັ້ງທຳອິດໄດ້ຈັດຂຶ້ນ ຢູ່ທີ່ຄຸນມິງ

"ເວທີປາໄສແລວທາງເສດຖະກິດGMS" ຊຶ່ງແມ່ນພະນະທ່ານເວີຍເຈ່ຍປາວນາຍົກລັດຖະມົນຕີຈີນສະເໜີລິເລີ່ມສ້າງຂຶ້ນໃນເວລາເຂົ້າຮ່ວມ "ກອງປະຊຸມສຸດຍອດການຮ່ວມມືເສດຖະກິດGMSຄັ້ງທີ 3" ທີ່ຈັດຂຶ້ນຢູ່ນະຄອນຫລວງວຽງຈັນ ສປປລາວຄັ້ງວັນທີ 31 ມີນາຂອງປີນີ້, ຜ່ານການຍາດແຍ່ງຢ່າງຕັ້ງໜ້າຈາກແຂວງຢຸນນານ,ເວທີປາໄສຄັ້ງທຳອິດໄດ້ຮັບອະນຸຍາດຈັດຂຶ້ນຢູ່ທີ່ຄຸນມິງ ແລະ ຈັດຂຶ້ນໃນໄລຍະງານນິທັດສະການແລກປ່ຽນຊື້-ຂາຍສິນຄ້າຂາເຂົ້າ-ຂາອອກທີ່ຄຸນມິງຄັ້ງວັນທີ 6 ມິຖຸນາ.

ທ່ານ ເຊີນເຕີ້ມິງ ລັດຖະມົນຕີກະຊວງການຄ້າສປ ຈີນ, ທ່ານ ຊິ່ນກ່ວງຢົງ ຮອງເລຂາຄະນະກຳມະການພັກກອມມູນິດຈີນແຂວງຢຸນນານ, ເຈົ້າແຂວງແຂວງຢຸນນານ,ພະນະທ່ານສົມສະຫວາດ ເລັ່ງສະຫວັດຮອງນາຍົກລັດຖະມົນຕີຜູ້ປະຈຳການລັດຖະບານສປປ ລາວ, ທ່ານ Klausຕາງໜ້າທະນາຄານພັດທະນາອາຊີໄດ້ເຂົ້າຮ່ວມພິທີເປີດກອງປະຊຸມ ແລະ ກ່າວຄຳປາໄສ.

"ເວທີປາໄສແລວທາງເສດຖະກິດGMS" ຄັ້ງທຳອິດໂດຍແມ່ນກະຊວງການຄ້າ ແລະ ອົງການປົກຄອງແຂວງຢຸນນານເປັນເຈົ້າພາບຈັດຂຶ້ນ ແລະ ທະນາຄານພັດທະນາອາຊີເປັນຜູ້ອຸປະຖຳຄັ້ງນີ້ໄດ້ເຊື້ອເຊີນເອົາລັດຖະມົນຕີ 10 ທ່ານຂອງ 6 ປະເທດຂອງອະນຸພາກພື້ນແມ່ນ້ຳຂອງ, ເຈົ້າແຂວງ 17 ທ່ານ, ເຈົ້າຄອງນະຄອນ 17 ທ່ານ ແລະ ເຈົ້າໜ້າທີ່ຊັ້ນສູງ 123 ທ່ານຂອງອະນຸພາກພື້ນແມ່ນ້ຳຂອງ, ນອກນັ້ນຍັງເຊື້ອເຊີນຜູ້ຕາງໜ້າຂອງ ອົງການຈັດຕັ້ງສາກົນ, ວົງການວິຊາການ ແລະ ວົງການອຸດສາຫະກຳການຄ້າເປັນຕົ້ນລວມ 500 ທ່ານເຂົ້າຮ່ວມງານເວທີປາໄສຄັ້ງນີ້.

ງານເວທີປາໄສຄັ້ງນີ້ໂດຍເອົາ "ສະເໜີພາບຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະ ການຮ່ວມມື,ພັດທະນາຢ່າງໝັ້ນທ່ຽງ ແລະ ຍືນຍົງ" ເປັນຫົວຂໍ້ໂດຍເນັ້ນໜັກໃສ່ການເຂົ້າໃຈແຈ້ງຕໍ່ ພາລະໜ້າທີ່, ລິເລີ່ມສ້າງກົນໄກນຳໃຊ້ມາດຕະການ3ດ້ານດັ່ງ ກ່າວມາສ້າງກົນໄກທີ່ມີປະສິດທິຜົນຍາວນານຂອງເວທີປາໄສແລວທາງເສດຖະກິດGMS, ຍົກລະດັບຊັ້ນລຳດັບຂອງການຮ່ວມມືເສດຖະກິດ GMS, ເພີ່ມທະວີການປະສານງານຊຶ່ງກັນ ແລະກັນ ແລະ ການແລກປ່ຽນຄຳສະເໜີຂອງອົງການປົກຄອງທ້ອງຖິ່ນໃນເຂດແຄ້ວນ ແລະ ວິສາຫະກິດGMSທີ່ລຽບຕາມແລວທາງເສດຖະກິດ.

ເວທີປາໄສຄັ້ງທຳອິດນອກຈາກເວທີປາໄສຕົ້ນຕໍແລ້ວ,ຍັງຈັດໃຫ້ມີເວທີປາໄສເຈົ້າແຂວງ ແລະ ເວທີປາໄສການພັດທະນາຕົວເມືອງຊາຍແດນຊຶ່ງເປັນເວທີປາໄສຍ່ອຍ 2ເວທີຂຶ້ນ,ອົງ




ພິທີເປີດປາຖະກະຖາແລວທາງເສດຖະກິດGMS
GMS 经济走廊论坛开幕式

ການປົກຄອງທ້ອງຖິ່ນແຕ່ລະປະເທດ ແລະ ບຸກຄົນໃນວົງການອຸດສາຫະກຳການຄ້າໄດ້ສະເໜີຄຳຄິດຄຳເຫັນກ່ຽວກັບບັນຫາການຮ່ວມມືຂອງແລວທາງເສດຖະກິດໃນອະນາຄົດ. ສຸດທ້າຍບັນດາຝ່າຍທີ່ເຂົ້າຮ່ວມເວທີປາໄສໄດ້ບັນລຸ "ຄວາມຮັບຮູ້ເປັນເອກະ ພາບຄຸນມິງ" ໄດ້ປະກາດສ້າງຕັ້ງເວທີປາໄສແລວທາງເສດຖະກິດຂຶ້ນຢ່າງເປັນທາງການ, ພ້ອມທັງໄດ້ຮັບຮອງເອົາເນື້ອໃນຕົ້ນຕໍຂອງ "ແຜນການການເຄື່ອນໄຫວຍຸດທະສາດການພັດທະນາແລວ ທາງເສດຖະກິດໃຕ້-ເໜືອ",ຂອບເຂດສິດໜ້າທີ່ຂອງເວທີປໄສແລວທາງເສດຖະກິດ ແລະ ເວທີປາໄສເຈົ້າແຂວງ.

ນັບແຕ່ກອງປະຊຸມ "ຜູ້ນຳການຮ່ວມມືເສດຖະກິດGMS ຄັ້ງທີ 2" ໄດ້ຈັດຂຶ້ນແຕ່ປີ 2005 ເປັນຕົ້ນມາ, ການສ້າງສາໂຄງລ່າງພື້ນຖານໃນຂົງເຂດທາງຫລວງ, ທາງລົດໄຟ, ທາງນ້ຳ ແລະ ທາງອາກາດຂອງແຕ່ລະປະເທດGMS ຍາດໄດ້ຜົນງານທີ່ທົ່ວທັງໂລກຈັບຕາມອງ, ໂດຍສະເພາະແມ່ນການຈັດຕັ້ງປະຕິບັດ ແລະ ເຮັດໃຫ້ແທດເຖິງຕົວຈິງອີກຕື່ມກ້າວໜຶ່ງຂອງ "ຂອບປະຕິ ບັດງານຍຸດທະສາດທັນເປັນແບບອຳນວຍຄວາມສະດວກແກ່ການຄ້າການລົງທຶນGMS", ໄດ້ເປັນການສ້າງເງື່ອນໄຂທີ່ມີຜົນດີທີ່ ສຸດໃຫ້ແກ່ການສ້າງແລວທາງເສດຖະກິດ, ຫັນປ່ຽນ "ແລວທາງຄົມມະນາຄົມ" ກາຍມາເປັນ "ແລວທາງເສດຖະກິດ", ຈະສ້າງເຂດເສດຖະກິດເພີ່ມຂຶ້ນໃໝ່ຂອງGMS ແລະ ສ້າງກົນໄກອັນ ຍາວນານ, ມີປະສິດທິຜົນສູງ ແລະ ເຮັດແທ້ທຳຈິງໃຫ້ແກ່ແລວທາງດັ່ງກ່າວດ້ວຍວິທີໃດ,ເຮັດໃຫ້ບັນດາປະເທດແລະເຂດແຄ້ວນຢູ່ລຽບແລວທາງໄດ້ຮັບຜົນປະໂຫຍດ, ມັນໄດ້ເປັນບັນຫາສຳຄັນອັນໜຶ່ງຂອງລັດຖະບານ ແລະ ວົງການອຸດສາຫະກຳການຄ້າ ຂອງບັນດາປະເທດທີ່ໃຫ້ຄວາມສົນໃຈແລະເອົາໃຈໃສ່ທົ່ວໄປຕະ ຫລອດ. ປະຈຸບັນຢູ່ພາຍໃນຂອບການຮ່ວມມືGMSມີກອງປະຊຸມ ສຸດຍອດຜູ້ນຳ, ກອງປະຊຸມຂັ້ນລັດຖະມົນຕີ, ກອງປະຊຸມເຈົ້າໜ້າ ທີ່ຊັ້ນສູງ ແລະ ກອງປະຊຸມທີມງານຂອງGMS ເປັນຕົ້ນແຕ່ ບໍ່ມີອົງກອນສະເພາະກິດໃດໜຶ່ງມາດຳເນີນການຊຸກຍູ້ການຮ່ວມມື ພັດທະນາແລວທາງເສດຖະກິດແລະຊຸກດັນໃຫ້ອົງການປົກຄອງທ້ອງຖິ່ນແລະວິສາຫະກິດເຂົ້າຮ່ວມອົງກອນດັ່ງກ່າວ.

ວັນທີ31 ມີນາປີ2008,ນາຍົກລັດຖະມົນຕີເວີຍເຈ່ຍປາວຂອງຈີນໄດ້ເຂົ້າຮ່ວມ "ກອງປະຊຸມຜູ້ນຳຄັ້ງທີ 3 ຂອງGMS" ທີ່ຈັດຂຶ້ນຢູ່ນະຄອນຫລວງວຽງຈັນ ສປປ ລາວ, ພ້ອມທັງໄດ້ກ່າວຄຳປາໄສທີ່ມີຫົວຂໍ້ວ່າ: "ສາຍຮັດແໜ້ນການຮ່ວມມື,ຖິ່ນຖານບ້ານຊ່ອງຮ່ວມກັນ" ໃນການກ່າວຄຳປາໄສນັ້ນຝ່າຍຈີນ ໄດ້ລິເລີ່ມສະເໜີສ້າງ "ແລວທາງເສດຖະກິດGMS" ແລະ ດູດດຶງເອົາຕົວເມືອງ ແລະ ວິສາຫະກິດລຽບຕາມແລວທາງມີສ່ວນຮ່ວມຢ່າງຕັ້ງໜ້າ,ເພື່ອເປັນການຊຸກຈູງການຄ້າ,ການລົງທຶນແລະການຮ່ວມມືກິດຈະກຳການຜະລິດລຽບຕາມແລວທາງໃຫ້ມີການພັດທະນາ ແລະ ໃຫ້ກາຍເປັນເຂດເພີ່ມຂຶ້ນທາງເສດຖະກິດທີ່ເອົາແລວທາງຄົມມະນາຄົມເປັນໃຈກາງ,ເອົາແລວທາງຄົມມະນາຄົມຫັນປ່ຽນເປັນແລວທາງເສດຖະກິດຢ່າງແທ້ຈິງ. ເພື່ອຊຸກດັນການ ຮ່ວມມື GMSໃຫ້ເກີດປະສິດທິຜົນອັນແທ້ຈິງໃຫ້ໄວເທົ່າທີ່ຈະໄວໄດ້,ຜ່ານການອະນຸມັດຈາກຄະນະລັດຖະບານຈີນ, ກະຊວງການຄ້າ ແລະອຳນາດການປົກຄອງແຂວງຢຸນນານຂອງຈີນໄດ້ ກຳນົດເອົາໄລຍະຈັດໃຫ້ມີນິທັດສະການການແລກປ່ຽນຊື້-ຂາຍສິນ ຄ້າຂາເຂົ້າ- ຂາອອກຄັ້ງທີ16 ໃນວັນທີ່ 6-7 ມິຖຸນາປີ 2008 ຈັດໃຫ້ມີ "ເວທີປາໄສແລວທາງເສດຖະກິດGMSຂຶ້ນ.

ການສ້າງເວທີປາໄສແລວທາງເສດຖະກິດ GMSນັ້ນ, ແມ່ນອນຈະເຮັດໃຫ້ການບໍ່ພຽງພໍຂອງກົນໄກທີ່ມີຢູ່ໃນປະຈຸບັນໄດ້ເພີ່ມຂຶ້ນຢ່າງຫລວງຫລາຍ, ຊຸກດັນການຮ່ວມມືເສດຖະກິດອະນຸພາກພື້ນແມ່ນ້ຳຂອງໃຫ້ພັດທະນາໄປທາງຂົງເຂດທີ່ຍິ່ງເລິກເຊິ່ງແລະຍິ່ງກວ້າງຂວາງກວ່າເກົ່າ.

# ເວທີປາໄສນັກທຸລະກິດຈີນຕ່າງດ້າວອາຊີປາຊີຟິກ ຄັ້ງທີ 6 ຈັດຂຶ້ນຢູ່ຄຸນມິງ

## 第六届亚太华商论坛在昆明举行

文 / 刘江林

6月5日，由中国国务院侨务办公室和云南省人民政府共同主办的“第六届东盟华商投资西南项目推介会暨亚太华商论坛”在中国昆明国际会展中心举行。自2003年首次举办以来，作为一项重要的涉侨国际性经贸活动，推介会与论坛已成为西南地区特别是云南与海外华商增进了解、扩大交流、共谋发展的重要平台。

"ກອງປະຊຸມແນະນຳນັກທຸລະກິດຈີນຕ່າງດ້າວອາຊຽນລົງທຶນໃນໂຄງການພາກຕາເວັນຕົກສ່ຽງໃຕ້ຄັ້ງທີ 6ແລະ ເວທີປາໄສນັກທຸລະກິດຈີນຕ່າງດ້າວອາຊີປາຊີຟິກ"ຊຶ່ງແມ່ນຫ້ອງວ່າການກິດຈະການຊາວຈີນຕ່າງດ້າວຂອງຄະນະລັດຖະບານຈີນ ແລະ ອຳນາດການປົກຄອງປະຊາຊົນແຂວງຢຸນນານເປັນເຈົ້າພາບຈັດຂຶ້ນໃນວັນທີ 5 ມິຖຸນາທີ່ສູນກອງປະຊຸມແລະວາງສະແດງສາກົນຄຸນມິງ ສປ ຈີນ. ນັບແຕ່ກອງປະຊຸມແນະນຳ ແລະ ເວທີປາໄສດັ່ງກ່າວໄດ້ຈັດຂຶ້ນເປັນຄັ້ງທຳອິດໃນປີ 2003 ເປັນ ຕົ້ນມາ, ຊຶ່ງເປັນກິດຈະກຳເຄື່ອນໄຫວເສດຖະກິດ




ກອງປະຊຸມນຳສະເໜີໂຄງການຕາເວັນຕົກສຽງໃຕ້ໃນການລົງທຶນຂອງນັກທຸລະກິດຊາວຈີນຕ່າງດ້າວອາຊຽນຄັ້ງທີ6ແລະທີ່ປະຊຸມປາຖະກະຖານັກທຸລະກິດຊາວຈີນຕ່າງດ້າວອາຊີປາຊີຟິກ
第六届东盟华商投资西南项目推介会暨亚太华商论坛现场　刘江林　图

ການຄ້າສຳຄັນ ທີ່ມີລັກສະນະສາກົນ ແລະ ກ່ຽວພັນເຖິງຊາວຈີນຕ່າງດ້າວນັ້ນ, ກອງປະຊຸມແນະນຳ ແລະ ເວທີປາໄສໄດ້ກາຍເປັນເວທີສຳຄັນ ຂອງພາກພື້ນຕະເວັນຕົກສ່ຽງໃຕ້ໂດຍສະເພາະແມ່ນການເພີ່ມທະວີ ຄວາມເຂົ້າໃຈຊຶ່ງກັນແລະກັນ,ຂະຫຍາຍກວ້າງການແລກປ່ຽນ ແລະ ພ້ອມກັນສະແຫວງຫາການພັດທະນາລະຫວ່າງຢຸນນານກັບນັກທຸລະກິດຈີນຕ່າງດ້າວຢູ່ຕ່າງປະເທດ. ກອງປະຊຸມໃຫຍ່ຄັ້ງ ນີ້ມີຜູ້ຊົງຄຸນວຸດທິຊາວຈີນຕ່າງດ້າວ ແລະ ນັກທຸລະກິດຈີນຕ່າງດ້າວ ຢູ່ຕ່າງປະເທດ 20ກວ່າປະເທດ ແລະ ເຂດແຄ້ວນ ແລະ ຜູ້ແທນ 350ກວ່າທ່ານມາເຂົ້າຮ່ວມ, ເປັນກອງປະຊຸມຄັ້ງໜຶ່ງທີ່ມີຂະ ໜາດໃຫຍ່ ແລະ ມີຈຳນວນຄົນເຂົ້າຮ່ວມຫລາຍກວ່າທຸກໆຄັ້ງ,ໄດ້ກາຍເປັນຂົວຕໍ່ ແລະ ຂອດຜູກພັນການລົງທຶນ ແລະ ມີສ່ວນຮ່ວມ ຂອງນັກທຸລະກິດຈີນຕ່າງດ້າວເຂົ້າໃສ່ການພັດທະນາສ້າງສາຢຸນນານ.

ນັບແຕ່ເຂດການຄ້າເສລີຈີນ-ອາຊຽນໄດ້ຖືກສະເໜີອອກເປັນຕົ້ນມາ,ຈີນພ້ອມກັບອາຊຽນໄດ້ສ້າງການພົວພັນຄູ່ຮ່ວມມືຍຸດທະສາດທີ່ຫັນໜ້າໃສ່ສັນຕິພາບ ແລະວັດທະນາຖາວອນໄດ້ດຳ ເນີນການຮ່ວມມືຢ່າງກວ້າງຂວາງໃນຂົງເຂດ 20 ກວ່າໂຄງການດ້ານກະສິກຳ,ຄົມມະນາຄົມ,ພະລັງງານແລະຄວາມປອດໄພທີ່ບໍ່ ແມ່ນມູນເຊື້ອ ແລະ ອື່ນໆ. ປີ 2007 ຈີນໄດ້ກາຍເປັນເພື່ອນຮ່ວມ ຄ້າຂາຍໃຫຍ່ລະດັບທີ 2 ກັບໄທ ແລະ ມຽນມາ ແລະເປັນເພື່ອນ ຮ່ວມຄ້າຂາຍໃຫຍ່ລະດັບທີ3ກັບສິງກະໂປ.ການຮ່ວມມືລະຫວ່າງຈີນກັບອາຊຽນມີອະນາຄົດອັນກວ້າງໄກ.

ຊາວຈີນຕ່າງດ້າວແລະຜູ້ທີ່ມີເຊື້ອສາຍຈີນຢູ່ບັນດາປະເທດອາຊຽນມີຈຳນວນຫລວງຫລາຍ, ກຳລັງຕົວຈິງແຂງແກ່ນແລະໜັກແໜ້ນ, ໄດ້ຢູ່ຮ່ວມກັນດ້ວຍມິດຕະພາບກັບປະຊາຊົນໃນຖິ່ນທີ່ຢູ່ອາໄສຊ້ຳຍັງມີຄວາມຮັກໃຄ່ອັນເລິກເຊິ່ງໜັກແໜ້ນກັບປະເທດຂອງບັນພະບຸລຸດ. ພວກເຂົາເຈົ້າຄຸ້ນເຄີຍກັບສະພາບບ້ານເມືອງຂອງປະເທດທີ່ຕົນຢູ່ອາໄສ ແລະ ຂອງປະເທດຈີນ, ຊາວຈີນຕ່າງດ້າວ ແລະ ຜູ້ມີເຊື້ອສາຍຈີນໄດ້ມີສ່ວນຮ່ວມການສ້າງສາ ເສດຖະກິດຂອງຈີນ, ເຂົາເຈົ້າແມ່ນຜູ້ບຸກເບີກ,ຜູ້ມີສ່ວນຮ່ວມ ແລະ ຜູ້ປະກອບສ່ວນຂອງການປະຕິຮູບ ແລະ ເປີດປະຕູສູ່ພາຍ ນອກ. ໃນວິສາຫະກິດຕ່າງປະເທດທີ່ບັນດາແຂວງ



ທ່ານສິນກວາງຢົງເຈົ້າແຂວງຢູນນານກ່າວຄຳປາໄສທີ່ກອງປະຊຸມປາຖະກະຖາດັ່ງກ່າວ
云南省省长秦光荣在论坛上讲话 张守义 图

ພາກຕາເວັນຕົກສ່ຽງໃຕ້ດູດດຶງມາລົງທຶນນັ້ນມີ60%ຂຶ້ນໄປແມ່ນທຶນຂອງວິສາຫະກິດຈາກຊາວຈີນຕ່າງດ້າວ ແລະ ຜູ້ມີເຊື້ອສາຍຈີນ,ຊາວຈີນຕ່າງດ້າວ ແລະ ຜູ້ມີເຊື້ອສາຍຈີນຢູ່ບັນດາປະເທດອາຊຽນເປັນກອງກຳລັງຫຼັກຂອງວິສາຫະກິດລົງທຶນຈາກຊາວຈີນຕ່າງດ້າວ.

ຊຸມປີໃກ້ໆມານີ້, ເພື່ອຊຸກດັນການພັດທະນາຂອງພາກພື້ນຕະເວັນຕົກ, ລັດຖະບານຈີນໄດ້ປະກາດນຳໃຊ້ນະໂຍບາຍບຸລິມະສິດຢ່າງເປັນລະບົບ, ເຮັດໃຫ້ພາກພື້ນຕາເວັນຕົກກາຍເປັນຈຸດສົນໃຈການລົງທຶນໃໝ່. ນັກທຸລະກິດຈີນຢູ່ອາຊຽນໄດ້ເຂົ້າຮ່ວມການສ້າງສາເຂດການຄ້າເສລີຈີນ-ອາຊຽນ, ລົງທຶນໃນພາກຕາເວັນຕົກສ່ຽງໃຕ້ ແລະ ຮ່ວມມືພັດທະນານັ້ນ,ຈະຕ້ອງໄດ້ຮັບຜົນສຳເລັດອັນຈົບງາມຢ່າງແນ່ນອນ.

ຜູ້ຊົງຄຸນວຸດທິຊາວຈີນຕ່າງດ້າວ ແລະ ຜູ້ຕາງໜ້ານັກທຸລະກິດຊາວຈີນຕ່າງດ້າວທີ່ເຂົ້າຮ່ວມກອງປະຊຸມໄດ້ຮັບຮູ້ຢ່າງເຕັມທີ່ຕໍ່ສະພາບແວດລ້ອມການລົງທຶນ ແລະ ບັນຍາກາດອ້ອມຂ້າງສັງຄົມຈົບງາມຂອງຢຸນນານ,ຢຸນນານຍັງເປັນຈຸດເຊື່ອມຕໍ່ຂອບຮ່ວມມືເສດຖະກິດຂອງເຂດແພນປາກສາມຫຼ່ຽມແມ່ນ້ຳຈູ່ຈ່ຽງ "9 + 2",ທ່າແຮງດ້ານທີ່ຕັ້ງມີເອກະລັກສະເພາະຕົວ; ໂຄງລ່າງພື້ນຖານດີ;ພື້ນຖານຂອງກິດຈະກຳການຜະລິດດີ;ສະພາບແວດລ້ອມຂອງການພັດທະນາເອື້ອອຳນວຍ ແລະ ສະດວກ ສະບາຍ; ເງື່ອນໄຂຂອງນະໂຍບາຍຄ່ອງແຄ່ວມີພຶກໄຫວ...ທ່າແຮງອັນຫຼວງຫຼາຍດັ່ງກ່າວເຮັດໃຫ້ນັກທຸລະກິດຊາວຈີນຕ່າງດ້າວຢູ່ຕ່າງປະເທດມີຄວາມໝັ້ນໃຈມາລົງທຶນຢູ່ຢຸນນານຢ່າງເຕັມປ່ຽມ.

# ຊອກຫາໂອກາດທາງການຄ້າຫັນການຮ່ວມມືເຂົ້າສູ່ລວງເລິກ




## ---ວິສາຫະກິດລາວເຂົ້າຮ່ວມງານນິທັດສະການການແລກປ່ຽນຊື້-ຂາຍທີ່ຄຸນມິງຢ່າງຕັ້ງໜ້າ.

## 寻找商机 深化合作

## ——老挝企业积极参加昆交会

文、图/苏雯雯

2008 年，已成功举办第十六届昆交会，而老挝政府从昆交会开办以来就一直组织企业参加昆交会。目前，老挝政府已经把参加昆交会纳为国家每年的工作计划之一，并积极为参加昆交会做准备，老挝的工商部、国家商会也都筹备参展，老挝各个部门对参加昆交会非常积极主动。更多的老挝企业看重昆交会这一平台，通过昆交会，积极与云南及中国其他省份进行洽谈，开展工商合作。

ເຂດວາງສະແດງສິນຄ້າຂອງລາວໃນຫໍວາງສະແດງເຂດແດນນອກງານນິທັດສະການແລກປ່ຽນຊື້-ຂາຍທີ່ຄຸນມິງໄດ້ວາງສະແດງຜະລິດຕະພັນຢາງພາລາ, ວິຈິດຕະກຳຜະລິດດ້ວຍໄມ້ທີ່ປະນີດລະອຽດອ່ອນ, ຜະລິດຕະພັນວິຈິດຕະກຳຫັດຖະກຳເຟີນີເຈີຮູບແບບຕ່າງໆ, ເຄື່ອງເອ້ເຮັດດ້ວຍເງິນທີ່ສວຍສົດງົດງາມ. ຊຶ່ງໄດ້ດູດດຶງເອົາສາຍຕາຂອງນັກທຸລະກິດບໍ່ໜ້ອຍ, ເຂົາເຈົ້າທຳການປຶກສາ ແລະ ເຈລະຈາຢູ່ທີ່ນີ້, ເພື່ອຊອກຫາໂອກາດການຮ່ວມມືການຄ້າ; ຊາວເມືອງທັງຫລາຍກໍໄດ້ພາກັນໄປຄັດເລືອກສິນຄ້າປະເພດ ຕ່າງໆທີ່ຕົນມັກດ້ວຍຄວາມສົນໃຈອັນກະຕືລືລົ້ນໃນເຂດວາງສະແດງ .




ພາບ1,2,3,ສິນຄ້າລາວທີ່ມີສີສັນເອກະລາດສະເພາະໄດ້ດູດດຶ່ງສາຍຕາຂອງນັກທຸລະກິດແລະແຂກຕ່າງໆເປັນຈຳນວນຫລວງຫລາຍໃນງານວາງສະແດງສິນຄ້າຄຸນມິງ

图①②③ 昆交会上，极具特色的老挝商品吸引了众多客商的眼球

ການຈັດໃຫ້ມີງານນິທັດສະການແລກປ່ຽນຊື້-ຂາຍທີ່ຄຸນມິງຄັ້ງທີ16 ໃນປີ 2008 ໄດ້ສຳເລັດລົງແລ້ວ, ເລີ່ມແຕ່ມີການຈັດໃຫ້ມີງານນິທັດສະການແລກປ່ຽນຊື້-ຂາຍທີ່ຄຸນມິງເປັນຕົ້ນມາ, ລັດຖະບານລາວກໍໄດ້ຈັດຕັ້ງວິສາຫະກິດເຂົ້າຮ່ວມງານນິທັດສະການແລກປ່ຽນຊື້-ຂາຍທີ່ຄຸນມິງດັ່ງກ່າວຕະຫລອດມາ.

ປະຈຸບັນລັດຖະບານລາວໄດ້ເອົາການ

ເຂົ້າຮ່ວມງານລາວໄດ້ເອົາການເຂົ້າຮ່ວມງານນິທັດສະການແລກປ່ຽນຊື້-ຂາຍສິນຄ້າຂາອອກ-ຂາເຂົ້າທີ່ຄຸນມິງຈັດໄວ້ຢູ່ 1 ໃນແຜນການວຽກງານຂອງລັດໃນແຕ່ລະປີ,ພ້ອມທັງໄດ້ກະກຽມຢ່າງຕັ້ງໜ້າເພື່ອເຂົ້າຮ່ວມງານນິທັດສະການແລກປ່ຽນຊື້-ຂາຍທີ່ຄຸນມິງ,ກະຊວງອຸດສາຫະກຳການຄ້າ,ສະພາອຸດສາຫະ ກຳການຄ້າແຫ່ງລັດຂອງລາວກໍລ້ວນແຕ່ມີສ່ວນຮ່ວມການກະກຽມເພື່ອເຂົ້າຮ່ວມການວາງສະແດງສິນຄ້າ,ກ່ຽວກັບການເຂົ້າຮ່ວມງານນິທັດສະການແລກປ່ຽນຊື້-ຂາຍທີ່ຈັດຂຶ້ນຢູ່ຄຸນມິງນັ້ນ ບັນດາ ຂະແໜງການຂອງລາວໄດ້ເປັນເຈົ້າ ການຢ່າງຕັ້ງໜ້າທີ່ສຸດ.

ປີນີ້, ພະນະທ່ານ ສົມສະຫວາດ ເລັ່ງສະຫວັດຮອງນາຍົກລັດຖະມົນຕີຜູ້ປະຈຳການລັດຖະບານ ສ ປ ປ ລາວ ໄດ້ນຳຄະນະດ້ວຍທ່ານເອງມາເຂົ້າຮ່ວມງານນິທັດສະການແລກປ່ຽນຊື້-ຂາຍທີ່ນະຄອນຄຸນມິງ, 20 ກວ່າວິສາຫະກິດຂອງລາວກໍນຳເອົາຜະລິດຕະພັນທີ່ມີສີສັນພິເສດຂອງຕົນມາເຂົ້າຮ່ວມງານວາງສະແດງສິນຄ້າໃນຄັ້ງນີ້,ເປັນເທື່ອທຳອິດທີ່ມີວິສາຫະກິດຂອງລາວເຂົ້າຮ່ວມການວາງສະແດງສິນຄ້າຫລາຍກວ່າທຸກໆຄັ້ງທີ່ຜ່ານມາ. ຢູ່ໃນວິ ສາຫະກິດດັ່ງກ່າວນີ້ມີບາງວິສາຫະກິດນັບແຕ່ເລີ່ມມີງານນິທັດສະການແລກປ່ຽນຊື້-ຂາຍທີ່ຄຸນມິງເປັນຕົ້ນມາກໍໄດ້ເຂົ້າຮ່ວມທຸກໆປີ,ແລະກໍມີບາງວິສາຫະກິດຫາກໍເຂົ້າຮ່ວມງານມະໂຫລານດັ່ງກ່າວປີນີ້ເປັນຄັ້ງທຳອິດ.ວິສາຫະກິດຈຳນວນຫຼວງຫລາຍຂອງລາວໄດ້ຖືສຳຄັນຕໍ່ເວທີງານນິທັດສະການແລກປ່ຽນຊື້-ຂາຍທີ່ຄຸນມິງດັ່ງກ່າວ, ຜ່ານງານນິທັດສະການແລກປ່ຽນຊື້-ຂາຍຄຸນມິງໄດ້ມີການເຈລະຈາຢ່າງຕັ້ງໜ້າກັບຢຸນນານແລະແຂວງອື່ນໆຂອງຈີນ, ດຳເນີນການຮ່ວມມືດ້ານອຸດສາຫະກຳການຄ້າ. ໃນໄລຍະຈັດງານນິທັດສະການແລກປ່ຽນຊື້-ຂາຍທີ່ຄຸນມິງໃນແຕ່ລະປີນັ້ນ, ນັກສຶກສາລາວທີ່ສຶກສາຢູ່ຢຸນນານໄດ້ພາກັນມາຊ່ວຍວຽກງານແປພາ ສາໃຫ້ວິສາຫະກິດລາວນັບປີນັບເພີ່ມຂຶ້ນ,ເພື່ອເຮັດໃຫ້ການແລກປ່ຽນຊື້-ຂາຍຂອງແຕ່ລະຝ່າຍນັ້ນຍິ່ງສະດວກ ແລະ ລຸໂລ່ງໄປ.

ຕາມການແນະນຳຂອງທ່ານ ພົງສະຫວັດພູມມາວົງກົງສູນໃຫຍ່ຂອງລາວປະຈຳຄຸນມິງໃຫ້ຮູ້ວ່າ, ໃນຂະນະລາວອອກແຮງຊຸກຍູ້ສົ່ງເສີມວິສາຫະກິດຂອງຕົນກ້າວເຂົ້າສູ່ຢຸນນານເພື່ອຊອກຫາຄູ່ຮ່ວມມືນັ້ນ,ຍັງໄດ້ເປີດງານວາງສະແດງສິນຄ້າແບບງານນິທັດສະການແລກປ່ຽນຊື້-ຂາຍທີ່ຄຸນມິງຢູ່ພາຍໃນປະເທດຢ່າງຕັ້ງໜ້າ, ໄດ້ເຊື້ອເຊີນເອົາວິສາຫະກິດຈຳນວນຫຼວງຫຼາຍຂອງຢຸນນານໄປເຂົ້າຮ່ວມງານວາງສະແດງດັ່ງກ່າວ,ປະຈຸບັນເກືອບເວົ້າໄດ້ວ່າແຕ່ລະປີມີວິສາຫະກິດເປັນຈຳນວນຫຼວງຫຼາຍຂອງຢຸນນານລ້ວນແຕ່ໄດ້ໄປເຂົ້າຮ່ວມງານວາງສະແດງສິນຄ້າດັ່ງກ່າວ,ອັນນີ້ມັນກໍເປັນການສະໜອງເວທີໃຫ້ວິສາຫະກິດ 2ຝ່າຍເພີ່ມທະວີຄວາມເຂົ້າໃຈຊຶ່ງກັນແລະກັນ ແລະ ຊອກຫາໂອກາດທາງການຄ້າ.

ແຕ່ວັນທີ່ 6-10 ມິຖຸນາງານນິທັດສະການ ແລກປ່ຽນຊື້-ຂາຍສິນຄ້າຂາເຂົ້າ-ຂາອອກຄຸນມິງຄັ້ງ ທີ 16 ໄດ້ຈັດຂຶ້ນຢູ່ສູນປະຊຸມ ແລະ ວາງສະແດງສາກົນຄຸນມິງຕາມກຳນົດເວລາ.ວິສາຫະກິດເຂົ້າຮ່ວມວາງສະແດງສິນຄ້າໃນງານນິທັດສະການແລກປ່ຽນຊື້-ຂາຍທີ່ຄຸນມິງຄັ້ງນີ້ມີເຖິງ 1580 ກວ່າວິສາຫະກິດ,ໃນນັ້ນມີ 300 ກວ່າວິສາຫະກິດທີ່ມາຈາກ 19 ປະເທດ ແລະເຂດແຄ້ວນຂອງຕ່າງປະເທດ, ເປັນງານນິທັດສະການແລກປ່ຽນຊື້-ຂາຍຄັ້ງໜຶ່ງນັບແຕ່ມີງານນິທັດສະການແລກປ່ຽນຊື້-ຂາຍທີ່ຄຸນມິງເປັນຕົ້ນມາຈັດໃຫ້ມີຮ້ານວາງສະແດງສິນຄ້າຫລາຍກວ່າເພີ່ນແລະມີຂະໜາດໃຫຍ່ກວ່າເພີ່ນ.ປີນີ້,ກະຊວງການຄ້າຂອງຈີນໄດ້ຮ່ວມເປັນເຈົ້າພາບຈັດງານນິທັດສະການແລກປ່ຽນຊື້-ຂາຍທີ່ຄຸນມິງເປັນຄັ້ງທຳອິດ, ມັນໄດ້ເປັນການຍົກລະດັບ ແລະ ຊັ້ນລຳດັບຂອງງານນິ ທັດສະການແລກປ່ຽນຊື້-ຂາຍທີ່ຄຸນມິງຂຶ້ນສູງກວ່າເກົ່າອີກຕື່ມກ້າວໜຶ່ງ.












ຕ້ອງການຂໍ້ມູນລະອຽດ ເຊີນຕິດຕໍ່ ບໍລິສັດທ່ອງທ່ຽວ ຈຳປາລາວ

For more information, Please contact CHAMPA LAO TRAVEL

TEL:(856.21).216616. FAX:(++856.21)215260.

# ຈຳປາລາວ





ເຊີນທ່ານ ທ່ອງທ່ຽວ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.
ດິນແດນທີ່ສວຍງາມ ດ້ວຍທຳມະຊາດ,ອຸດົມຮັ່ງມີທາງ ດ້ານປະຫວັດສາດ,
ວັດທະນະທຳ ແລະຫລາຍຊົນຊາດ ຊົນເຜົ່າ,
ເປັນຕົ້ນ: ນະຄອນຫລວງວຽງຈັນ-ເມືອງມໍລະດົກໂລກຫລວງພະບາງ-
ວັດພູຈຳປາສັກ-ທົ່ງໄຫຫີນ-ນ້ຳຕົກຄອນພະເພັງ-ຫລີ່ຜີ ແລະອື່ນໆ .



主要有：

首都万象市

世界文化遗产——

琅勃拉邦

占芭色瓦普寺

查尔平原（石缸平原）

宽帕盆大瀑布

里皮等名胜古迹

*Visit Laos P,D,R, one of the premier holiday destination, with its sunny, the beautiful nature, the rivers and the warm smiles of the local people, Rich tradition and culture and many ethnic groups. Visit Vientiane, the capitale, LuangPrabang, wat Phou temple, the plain of Jars: The world heritage sites and the big water falls KhonPhaPheng, LiPhi etc... Contact us today and you will be welcome.*

## 黄河 ：中华文明的摇篮

黄河，这条黄色的巨龙，在中国北方国土上写下了大大的“ 几 ”字，奔腾流入渤海湾。它沿途哺育了中国最初的先民，创造出世界最古老的文明之一——黄河文明。

ແມ່ນ້ຳເຫລືອງ, ມັງກອນສີເຫລືອງໃຫຍ່ໂຕມະໂຫລານໂຕດັ່ງກ່າວ,ຢູ່ພື້ນແຜ່ນດິນພາກເຫນືອຂອງຈີນໄດ້ຂຽນເປັນຕົວອັກສອນຈີນ " 几 " ໂຕໃຫຍ່ໆໃນພື້ນແຜ່ນດິນພາກເຫນືອຂອງຈີນ, ມັນໄດ້ໄຫລລົ່ງທົ່ງເຫລືອງມາໄຫລໄປສູ່ອ່າວປໍ້ຮາຍ. ແມ່ນ້ຳມັນໄດ້ລ້ຽງເກືອບົ່ມເພາະ ແລະ ບຳລຸງສ້າງບຸບພະຊົນດຶກດຳບັນຂອງຈີນລຽບຕາມສາຍແມ່ນ້ຳທັງສອງຝັ່ງ,ສ້າງອະລິຍະທຳແມ່ນ້ຳເຫລືອງ-ຊຶ່ງເປັນຫນຶ່ງໃນອະລິຍະທຳທີ່ເກົ່າແກ່ບູຮານກວ່າເພິ່ນ ຂອງໂລກອອກມາ.

ແມ່ນ້ຳເຫລືອງມີຄວາມຍາວທັງຫມົດ 5.464ກິໂລແມັດ, ໄຫລຜ່ານຊິ່ນຮາຍ, ເສສວນ, ກ່ານສູ້, ນິງເສ້ຍ, ມົງໂກນໃນ, ຊ່ານຊີ່, ສ່ານຊີ່, ເຮີ້ນານ ແລະ ຊ່ານຕົ່ງ 9 ແຂວງແລະເຂດປົກຄອງຕົນເອງ, ຄວາມຍາວຂອງມັນແມ່ນຖັດຈາກແມ່ນ້ຳຢາງຊືກຽງເປັນແມ່ນ້ຳສາຍໃຫຍ່ທີ່ສອງຂອງຈີນ, ກໍເປັນແມ່ນ້ຳຍາວອັນດັບທີ່ 5 ຂອງໂລກ.

ແມ່ນ້ຳເຫລືອງກຳເນີດຈາກເຂດໃຈກາງຂອງພູພຽງຊິ່ນຮາຍ-ຕິເບດ,ຕີນພູພາກເຫນືອຂອງສາຍພູ ປ່າອຽນເຄີ້ລາຊ່ານຂອງແຂວງຊິ່ນຮາຍ, ສາຍພູປ່າອຽນເຄີ້ລາຊ່ານມີພູຫິມະຕິດຕໍ່ບໍ່ເນື່ອງກັນ, ຢູ່ໃຕ້ການບຳລຸງບົ່ມເພາະຂອງນ້ຳທີ່ເປື່ອຍຈາກພູຫິມະຢູ່ໃນພື້ນທີ່ດັ່ງກ່າວເປັນອ່າງລະຫວ່າງພູ, ມີບໍ່ນ້ຳໃສສະອາດເປັນຈຳນວນຫລວງຫລາຍແລະ ຫນອງບຶງຢ່າງໜາແໜ້ນ. ໃນນັ້ນມີສາຍນ້ຳໄຫລສອງສາຍທີ່ໃສຈົນເຫັນພື້ນຄື: ສາຍນ້ຳເອ້ຍອູຈົ່ງ ເລ້ຍຈີຊີ ແລະ ສາຍນ້ຳຄ່າຢີ້ຊີ, ຖືກຮັບຮູ້ວ່າເປັນແຫລ່ງກຳເນີດແທ້ຈິງຂອງແມ່ນ້ຳເຫລືອງ.ເລີ່ມແຕ່ສາຍນ້ຳສອງສາຍດັ່ງກ່າວ, ບວກເຂົ້າໃສ່ກັບການເຕົ້າໂຮມກັນເຂົ້າຂອງແມ່ນ້ຳຫ້ວຍຫລາຍສາຍ, ແມ່ນ້ຳເຫລືອງໄດ້ໄຫລຢ່າງລະອິດລະອຽວເຂົ້າໄປສູ່ສີງຊູຮາຍ---"ສະຖານີຕົ້ມນ້ຳມັນ" ໃຫຍ່ແຫ່ງທຳອິດຢູ່ກາງທາງ,ລຳຄອງນ້ອຍໆໄດ້ມາເພີ່ມປະລິມານນ້ຳຢູ່ແຫ່ງນີ້, ເຮັດໃຫ້ຂະໜາດ ຂອງມັນໃຫຍ່ໂຕຂຶ້ນຢ່າງຫລວງຫລາຍ,ເມື່ອຜ່ານຫນອງຈະລິນຮູ້ ແລະ ຫນອງເກີ້ລິນຮູ້ຊຶ່ງເປັນຫນອງໃຫຍ່ແຫ່ງຕື່ມແລ້ວ, ແມ່ນ້ຳເຫລືອງຄ່ອຍໆສະແດງອອກອາດຊົງທີ່ເປັນແມ່ນ້ຳໃຫຍ່ອອກມາ.

ນ້ຳໃນແມ່ນ້ຳຢູ່ຕອນລ້ອງເທິງຂອງແມ່ນ້ຳເຫລືອງແມ່ນໃສສະອາດຈົນເບິ່ງເຫັນພື້ນຂອງແມ່ນ້ຳ,ມັນຖືກເອີ້ນເປັນ "ແມ່ນ້ຳ ເຫລືອງ"ກໍຍ້ອນວ່າຢູ່ຕອນລ້ອງກາງຂອງແມ່ນ້ຳໄດ້ຜ່ານພູພຽງ ດິນເຫລືອງຫນຶ່ງໃນພູມສັນຖານທີ່ມະຫັດສະຈັນທີ່ສຸດຊຂອງຈີນ.ພູ ພຽງດິນເຫລືອງແມ່ນການສະສົມເປັນກອງມະຫຶມາຂຶ້ນດ້ວຍດິນເຫລືອງທີ່ມີຄວາມຫນາເຖິງຫລາຍສິບກິໂລແມັດຈົນກະທັ້ງເປັນຮ້ອຍກິໂລແມັດ.ແມ່ນ້ຳເຫລືອງໄດ້ຕັດຜ່ານຊັ້ນດິນອັນຫນາແສນຫນາເປັນເຫວອັນກວ້າງໃຫຍ່,ພ້ອມກັນນັ້ນກໍເຮັດໃຫ້ຕົນເອງເກືອກກົ້ວໃຫ້ເປັນສີຄຳ(ສີດິນເຫລືອງ).

ດິນຊາຍທີ່ແມ່ນ້ຳເຫລືອງເຊາະມານຳນັ້ນຢູ່ໃນແມ່ນ້ຳຕອນ


ທາງເຂົ້າຂອງມະຫາຫຸບແຄບຈິງສານມົງແມ່ນ້ຳເຫລືອງທີ່ມີອະນຸພາບມະໂຫລານ
气势恢宏的黄河晋陕蒙大峡谷入口　新华社 图

ຕໍ່ໄປໄດ້ຕົກຕະກອນນອນພື້ນເປັນແຜ່ນດິນປົກແຜ່ນໃຫຍ່, ເຮັດໃຫ້ພື້ນແມ່ນ້ຳນັບມື້ນັບສູງຂຶ້ນ.ເພື່ອຫຼີກເວັ້ນຕາຝັ່ງແມ່ນ້ຳເຫຼືອງພັງເປັນຊ່ອງ,ທຸກຍຸກທຸກສະໄໝຂອງຈີນລ້ວນແຕ່ໄດ້ກໍ່ຄັນຄູລຽບຕາມຕາຝັ່ງ,ພື້ນຂອງແມ່ນ້ຳຍິ່ງສູງຂຶ້ນເທົ່າໃດຄັນຄູກໍຍິ່ງສູງຂຶ້ນເທົ່ານັ້ນ,ສຸດທ້າຍເລີຍກາຍເປັນສາຍແມ່ນ້ຳສູງກວ່າໜ້າດິນເປັນ 10 ກວ່າແມັດຊຶ່ງເປັນທັດສະນີຍະພາບເອີ້ນວ່າ:"ແມ່ນ້ຳແຂວນຢູ່ກາງຫາວ".ແມ່ນ້ຳເຫຼືອງເປັນແມ່ນ້ຳແມ່ຂອງປະຊາຊາດຈີນ, ເປັນແຫລ່ງກຳເນີດອະລິຍະທຳຂອງປະຊາຊາດຈີນ. ນັບແຕ່ຍຸກຫີນໃໝ່ເປັນຕົ້ນມາ(ປະມານກ່ອນນີ້ 10.000ປີຮອດກ່ອນນີ້ 4.000 ປີ) ລ້ອງແມ່ນ້ຳເຫລືອງກໍໄດ້ເປັນສູນກາງພັດທະນາວັດທະນະທຳດຶກດຳບັນຂອງຈີນ. ຢູ່ໃນໄລຍະປະຫວັດສາດອັນຍາວນານສົມຄວນນັ້ນ,ລ້ອງແມ່ນ້ຳເຫລືອງໄດ້ກາຍເປັນສູນກາງການເມືອງ,ເສດຖະກິດ ແລະ ວັດທະນະທຳຂອງຈີນສະໄໝບູຮານ.

ແມ່ນ້ຳເຫຼືອງໄດ້ເພີ່ມທິວທັດອັນສວຍສົດງົດງາມ ແລະ ສະຫງ່າຜ່າເຜີຍອັນຫລວງຫລາຍໃຫ້ແກ່ພື້ນແຜ່ນດິນຂອງຈີນ, ໃນນັ້ນລືຊື່ກວ່າເພິ່ນແມ່ນນ້ຳຕົກຕາດຮູ້ໂຄວ---ນ້ຳຕົກຂະໜາດໃຫຍ່ໃນຕອນກາງຂອງຊ່ອງແຄບເຫວຈິ້ນຊານ.ນ້ຳຕົກຮູ້ຄວນີທີ່ຕັ້ງຢູ່ເມືອງຈີຂອງແຂວງຊານຊີ,ຢູ່ແຫ່ງພື້ນຂອງແມ່ນ້ຳເຫຼືອງໄດ້ຫລອນຮອມເຂົ້າກັນ, ນ້ຳສີເຫຼືອງທີ່ໄຫລລົ່ງທົ່ງເຫລືອງມາຢ່າງຮ້າຍແຮງນັ້ນ,ຫລອນຕົກລົງມາຈາກລະດັບຄວາມສູງເຖິງ 30 ແມັດ,ປານນ້ຳໄຫລທົ່ງອອກມາຈາກປາກຂອງການ້ຳໃຫຍ່ໜ່ວຍໜຶ່ງ,ກາຍເປັນນ້ຳຕົກຕາດຂະໜາດໃຫຍ່ທີ່ສວຍງາມ.



# ແມ່ນ້ຳເຫລືອງ: ແຫລ່ງກຳເນີດອະລິຍະທຳ ຂອງປະຊາຊາດຈີນ

# ເມືອງບູຮານພິນຢ້າວ

## 平遥古城

位于山西的平遥古城，是一座具有 2700 多年历史的文化名城，是中国目前保存最为完整的四座古城之一，也是目前中国唯一以整座古城申报世界文化遗产获得成功的古县城。这是一座古代与现代建筑融成一体、交相辉映、令人遐思不已的名城。

ເມືອງບູຮານພິນຢ້າວມີທີ່ຕັ້ງຢູ່ແຂວງຊ່ານຊີ່,ເປັນເມືອງລືຊື່ທາງດ້ານວັດທະນະທຳແຫ່ງຫນຶ່ງທີ່ມີປະຫວັດສາດ 2.700 ກວ່າປີມາແລ້ວ, ເປັນຫນຶ່ງໃນ 4 ຂອງເມືອງບູຮານ 4ແຫ່ງທີ່ຮັກສາໄວ້ຢ່າງຄົບຖ້ວນທີ່ສຸດໃນປະຈຸບັນຂອງຈີນແລະກໍເປັນຕົວເມືອງເທດສະບານເມືອງບູຮານຫມົດທັງທີ່ສະເຫນີເປັນມໍລະດົກວັດທະນະທຳໂລກໄດ້ຢ່າງສຳເລັດແຕ່ແຫ່ງໜຶ່ງແຫ່ງດຽວຂອງຈີນໃນປະຈຸບັນ.ກຳແພງອ້ອມເມືອງພິນຢ້າວຍາວທັງໝົດ6.163 ແມັດ,ກຳແພງສູງປະມານ 12 ແມັດໂດຍເອົາເທດສະບານເມືອງພິນ ຢ້າວທີ່ມີເນື້ອທີ່ປະມານ 2,25 ກິໂລແມັດມົນທົນນັ້ນ ຂັ້ນເປັນ 2 ໂລກທີ່ມີທັດສະນີຍະພາບຕ່າງກັນ.ຖະຫນົນຫົນທາງ ຫ້າງຮ້ານຕຶກອາຄານຢູ່ພາຍໃນກຳແພງເມືອງຍັງຮັກສາໄວ້ຮູບແບບຂອງສະໄໝລາຊະວົງມິງ ແລະ ລາຊະວົງຊິງ;ຢູ່ນອກກຳແພງເມືອງເອີ້ນວ່າເມືອງໃໝ່.ເປັນຕົວເມືອງແຫ່ງຫນຶ່ງທີ່ເອົາສິ່ງປຸກສ້າງ ສະໄຫມບູຮານກັບສະໄຫມປະຈຸບັນຕ່າງລວມເຂົ້າເປັນອົງປະກອບຂອງໃຜລາວ, ຕ່າງສ່ອງແສງຄວາມສະຫວ່າງຜ່າເຜີຍຂອງໃຜ ລາວໃສ່ກັນ,ເຮັດໃຫ້ຄົນເບິ່ງແລ້ວມີຄວາມເຜີ້ຝັນໄປຕ່າງໆນາໆ.ເມືອງບູຮານພິນຢ້າວມີທີ່ຕັ້ງຢູ່ພາກກາງແຂວງຊ່ານຊີ່ພາກເຫນືອ ຂອງຈີນ,ນັບມາຮອດປະຈຸບັນ,ພິນຢ້າວຍັງຮັກສາຮູບໂສມພື້ນຖານຂອງເທດສະບານເມືອງສະໄໝລາຊະວົງມິງ ແລະ ລາຊະວົງ ຊິງ (ຄ.ສ 1368-1911)ຂ້ອນຂ້າງຄົບຖ້ວນ, ສາມາດເວົ້າໄດ້ວ່າເປັນເມືອງບູຮານທີ່ຮັກສາໄວ້ຄົບຖ້ວນທີ່ສຸດທີ່ເຫຼືອໄວ້ຢູ່ໃນ ປະຈຸບັນໃນເຂດແຄວ້ນຊົນເຜົ່າຫ້ານຂອງຈີນ.

ພິນຢ້າວເຄີຍເປັນສູນກາງການເງິນຂອງຈີນໃນທ້າຍສະໄໝລາຊະວົງຊິງ,ພ້ອມທັງໄດ້ຮັກສາໄວ້ຢ່າງຄົບຖ້ວນທີ່ສຸດຂອງຮູບແບບເທດສະບານເມືອງສະໄຫມບູຮານທີ່ມີຢູ່ຂອງຈີນໃນປະຈຸບັນ.

ພິນຢ້າວປະຈຸບັນຍັງຮັກສາໄວ້ຮູບແບບເທດສະບານເມືອງສະໄໝລາຊະວົງມິງ ແລະ ລາຊະວົງຊິງໂດຍພື້ນຖານ,ໄດ້ຖືກຂະໜານນາມວ່າ: "ເປັນເມືອງເຕົ່າ".ຮູບແບບຂອງຖະໜົນຫົນທາງເປັນຮູບໂຕຫນັງສື ± , ການຈັດວາງການກໍ່ສ້າງແມ່ນປະຕິ ບັດຕາມທິດທີ່ຕັ້ງຂອງແບບແຜນພູມີ 8 ທິດ,ສະແດງເຖິງ


ເຮືອນຊານບ້ານຊ່ອງຂອງປະຊາຊົນໃນເມືອງເກົ່າພິນຢາວທ່າມກາງຫິມະ
雪中的平遥古城民居 新华社 图

ມະໂນຄະຕິການວາງແຜນຕົວເມືອງ ແລະ ການຈັດວາງຜັງເມືອງຂອງ ສະໄໝລາຊະວົງມິງ ແລະ ລາຊະວົງຊິງ. ຢູ່ພາຍໃນ ແລະ ນອກຕົວເມືອງມີຮ່ອງຮອຍເຄຫະສະຖານເກົ່າແກ່ຕ່າງໆນາໆ, ສິ່ງປຸກ ສ້າງບູຮານ 300 ກວ່າບ່ອນເຮືອນຢູ່ຂອງປະຊາຊົນສະໄໝລາຊະວົງມິງ ແລະ ລາຊະວົງຊິງທີ່ຮັກສາໄວ້ຢ່າງຄົບຖ້ວນຈົບງາມ ນັ້ນມີເກືອບ 4.000 ຫລັງ, ຖະໜົນ ແລະຮ້ານຄ້າລ້ວນແຕ່ສະແດງອອກຮູບໂສມເດີມຂອງປະຫວັດສາດ, ໄດ້ຖືກຂະໜານນາມວ່າເປັນຕົວຢ່າງ:specimen ທີ່ມີຊີວິດຊີວາຂອງຕົວເມືອງສະໄໝບູຮານຂອງຈີນໄວ້ສຳລັບຄົ້ນຄວ້າ.

ກຳແພງເມືອງພິນຢ້າວສ້າງຂຶ້ນເມື່ອລາຊະການຮົ່ງອູປີທີ່ 3 ຂອງລາຊະວົງມິງ, ປະຈຸບັນຍັງຮັກສາໄວ້ກຳແພງເມືອງທີ່ມີປະຕູຮູບວົງເດືອນ 6 ແຫ່ງ, ກຳ ແພງເມືອງທີ່ມີຫໍຫລ່ຽມ 4 ແຫ່ງ ແລະຫໍປ້ອງກັນສັດຕູ 72 ຫໍ. ໃນນັ້ນກຳແພງເມືອງຕອນໃຕ້ ໄດ້ພັງທະລາຍລົງໃນປີ 2004, ນອກຈາກນັ້ນແລ້ວ, ສ່ວນຫລາຍ



ກໍ່ຍັງຮັກສາໄວ້ຢ່າງຈົບງາມຈົນເຖິງປະຈຸບັນ, ເປັນໜຶ່ງໃນກຳແພງເມືອງບູຮານທີ່ຮັກສາໄວ້ຂ້ອນຂ້າງຄົບຖ້ວນຈົບງາມ,ປະຫວັດຂ້ອນຂ້າງຍາວນານ ແລະ ຂະໜາດຂ້ອນຂ້າງໃຫຍ່ທີ່ເຫຼືອໄວ້ໃນປະຈຸບັນຂອງຈີນ, ແລະ ກໍແມ່ນພາກສ່ວນທີ່ປະກອບເປັນແກນຫຼັກຂອງເມືອງບູຮານພິນຢ້າວເມືອງມໍລະດົກໂລກ.ນອກນັ້ນ,ຍັງມວັດເຈີ້ນກົ໋ວສື້,ວັດຊວ່ງລິນສື້ ແລະສານເຈົ້າເວີຍມ້ຽວຂອງພິນຢ້າວເປັນຕົ້ນກໍລ້ວນແຕ່ໄດ້ຈັດເຂົ້າຢູ່ໃນຂອບເຂດການອະນຸລັກ ຂອງມໍລະດົກໂລກ.

ເມືອງບູຮານພິນຢ້າວເປັນເມືອງລືຊື່ໃນປະຫວັດສາດທີ່ຮັກສາໄວ້ຢ່າງຄົບຖ້ວນບໍລິບູນ, ແລະກໍແມ່ນຮູບແບບເດີມຂອງຕົວເມືອງສະໄໝບູຮານຂອງຈີນ.ເປັນເຫດສະບານເມືອງສະໄໝບູຮານແຫ່ງໜຶ່ງທີ່ຮັກສາໄວ້ຄົບຖ້ວນບໍລິບູນກວ່າເພີ່ນພາຍໃນດິນແດນຂອງຈີນ, ເປັນຕົວແບບອັນໂດດເດັ່ນຂອງຕົວເມືອງຊົນເຜົ່າຫ້ານຂອງຈີນໃນສະໄໝລາຊະວົງມິງ ແລະ ລາຊະວົງຊິງ, ໃນການພັດທະນາຂອງປະຫວັດສາດຈີນນັ້ນ,ເມືອງບູຮານພິນຢ້າວໄດ້ສະແດງອອກຕໍ່ຜູ້ຄົນທັງຫລາຍເປັນລາຍລັກອັກສອນ ແລະຮູບພາບອັນຄົບຖ້ວນບໍລິບູນທີ່ຫາໄດ້ຍາກທີ່ສຸດຂອງການພັດທະນາວັດທະນະທຳ, ສັງຄົມ, ເສດຖະກິດ ແລະ ສາສະໜາ.

ເມືອງບູຮານພິນຢ້າວນັບແຕ່ມີການເຄື່ອນໄຫວສ້າງຕົວເມືອງເປັນຕົ້ນມາ,ທ່າມກາງຂະບວນວິວັດແຫ່ງການພັດທະນາເປັນເວລາຍາວນານນັ້ນ, ໄດ້ຮັກສາໄວ້ຈຳນວນວັດທະນະທຳທີ່ຍັງຄົງຄ້າງເປັນຈຳນວນຫຼວງຫຼາຍ ແລະ ມີຢູ່ຢ່າງໜາແໜ້ນໃນໄລຍະຜ່ານໄປເປັນເວລາຍາວນານ, ຖືກສັນລະເສີນວ່າ "ເປັນສາງວິເສດຂອງສະຖາປັດຕະຍະກຳບູຮານຂອງຈີນ" "ເປັນເມືອງ ໃຫຍ່ວັດຖຸບູຮານ" ແຫ່ງໜຶ່ງຢູ່ພາຍໃນຂອບເຂດແຂວງຊ່ານຊີ. ວັດທະນະທຳທີ່ຈິ່ງເຫລືອໄວ້ເປັນຈຳນວນຫຼວງຫຼາຍຂອງເມືອງບູຮານພິນຢ້າວ, ບໍ່ພຽງແຕ່ເປັນຕົວແທນຮູບການສະຖາປັດຕະຍະກຳ, ວິທີກໍ່ສ້າງ ແລະມາດຕະຖານນຳໃຊ້ວັດສະດຸຂອງສະໄໝ ປະຫວັດສາດທີ່ຕ່າງກັນຂອງຕົວເມືອງສະໄໝບູຮານຂອງຈີນ, ຍັງ ໄດ້ສ່ອງແສງໃຫ້ເຫັນວ່າ, ຜົນສຳເລັດທາງຄວາມກ້າວໜ້າທາງສິລະປະ ແລະ ວິຈິດຕະສາດຂອງຊົນເຜົ່າຕ່າງກັນ ແລະ ຂົງເຂດ ຕ່າງກັນໃນສະໄໝບູຮານຂອງຈີນ.

## Can’t we blend art and commerce?

- With your participation, PHOTOMEKONG will a most successful ‘bridge’ ! Please just press your shutter for the most wonderful moment and join us, to blend art and commerce!
- We are expecting your agreement to work with us as a photographer at PHOTOMEKONG!
- PHOTOMEKONG includes numerous photos representing the natural and humanistic attractions, ethnic cultures, socio-economic development and local resources of China’s Yunan province, Myanmar, Thailand, Laos, Cambodia and Vietnam along the Mekong River. With its professional services, exhibition of photos by photographers from Yunnan of China and Southeast Asian countries, and a transaction platform, PHOTOMEKONG also provides state-of-the-art photo resources for the clients engaged in newspapers, periodicals, magazines, pictorials and other media.



PHOTOMEKONG
湄 公 河 图 片 库

http://www.photomekong.com Fax: +86 871 3103179 E-mail: service@photomekong.com
Address: Room 1512, Hongcheng Plaza, Youth Road, Kunming City 650021 Yunnan Province, China

# THE SACRED MOUNTAIN OF LIFE - MT. GAOLIGONGSHAN
# AN IDEAL DESTINATION FOR ECO-TOURISM

We are expecting your inquiry about and trips for such attractions: the ancient path of over 2 000 years, 16 indigenous ethnic groups, 4 303 species of higher plants, 581 kinds of wild animals, a high mountain with a vertical height difference of 4 000 meters, ··· one more scenic area just one step ahead, and one may experience four seasons in a single day!



## 天地舞台一场戏

中国戏曲，是包含了文学、音乐、舞蹈、美术、武术、杂技以及表演等多种因素的综合艺术形式。中国的戏曲代代相传，从形式到内容都日臻完美，剧种发展到 300 多个，剧目数以万计。中国戏曲是具有综合性的表演艺术。它通过演员扮演，运用音乐化的对话和舞蹈化的动作展现故事情节。戏曲采用的这种歌舞化的手段，人们归纳为 “ 唱、念、做、打 ”。

# ສິລະປະງິ້ວຂອງຈີນ

ລະຄອນງິ້ວຂອງຈີນ ໂດຍສະເພາະແມ່ນສິລະປະງິ້ວປັກກິ່ງທີ່ເປັນມູນເຊື້ອນັ້ນ, ປະກອບດ້ວຍວັນນະຄະດີ, ດົນຕີ, ແບບຟ້ອນ, ວິຈິດຕະສິນ, ສິລະປະປະລອງຍຸດ(ອຸຊູ), ກາຍຍະສິນ ແລະແບບການສະແດງເປັນຕົ້ນ, ຊຶ່ງເປັນຮູບການສິລະປະສັງລວມດ້ວຍຫລາຍປັດໄຈ. ລະຄອນງິ້ວຂອງຈີນໄດ້ສືບທອດກັນມາແຕ່ລະເຊັ່ນຄົນ, ຈາກຮູບການຮອດເນື້ອໃນລ້ວນແຕ່ຄືບຖ້ອນຈົບງາມ, ປະເພດຂອງງິ້ວພັດທະນາໄປຮອດ 300 ກວ່າຊະນິດຈຳນວນຂອງລາຍການງິ້ວນັບເປັນໝື່ນໆ. ລະຄອນງິ້ວຂອງຈີນເປັນສິລະປະສະແດງລັກສະນະສັງລວມ. ມັນຜ່ານຕົວລະຄອນມາສະແດງຕາມພາລະ ໜ້າທີ່, ນຳໃຊ້ຄຳເວົ້າແບບດົນຕີ ແລະ ການກະທຳແບບຟ້ອນເຮັດໃຫ້ເນື້ອຫາຂອງນິທານສະແດງອອກມາໃຫ້ຜູ້ຊົມຮູ້. ສີໄມ້ລາຍມືທີ່ເອົາລະຄອນງິ້ວຫັນເປັນແບບຮ້ອງ ແລະ ຟ້ອນລຳດັ່ງກ່າວ, ຄົນທັງຫຼາຍລວບລວມສະຫລຸບເປັນ "ຮ້ອງ, ເວົ້າ, ເຮັດ ແລະ ຕີ".

"ຮ້ອງ" ເປັນຮູບແບບຕົ້ນຕໍຂອງການພັນລະນາອາລົມຈິດ




ເລືອກເຟັ້ນ《ລະຄອນປາວລຽນເຕັງຜ່າພູກູ້ເອົາແມ່》
《宝莲灯 · 劈山救母》选段 新华社 图

ໃນໃຈເພື່ອໃຫ້ສຳເລັດພາລະໜ້າທີ່ໃນເນື້ອເລື່ອງດ້ວຍຮູບການຮ້ອງມາສູ່ຜູ້ຟັງ, ແມ່ນເປັນການຈັດວາງຕາມຄວາມຕ້ອງການຂອງເນື້ອເລື່ອງການພັດທະນາທາງດ້ານບຸກຄະລິກແລະອາລົມຈິດຂອງຜູ້ສະແດງ, ມັນຜ່ານຮູບແບບຂອງດົນຕີທີ່ສວຍສົດງົດງາມມາເຮັດໃຫ້ຮູບແບບຂອງວັນນະຄະດີຍິ່ງອຸດົມສົມບູນ,ເຮັດໃຫ້ຜູ້ຟັງມີຄວາມຮູ້ສຶກໄດ້ຮັບຊົມແລະຢັ່ງຄວາມມ່ວນຂອງສຽງ. ການຮ້ອງນັ້ນເປັນປັດໄຈສຳຄັນຂອງການຕັດສິນໄດ້ຮັບຜົນຫລືການປະດິດຄິດສ້າງທາງສິລະປະຂອງຜູ້ສະແດງບໍ່ໄດ້ຜົນ,ເວົ້າສຳລັບງິ້ວເລື່ອງດຽວກັນແລ້ວ, ນັກສະແດງທີ່ຕ່າງກັນວິທີຮ້ອງກໍຕ່າງກັນ,ຍ້ອນແນວນັ້ນຈຶ່ງກາຍເປັນຝ່າຍສິລະປະທີ່ຕ່າງກັນ. "ເວົ້າ" ໝາຍເຖິງລະຫວ່າງຜູ້ສະແດງຢູ່ໃນງິ້ວເວົ້າຕໍ່ກັນຫຼືເວົ້າຜູ້ດຽວ, ເປັນພາສາຄຳເວົ້າຂອງລະຄອນແບບອ່ານກາບກອນແລະເປັນ ແບບດົນຕີຊະນິດໜຶ່ງ. ນັກສະແດງຕ້ອງສົມທົບກັບເລື່ອງລະຄອນທີ່ເປັນຮູບປະທຳ, ອີງຕາມຈຸດພິເສດຂອງຕົວລະຄອນ ແລະ ການ ຂະຫຍາຍຕົວຂອງເນື້ອເລື່ອງ,ມາຈັດວາງຄຳໜັກຄຳເບົາ,ຄຳຊ້າຄຳໄວ,ຄຳເພີດເພີນ,ຄຳຢຸດທັນທີຫລືຄຳເຍີ້ນຕາມການ ປ່ຽນແປງຂອງຈັງຫວະພາສາ, ເພື່ອໃຫ້ບັນລຸເຖິງທັງມ່ວນຫູປາກ ຟັງ ແລະ ທັງສາມາດເຮັດໃຫ້ສິລະປະເຂົ້າສູ່ຂອບແດນໃຫ້ຄົນງຶດງໍ້ຫລົງໄຫຼ. "ເຮັດ" ເປັນການເວົ້າລວມທາງດ້ານຮູບຮ່າງທາງກາຍ,ສະພາບຂອງການສະແດງ,ພາບພົດ ແລະ ວາດຊົງ ຂອງນັກສະແດງລະຄອນງິ້ວ,ເປັນສ່ວນປະກອບສຳຄັນຂອງການກະທຳໃນເວທີສະແດງງິ້ວ. "ຕີ" ເປັນການກະທຳແບບຟ້ອນຂອງສິລະປະປະລອງຍຸດ(ອຸຊູ)ທີ່ເປັນມູນເຊື້ອ,ມີບາງຄັ້ງສະແດງອອກເປັນການຕີເປັນຄູ່ດ້ວຍສອງຕໍ່ສອງ,ມີບາງຄັ້ງກໍເປັນພາກສະໜາມສົງຄາມທີ່ຕໍ່ສູ້ກັນແບບລວມໝູ່.ການຮ້ອງ, ເວົ້າ, ເຮັດ ແລະ ຕີແມ່ນສີໄມ້ລາຍມືທາງສິລະປະພິເສດຂອງການສະແດງລະຄອນງິ້ວ,4ແບບດັ່ງກ່າວແມ່ນປະສົມປະສານຢ່າງກົມກຽວກັນ, ກາຍ ເປັນສີສັນພິເສດທີ່ເດັ່ນຊັດຂອງຮູບການສະແດງລະຄອນງິ້ວຂອງ ຈີນ. ດ້ານການສະແດງລະຄອນງິ້ວຂອງຈີນນັ້ນ,ມັນມີລັກສະນະ ແບບຈຳລອງສົມມຸດ.ການປະດິດຄິດແຕ່ງເລື່ອງລະຄອນຕ້ອງເຄົາລົບຕໍ່ສະພາບຄວາມເປັນຈິງສະແດງເຖິງກົດເກນຂອງການດຳລົງຊີວິດ,ແຕ່ໃນເວລາການສະແດງອອກນັ້ນ, ແມ່ນນຳໃຊ້ສີໄມ້ລາຍມືແບບຈຳລອງສົມມຸດ, ຢູ່ໃນພາສາຈີນນັ້ນການທີ່ວ່າ: "ລະຄອນ "ມັນກໍມີຄວາມໝາຍວ່າ: "ຈຳລອງສົມມຸດ" ຫລື "ເຮັດ ຫລິ້ນ".ການສະແດງລະຄອນງິ້ວນັ້ນໄດ້ດຳເນີນການເຮັດແບບຈຳ ລອງສົມມຸດຕໍ່ກາລະເທສະ.ເວທີສະແດງລະຄອນງິ້ວເປັນຊ່ອງຫວ່າງທີ່ເຄື່ອນຍ້າຍໄດ້, ຜູ້ສະແດງລະຄອນຂຶ້ນໆລົງໆເວທີຢ່າງ ຕໍ່ເນື່ອງ,ກໍຄືສະແດງການປ່ຽນແປງຂອງເວລາ ແລະ ການ ປ່ຽນແປງຂອງສະຖານທີ່ຢ່າງບໍ່ຢຸດບໍ່ເຊົາ.

ດ້ານການສະແດງໃນລະຄອນງິ້ວຂອງຈີນນັ້ນ,ມີລັກສະນະຂັ້ນຕອນ,ອັນນີ້ກ່ອນອື່ນໝົດມັນສະແດງອອກໃນການແຕ່ງກາຍຂອງຜູ້ສະແດງໃນລະຄອນງິ້ວທີ່ມີລັກສະນະຂັ້ນຕອນ, ລວມສູນກວ່າເພີ່ນນັ້ນມັນສະແດງອອກໃນການແຕ່ງໜ້າຂອງລະຄອນງິ້ວ, ຈາກ ການແຕ່ງໜ້າໃນລະຄອນງິ້ວນັ້ນ,ສາມາດຈຳແນກໄດ້ຖານະ ແລະ ລັກສະນະບຸກຄະລິກຂອງຕົວລະຄອນໃນງິ້ວຢ່າງຈະແຈ້ງ, ຕົວລະຄອນທີ່ຊື່ສັດບໍລິສຸດ ແລະ ມີ ຄຸນສົມບັດເມດຕາຈິດຂອງເລື່ອງທີ່ສະແດງອອກນັ້ນ,ການແຕ່ງໜ້າຂອງຜູ້ສະແດງຕ້ອງ ແມ່ນເປັນໃບໜ້າທີ່ເຂັ້ມງວດຊື່ກົງ;ຜູ້ສະແດງຕົວລະຄອນເປັນຄົນໂຫດຮ້າຍປ່າເຖື່ອນນັ້ນ,ການແຕ່ງໜ້າຂອງຜູ້ສະແດງຊໍ້າພັດເຈາະຈົ່ງໃສ່ໃນການໃສ່ຮ້າຍປ້າຍສີ. ສີທີ່ເອົາມາແຕ່ງໜ້າກໍເປັນ ສັນຍາລັກພິເສດຂອງບຸກຄະລິກຕົວລະຄອນ;ເຈົ້ານາຍຜູ້ຊື່ສັດ ບໍລິສຸດສ່ວນຫຼາຍມັກທາສີໜ້າເປັນສີແດງ,ຜູ້ຫ້າວໂຫດມີເລ່ກົນໜ້າມັກທາສີຂາວ, ນິດໄສໃຈຄໍຮ້າຍກາດໜ້າມັກທາສີຟ້າ, ຜູ້ ທ່ຽງທຳບໍ່ເຫັນແກ່ຕົວໜ້າມັກທາສີດຳ.ແຕ່ລະໃບໜ້າຂອງຕົວລະຄອນຈະແຈ້ງເບິ່ງງ່າຍໃຜກໍມີຊີວິດຊີວາໄປຕາມຕົວລະຄອນຂອງໃຜ ລາວ, ຜູ້ຊົມພໍເບິ່ງແຕ່ໜ້າກໍຮູ້ວ່າຕົວລະຄອນເປັນຄົນປະເພດໃດ.

ເວລາຊົມລະຄອນງິ້ວຂອງຈີນນັ້ນ,ຖ້າຫາກວ່າຄວາມເຂົ້າໃຈດັ່ງທີ່ກ່າວມານັ້ນແລ້ວ,ກໍຈະສາມາດຈຳແນກໄດ້ຕົວລະຄອນໃນງິ້ວຢ່າງໄວວາ, ແລະ ສາມາດ "ເຂົ້າໄປສູ່ນິທານງິ້ວຢ່າງສະບາຍ.

## 大理白族三月街

文、图 / 蔡 梦

三月街，一条从大理石碑坊一直延伸到苍山脚下的长长的街市，几千年来，赛马场上、大青树下、古戏台前，它的万种风情静静地流淌在时光影像中，在人们“千年赶一街，一街赶千年”的无数遍行走中得到解读和诠释，并被厚重的历史和鲜活的民族特色赋予了全新的意义，逐渐成为大理独有的文化符号和民族品牌流传至今。

# ຖະຫນົນເດືອນ 3 ຂອງຊົນເຜົ່າໄປ໋ຕ໋າລີ

ຖະຫນົນເດືອນ 3, ຖະຫນົນເສັ້ນຫນຶ່ງທີ່ມີຄວາມຍາວແຕ່ປ້າຍປະຕູໂຂງເຮັດດ້ວຍຫີນຂອງຕ໋າລີຄວາມຍາວຈົນຮອດຕີນພູຂອງພູຊັ່ງຊ່ານ, ຫລາຍພັນປີມານີ້,ຢູ່ເທິງສະໜາມແຂ່ງມ້າ, ຢູ່ກ້ອງຕົ້ນໄມ້ໃຫຍ່,ຢູ່ຊື່ຫນ້າເວທີສະແດງລະຄອນບູຮານ,ມີປະເພນີຮ້ອຍແປດພັນປະການຂອງມັນໄດ້ຄ່ອຍໆສືບທອດກັນມາແຕ່ລາຊະວົງຖັງຈົນຮອດປະຈຸບັນ,ທ່າມກາງຮູບພາບຂອງກາລະເວລາຂອງການຍ່າງເປັນຫລາຍໆຮອບຈົນນັບບໍ່ຖ້ວນຂອງການ "ຍ່າງ ຖະຫນົນດຽວເປັນພັນປີມາແລ້ວ ແລະ ເປັນພັນປີມາແລ້ວມີແຕ່ຍ່າງຖະຫນົນເສັ້ນດຽວ" ຂອງຄົນທັງຫຼາຍ,ຈາກ




ການສະແດງແຂ່ງມ້າໃນຕະຫລາດເດືອນ3
三月街上赛马表演




ພິທີເປີດເທດສະການຊົນເຜົ່າຕະຫລາດເດືອນ3ຕາລີປີ2008
2008年大理三月街民族节开幕式

ການຍ່າງຢ່າງບໍ່ຢຸດບໍ່ເຊົານັ້ນມາອະທິບາຍດ້ວຍເປັນຄວາມຈິງ,ພ້ອມທັງຖືກ ປະຫວັດສາດອັນລ້ຳເລີດ ແລະ ສີສັນຊົນເຜົ່າອັນສົດຊື່ນ,ເຮັດໃຫ້ມີຄວາມໝາຍຢ່າງໃຫມ່ອ່ຽມ,ຄ່ອຍໆເຮັດໃຫ້ຕ່ຳລີກາຍເປັນເຄື່ອງຫມາຍວັດທະນະທຳທີ່ມີເອກະລັກອັນຫນຶ່ງ ແລະ ເປັນຜະລິດຕະພັນຍີ່ຫໍ້ດັງຂອງຊົນເຜົ່າແຜ່ຜາຍຕໍ່ໆກັນມາຈົນຮອດປະຈຸບັນ.

ຖະຫນົນເດືອນ3ເປັນງານມະໂຫລານທີ່ມີມູນເຊື້ອຊົນ ເຜົ່າຊຶ່ງມີປະຫວັດການເປັນພັນກວ່າປີມາແລ້ວ,ເປັນງານຕະຫລາດນັດການແລກປ່ຽນຊື້-ຂາຍທີ່ຈະເລີນສີວິໄລແລະເກົ່າແກ່ທີ່ສຸດພາກຕາເວັນຕົກຂອງຢຸນນານ ແລະ ກໍແມ່ນງານມະໂຫລານການເຄື່ອນໄຫວກິລາຊົນເຜົ່າ ແລະ ງານມະໂຫລານເຄື່ອນໄຫວເສດຖະກິດການຄ້າວັດທະນະທຳ ແລະ ການບັນເທີງແຕ່ລະປີມີພຽງ 1 ຄັ້ງດ້ວຍຫລາຍຮູບຫລາຍສີຂອງປະຊາຊົນບັນດາເຜົ່າກິ່ງແຂວງຕ່ຳລີ. ໂດຍສະເພາະແມ່ນການເຄື່ອນໄຫວແຂ່ງມ້າຂອງຖະໜົນເດືອນ 3 ທີ່ມີນັກຂີ່ມ້າມາເຕົ້າໂຮມກັນຢ່າງຫຼວງຫຼາຍແລະມີມ້າແລ່ນໄວທີ່ແຂ່ງຂັນກັນແລ່ນເປັນຫນ້າຕື່ນເຕັ້ນ.

ມີຄຳຊ່າລືກັນຄືແນວນີ້ະແຕ່ກີ້ແຕ່ກ່ອນມີທໍລະລາດຜູ້ໜຶ່ງ,ມີຄວາມໄຝ່ຝັນຢາກດຳລົງຊີວິດຢູ່ແບບບໍ່ເຖົ້າແກ່,ໄປຟັງຄຳເວົ້າຂອງຄົນໃຊ້ຜູ້ຫນຶ່ງວ່າ: ບໍ່ຢາກເຖົ້າໃຫ້ກິນດວງຕາຂອງຄົນມື້ລະຄູ່,ອັນນີ້ມັນໄດ້ສ້າງມະຫັນຕະໄພອັນຫນັກຫນ່ວງມາສູ່ຊາວເຜົ່າໄປ໋ຂອງທ້ອງຖິ່ນດັ່ງກ່າວ.ເວລານັ້ນມີວິລະຊົນຜູ້ເກັ່ງກ້າມີອະນຸພາບດ້ວຍປະຕິຫານຜູ້ຫນຶ່ງ,ເພື່ອກຳຈັດຜີສາງມານຮ້າຍໃຫ້ອອກໄປຈາກປະຊາຊົນເຜົ່າໄປ໋,ໃນມື້ຫນຶ່ງຂອງເດືອນ3,ລາວໄດ້ໃຊ້ອຸບາຍອັນສະຫລາດສະຫລຽວ,ຕົວະໃຫ້ທໍລະລາດຜູ້ນີ້ໄປປີນພູສູງຫນ່ວຍຫນຶ່ງຂອງພູຊັ່ງຊ່ານ,ແລ້ວເອີ້ນເອົາໝາເທວະດາຕົວໜຶ່ງມາກັດຄໍຂອງທໍລະລາດຜູ້ນີ້ຈົນຂາດ,ກິນເລືອດຂອງເຂົາຈົນກ້ຽງ,ທໍລະລາດຜູ້ນີ້ຈຶ່ງຖືກດັບສູນກຳຈັດໄພອັນມະຫັນໃຫ້ອອກຈາກ ປະຊາຊົນຊາວເຜົ່າໄປ໋.ເພື່ອລະລຶກວິລະຊົນຜູ້ເກັ່ງກ້າຜູ້ນີ້ ແລະ ມື້ສັນວັນດີທີ່ປະຊາຊົນເຜົ່າໄປ໋ໄດ້ຖືກກອບກູ້ອອກຈາກໄພຜີ ບັດ,ຄົນທັງຫລາຍຈຶ່ງເອົາມື້ອອກໃໝ່ 15 ຄ່ຳຮອດແຮມ 5 ຄ່ຳ ຂອງເດືອນ 3 ຈັນທະຄະຕິຂອງແຕ່ລະປີມາເຕົ້າໂຮມກັນຢູ່ຕີນພູພູຊັ່ງຊ່ານໃນການຟ້ອນລຳທຳເພງຢ່າງເບີກບານມ່ວນຊື່ນ.ຈາກນັ້ນມາ ປີຕໍ່ປີກໍເລີຍກາຍເປັນເທດສະການ "ຖະຫນົນເດືອນ 3" ຂອງແຕ່ລະ ປີ. ມາດຽວນີ້ຢູ່ໄລຍະເທດສະການ "ຖະໜົນເດືອນ 3" ນັ້ນນອກຈາກມີການແລກປ່ຽນຊື້-ຂາຍວັດຖຸສິນຄ້າແລ້ວຍັງມີການສະແດງແບບຟ້ອນທຳນອງຮ້ອງຂອງຊົນເຜົ່າ, ດຳເນີນການເຄື່ອນ ໄຫວ ກິລາປະເພດຕ່າງໆ.

ງານແຂ່ງມ້າເປັນງານມະໂຫລານທີ່ດຸເດືອດກວ່າເພິ່ນຂອງເທດສະການຖະຫນົນເດືອນ 3. ມ້າຕ່ຳລີທີ່ອ້ວນພີດີງາມແຂງແຮງແລ່ນໄວ,ສາມາດຕ່າງເຄື່ອງຂອງໄດ້ດີຈົນລືຊື່ທົ່ວປະເທດຈີນ, ໃນປະຫວັດສາດມ້າຕ່ຳລີເປັນຈຳນວນຫຼວງຫຼາຍໄຫຼເຂົ້າໄປສູ່ຊ່ວງເລິກຂອງປະເທດຈີນກໍແມ່ນຜ່ານການແລກປ່ຽນຊື້ຂາຍຂອງງານເທດສະການຕະຫລາດນັດຖະຫນົນເດືອນ 3 ນີ້ແຫລະ. ຢູ່ໃນສະໜາມແຂ່ງມ້າຂອງເທດສະການຖະຫນົນເດືອນ 3,ຍັງມີມ້າທີ່ດີທີ່ລືຊື່ກວ່າເພິ່ນພ້ອມທັງອັດສະວິນທົ່ງຫຍ້າທີ່ເກັ່ງກ້າສາມາດທີ່ສຸດ,ໃຊ້ຮູບແບບອັນດຸເດືອດຂ້ຽວຂາດທີ່ສຸດ,ມາຍາດຊີງເອົາຖານະເປັນ "ລາຊາມ້າ" ແລະກໍເປັນການສ້າງໂອກາດອັນດີງາມໃຫ້ແກ່ນາງສາວຊົນເຜົ່າໄປ໋ທີ່ມີຈິດໃຈອ່ອນຫວານແລະກ້າແກ່ນທັງມີຮູບໂສມສວຍງາມນັ້ນໄປເລືອກເອົາຜູ້ທີ່ຈະເປັນ ຄູ່ຄອງຂອງຕົນ.ບັນດານັກຂີ່ມ້າທີ່ມີສຸຂະພາບເຂັ້ມແຂງ ແລະ ມີ ທ່າທາງອັນສະຫງ່າຜ່າເຜີຍມີລີລາຍອດຢ້ຽມໃນການຂີ່ມ້ານັ້ນ,ມັກຖືກບັນດານາງສາວຕິດອົກຕິດໃຈຈົນອອກໜ້າອອກຕາ,ກາຍເປັນເປົ້າໝາຍ "ຍາດຊີງ "ກັນຂອງບັນດານາງສາວ.

# ງານປະດັບປະດາຊ້າງເຜືອກ

# 老挝圣象装饰



ດ້ວຍການອອກແບບໂຄງສ້າງທີ່ແຂງແຮງແລະທົນທານ
ພ້ອມເສີມເຫຼັກຊຸບກັນຫມຮັບ
ໄວ້ພາຍໃນວົງກົບແລະກອບບານ

ດ້ວຍເທັກໂນໂລຍີການເຊື່ອມຮອຍຕໍ່ຂອງ
ມູມວົງກົບແລະກອບບານດ້ວຍຄວາມຮ້ອນ
ຈຶ່ງສະຫນິດເປັນເນື້ອດຽວກັນ

ເສີມລະບົບແຜ່ນຢາງແບບພິເສດ
ລະຫວ່າງວົງກົບແລະກອບບານ

ດ້ວຍການອອກແບບໂຄງສ້າງ
ພາຍໃນວົງກົບແລະກອບບານ
ໃຫ້ມີລ່ອງເກັບສຽງຫລາຍຊັ້ນ





ພວກເຮົາສາມາດເຮັດປະຕູແລະປ່ອງຢ້ຽມຕາມທີ່ທ່ານຕ້ອງການ




ເບີໂທ: (00856) 21 214071 ແຟກ: (00856) 21 213191

ທີ່ຢູ່: ຖະຫນົນດົງຫມ້ຽງ ຕໍ່ຫນ້າວັດດົງຫມ້ຽງ ວຽງຈັນ

**地址： 寮都公学十字路口**







# 南磷集團 YunPhos

YUNNAN PHOSPHORUS GROUP CO., LTD.

- YunPhos has achieved great success in phosphorus industry since its establishment in 1989.From the year 1997, YunPhos kept being the biggest exporter of yellow phosphorus and red phosphorus in China, and form 2004, became the second of phosphoric acid.





- Notwithstanding the admirable achievements in phosphorus field, YunPhos still kept seeking further development of the company. Steps taken include setting up brand-new plants to produce annually 100,000MT of caustic soda, 130,000MT of PVC and 60,000MT of STPP, which will steadily provide Yunphos with greater space to grow.

- YunPhos attaches great importance to stable and long-term business with its customers.Meanwhile, it also looks forward to cooperating with customers to produce phosphorus derivatives, mutually utilizing the unique advantage of Yunphos' low-cost resources and energy, as well as its comprehensive phosphorus and Chlor-Alkali industry.

Add: 20th Fl. Huguo Building Kunming Yunnan,China.
Tel: 86-871-3138337
Fax: 86-871-3179663
P.C: 650021
Http: //www.yunphos.com



## 菜肴加点醋　营养又健康

平时炒菜时，好多蔬菜中本身富含的维生素经过高温加热后，造成流失，如果在炒菜过程中加点醋，就可以起到保护维生素的作用。

# ເອົານ້ຳສົ້ມໃສ່ອາຫານໜ້ອຍໜຶ່ງ ຍິ່ງມີຜົນດີຕໍ່ສຸຂະພາບ


CFP 图

ເວລາພວກເຮົາຂົ້ວຜັກແຕ່ລະວັນ, ຜ່ານການປຸງແຕ່ງດ້ວຍຄວາມຮ້ອນສູງວິຕາມິນອັນອຸດົມສົມບູນຢູ່ໃນຜັກສ່ວນຫຼາຍຈະສູນເສຍໄປ. ຖ້າວ່າໃນເວລາປຸງແຕ່ງນັ້ນເອົານ້ຳສົ້ມຕື່ມໃສ່ຈັກໜ່ອຍ, ຈະສາມາດມີບົດບາດໃນການປົກປ້ອງວິຕາມິນບໍ່ໃຫ້ສູນເສຍເກີນໄປ.

ນ້ຳສົ້ມເປັນເຄື່ອງຊູລົດທີ່ມັກໃຊ້ໃນໂຕ໊ະອາຫານຂອງຄົນເຮົາ, ມັນມີສັບພະຄຸນຊ່ວຍຈະເລີນອາຫານ. ເມື່ອປຸງແຕ່ງອາຫານຊະນິດໃດໜຶ່ງແລ້ວຫາກຕື່ມນ້ຳສົ້ມໃສ່ໜ້ອຍໜຶ່ງ, ບໍ່ພຽງແຕ່ຈະໄດ້ປົກປ້ອງທາດບຳລຸງໃນອາຫານການກິນນັ້ນບໍ່ຖືກສູນເສຍ, ແຕ່ຍັງສາມາດຊຸກຍູ້ການຮັບເອົາຢ່າງເຕັມທີ່ຂອງຮ່າງກາຍຄົນເຮົາຕໍ່ທາດບຳລຸງໃນຂອງກິນດັ່ງກ່າວດ້ວຍ.

ເວລາຂົ້ວຜັກໃນແຕ່ລະຄັ້ງ, ວິຕາມິນສ່ວນຫລາຍໃນຜັກຜ່ານການປຸງແຕ່ງດ້ວຍຄວາມຮ້ອນສູງ, ກໍຈະຖືກເສຍຫາຍໄປ, ເວລາຂົ້ວຜັກຖ້າຕື່ມນ້ຳສົ້ມໃສ່ເລັກນ້ອຍ, ຈະສາມາດເຮັດໃຫ້ນ້ຳສົ້ມມີບົດບາດປົກປັກຮັກສາວິຕາມິນໃນຂອງກິນນັ້ນໄວ້ເຊັ່ນ:ວິຕາມິນຊີ, ໃນຕົວຂອງມັນແມ່ນນອນຢູ່ໃນລັກສະນະກົດອ່ອນ, ໃນນ້ຳສົ້ມ ທີ່ມີລັກສະນະກົດອ່ອນນັ້ນຈະເພີ່ມລັກສະນະໝັ້ນທ່ຽງບໍ່ໃຫ້ຖືກທຳ ລາຍຈາກຄວາມຮ້ອນສູງຢ່າງງ່າຍດາຍ.

ການອົບຊີ້ນ, ກະດູກ ຫລື ປະເພດໜັງທີ່ເປັນຂອງກິນລັກສະນະເນື້ອສັດນັ້ນ, ດີທີ່ສຸດໃຫ້ຕື່ມນ້ຳສົ້ມໃສ່ຫລາຍໜ້ອຍໜຶ່ງ. ນີ້ກໍຍ້ອນວ່ານ້ຳສົ້ມບໍ່ພຽງແຕ່ສາມາດເຮັດໃຫ້ຂອງກິນເຫຼົ່ານີ້ຕົ້ມເປື່ອຍໄວ, ຍັງສາມາດຊຸກຍູ້ໃຫ້ໂປຣຕີນຈຳນວນຫລວງຫລາຍຢູ່ໃນອາຫານດັ່ງກ່າວຖືກຍ່ອຍຢ່າງເຕັມທີ່, ເຮັດໃຫ້ຂາໝູ, ເອັນແລະຂາລາຍຕ່າງໆຊຶ່ງມີໂປຣຕີນຢ່າງຫລວງຫລາຍນັ້ນ, ເມື່ອຕົ້ມຫລື ຕຸນສຸກແລ້ວ, ໂປຣຕີນດັ່ງກ່າວຈະຖືກຮ່າງກາຍຂອງຄົນເຮົາຮັບເອົາຢ່າງເຕັມທີ່ກວ່າເກົ່າ.

ການຕື່ມນ້ຳສົ້ມໃສ່ຂອງກິນຍັງຊ່ວຍໃຫ້ທາດເປັນກາວໃນຈູລັງກະດູກນັ້ນແຍກເອົາທາດຟອດຟໍ ແລະ ການໂຊມອອກມາ, ເປັນການເພີ່ມຄຸນຄ່າທາດບຳລຸງຂອງອາຫານທີ່ກ່າວມາຂ້າງເທິງເຊັ່ນ:ເວລາຕຸນກະດູກຂາໃຫຍ່ຫລືກະດູກສັນຫລັງສາມາດເພີ່ມນ້ຳສົ້ມໃສ່ໜ້ອຍໜຶ່ງ. ແຕ່ໃຫ້ເອົາໃຈໃສ່ດີທີ່ສຸດໃຫ້ເອົານ້ຳສົ້ມໃສ່ເວລານ້ຳໃນໝໍ້ຍັງບໍ່ທັນຟົດແລ້ວໃຊ້ໄຟອ່ອນຕົ້ມໃຫ້ຟົດ, ເຮັດແນວນີ້ຈະສາມາດເຮັດໃຫ້collagenໃນໂປຣຕີນແລະໃນດູກໃນຊີ້ນນັ້ນຖືກລະລາຍອອກມາຢ່າງເຕັມທີ່. ໃຊ້ນ້ຳສົ້ມສາມາດຮັກສາທາດບຳລຸງໃນຜັກໃຫ້ດີຂຶ້ນກວ່າເກົ່າໃຫ້ຖືກຮ່າງກາຍຮັບເອົາດີກວ່າເກົ່າເຊັ່ນ: ສາມາດເອົາປີກໄກ່ ຫລື ກະດູກຂ້າງເປັນຕົ້ນມາຕົ້ມລ້າໆກ່ອນ(ເວລາຕົ້ມນັ້ນກໍໃຫ້ເພີ່ມນ້ຳສົ້ມໃສ່ແດ່). ເວລາຕັກໃສ່ຖ້ວຍແລ້ວລາດນ້ຳສົ້ມໃສ່ໜ້ອຍໜຶ່ງປະໄວ້ຈັກໜ່ອຍແລ້ວຈຶ່ງກິນ. ຫຼືຫາກກິນອາຫານທີ່ເຮັດດ້ວຍແປ້ງໝີ່ເຊັ່ນ: ເສັ້ນ ໝີ່ ແລະ ກ້ຽວເປັນຕົ້ນກໍສາມາດໃສ່ນ້ຳສົ້ມ ຫຼືເອົານ້ຳສົ້ມມາ ຈີ້ມກິນ, ເພາະວ່າໃນອາຫານທີ່ປຸງແຕ່ງມາຈາກແປ້ງໝີ່ນັ້ນວິ ຕາມິນບີສາມາດຮັກສາໄວ້ຍິ່ງໝັ້ນທ່ຽງໃນສະພາບແວດລ້ອມກົດອ່ອນຂອງນ້ຳສົ້ມ, ເຮັດໃຫ້ຮ່າງກາຍຂອງຄົນຮັບເອົາງ່າຍກວ່າເກົ່າ.













《占芭》杂志老挝发行、销售代理处：向导书屋　电话：00856-21-213191

ຕົວແທນຈຳໜ່າຍວາລະສານ《ຈຳປາ》ໃນເມືອງລາວ:ແສງດາວຂາຍປຶ້ມ Tel:00856-21-213191

# ສະຖານທີ່ທ່ຽວຫລິ້ນແຄມທະເລດ້ວຍຄວາມເບີກບານມ່ວນຊື່ນຂອງຄົນຄຸນມິງ

kūn míng rén de hǎi bīn yóu lè chǎng
昆明人的海滨游乐场

## yī qíng jǐng duì huà
## 一、情景对话

文/陆 蕊

ສະຖານະພາບຂອງການສົນທະນາ:



张碧晖 图

lán lán de tiān kōng wàn lǐ wú yún jīn
A：蓝蓝的天空万里无云，今
tiān tiān qì zhēn hǎo
天天气真好！
ຟ້າສີຄາມທີ່ຫລຽວໄປສຸດສາຍຕາກໍບໍ່ເຫັນເມກ ຈັກກ້ອນ, ມື້ນີ້ອາກາດຈັ່ງແມ່ນດີແທ້ນໍ້!

wǒ men dào chéng jiāng yóu yǒng qù ba
B：我们到澄江游泳去吧！
ພວກເຮົາໄປລອຍນ້ຳຢູ່ເຊີນຈ່ຽງເທາະ!

shì qù chéng jiāng fǔ xiān hú pàn de
A：是去澄江抚仙湖畔的
lǜ chōng ma wǒ qù guò le
绿充吗？我去过了！
ທີ່ນີ້ໄປລູ້ຊົງທີ່ຢູ່ແຄມໜອງຫູ້ຊຽນຂອງເຊີນຈ່ຽງນັ້ນບໍ່? ເຮົາເຄີຍໄປແລ້ວ!

zhè cì wǒ men qù yáng guāng hǎi àn zài
B：这次我们去阳光海岸在
jiāng chuān de xīng yún hú pàn
江川的星云湖畔。
ພວກເຮົາໄປເທື່ອນີ້ນັ້ນແມ່ນແຄມທະເລຢ້າງກວ່າງ,ແຄມໜອງຊິ່ງຢຸນຂອງຈ່ຽງຊວນ.

yǒu shén me bù yī yàng
A：有什么不一样？
ມີອັນໃດບໍ່ຄືກັນແດ່?

fǔ xiān hú hé xīng yún hú shì xiāng
B：抚仙湖和星云湖是相
lián de lǜ chōng hé yáng guāng hǎi àn
连的，绿充和阳光海岸
zhè liǎng gè hǎi bīn yóu lè chǎng
这两个海滨游乐场
xiāng jù bù yuǎn kě shì fēng gé què bù
相距不远，可是风格却不
xiāng tóng
相同。
ໜອງຫູ້ຊຽນ ແລະ ໜອງຊິ່ງຢຸນແມ່ນຕິດກັນ, ລູ້ຊົງ ແລະ ແຄມທະເລຢ້າງກວ່າງເດີ່ນຫລິ້ນມ່ວນຊື່ນ ຢູ່ແຄມທະເລ 2 ແຫ່ງນີ້ຫ່າງໄກຈາກກັນບໍ່ໄກປານໃດ, ແຕ່ວ່າທ່ວງທ່າອາດຊົງແມ່ນບໍ່ຄືກັນ.

yáng guāng hǎi àn dōu yǒu shén me hǎo
A：阳光海岸都有什么好
wá de
玩的？
ແຄມທະເລຢ້າງກວ່າງມີອັນໃດພໍໄປຫລິ້ນແດ່?

kě yǐ dēng gū shān xiǎo dǎo guān hú
B：可以登孤山小岛观湖
bīn měi jǐng zài jīn sè de shā tān
滨美景，在金色的沙滩
shàng xiǎng shòu rì guāng yù dǎ shā tān
上享受日光浴，打沙滩
pái qiú zài hú lǐ yóu yǒng xī xì zhuō
排球，在湖里游泳嬉戏、捉

páng xiè pǐn cháng dāng dì de měi wèi
螃蟹，品尝当地的美味

jiā yáo
佳肴。

ສາມາດໄປປີນພູກູຊ່ານໃນເກາະນ້ອຍເພື່ອເບິ່ງທິວທັດອັນສວຍງາມຂອງແຄມໜອງ, ຢູ່ຫາດຊາຍທີ່ເປັນສີຄຳນັ້ນສາມາດຮັບຊົມການອາບແສງແດດ, ຫລິ້ນບານສົ່ງ ຫາດຊາຍ,ລອຍນ້ຳໃນໜອງ ແລະ ຢອກກັນຫລິ້ນ ຢ່າງມ່ວນຊື່ນ,ຈັບໂຕປູໃນໜອງ, ຊີມລົດຊາດອັນ ແຊບນົວຂອງອາຫານທ້ອງຖິ່ນ.

liǎng gè de fāng yǒu shén me bù tóng
A：两个地方有什么不同？

ສອງບ່ອນນີ້ມີອັນໃດແຕກຕ່າງກັນແດ່?

bié wèn zhè me duō liǎng chù dōu shì
B：别问这么多，两处都是

kūn míng rén de hǎi bīn yóu lè chǎng
昆明人的海滨游乐场，

kě wán de dōng xī duō le děng dào le
可玩的东西多了。等到了

nǐ jiù zhī dào le
你就知道了。

ຢ່າຊູຖາມຫລາຍເທາະ, 2 ບ່ອນນີ້ລ້ວນແຕ່ແມ່ນສະຖານທີ່ທ່ຽວຫລິ້ນມ່ວນຊື່ນຢູ່ແຄມທະເລຂອງຊາວຄຸນມິງ,ສິ່ງທີ່ເປັນຕາຫລິ້ນເປັນຕາເບິ່ງແມ່ນມີຫລາຍຢູ່. ຖ້າໄປຮອດແລ້ວເຈົ້າຈຶ່ງຈະຮູ້ເອງ.

nà nǐ děng wǒ yí xià wǒ qù shōu shi
A：那你等我一下，我去收拾

dōng xī
东西。

ຄັນຊັ້ນເຈົ້າຖ້າຂ້ອຍຈັກໜ່ອຍເນີ້ ໃຫ້ຂ້ອຍໄປມ້ຽນເຄື່ອງເສຍກ່ອນ.

wǒ qù kāi chē
B：我去开车。

ຂ້ອຍໄປຂັບລົດກ່ອນເນີ້.

fēn zhōng hòu wǒ men zài yuàn zǐ
A：10分钟后我们在院子

mén kǒu huì hé
门口汇合。

ອີກ10ນາທີພວກເຮົາມາພົບກັນຢູ່ປາກປະຕູເດີ່ນບ້ານນີ້ເນີ້.

hǎo kě bié wàng le dài yóu yǒng yī
B：好，可别忘了带游泳衣！

ໄດ້, ແຕ່ຢ່າລືມເອົາຊຸດລອຍນ້ຳໄປນຳແດ່!

èr jiāo nǐ dú gǔ shī
## 二：教你读古诗

编/陆 蕊 绘图/刘金昆

ສອນໃຫ້ທ່ານອ່ານກາບກອນບູຮານ

ຈ່ຽງເຊຍ(ຫົມະໃນແມ່ນ້ຳ)ມີເນື້ອຫາດັ່ງນີ້:

sù jiàn dé jiāng
**宿建德江**

yí zhōu bó yān zhǔ
移舟泊烟渚，

rì mù kè chóu xīn
日暮客愁新。

yě kuàng tiān dī shù
野旷天低树，

jiāng qīng yuè jìn rén
江清月近人。

dà yì
大意：

bǎ xiǎo chuán tíng kào zài wù qì mí
把小船停靠在雾气弥

màn de àn biān xī yáng xī xià piāo bó
漫的岸边，夕阳西下，漂泊

de lǚ kè gèng tiān jǐ fēn chóu chàng
的旅客更添几分惆怅。

yuán yě kōng kuàng tiān mù dī chuí zài
原野空旷，天幕低垂在

shù lín hòu bian jiāng shuǐ qīng chè dào
树林后边，江水清澈倒

yìng chū míng yuè bàn wǒ shēn páng
映出明月伴我身旁。

ມີຄວາມໝາຍວ່າ: ເອົາເຮືອນ້ອຍຈອດຢູ່ແຄມຝັ່ງທີ່ມີໝອກກົ້ວຢູ່ຢ່າງໜາແໜ້ນ, ຕາເວັນຄ້ອຍຄ່ຳພວມຄ້ອຍໄປທາງ ທິດຕາເວັນຕົກ, ຜູ້ໂດຍສານທີ່ຊັດເຊພະເນຈອນຍິ່ງເພີ່ມຄວາມ ກັງວົນໃຈຂຶ້ນຕື່ມ. ຢູ່ໃນປ່າດົງທີ່ມີມາແຕ່ເດີມອັນຫວ່າງເປົ່ານັ້ນ,ຢູ່ ເບື້ອງຫລັງຂອງປ່າໄມ້ຟ້າພວມຢ່ອນລົງ, ນ້ຳຢູ່ໃນແມ່ນ້ຳທີ່ໃສສະອາດໄດ້ສ່ອງເຫັນເດືອນອັນຮຸ່ງແຈ້ງເປັນເພື່ອນຢູ່ຄຽງຂ້າງເຮົາ.



绘图 / 刘金昆

# ໄດ້ຍິນສຽງໄກ່ຂັນກໍນອນຕື່ນລຸກຂຶ້ນຟ້ອນ

## 闻鸡起舞



ທ້າວຈູຖີ້ຂອງສະໄຫມລາຊະວົງຈິ້ນເປັນຄົນຜູ້ຫນຶ່ງທີ່ມີຈິດໃຈກວ້າງຂວາງ ແລະ ທັງມີອຸດົມຄະຕິອັນຍາວໄກ. ແຕ່ວ່າເວລາເຂົາຍັງຢູ່ໄວເຍົາຊ້ຳເປັນເດັກຂີ້ດື້ທີ່ບໍ່ມັກອ່ານຫນັງສື. ເມື່ອເຂົ້າສູ່ໄວຊາວຫນຸ່ມແລ້ວ, ເຂົາໄດ້ສຳນຶກເຫັນຕົນເປັນຄົນຫນຶ່ງທີ່ຂາດເຂີນຄວາມຮູ້ຜູ້ຫນຶ່ງ, ຮູ້ສຶກຢ່າງເລິກເຊິ່ງວ່າບໍ່ຮຽນຫນັງສືຈະບໍ່ສາມາດຮັບໃຊ້ປະເທດຊາດໄດ້ຢ່າງມີຜົນ, ດັ່ງນັ້ນຈຶ່ງບຸກຫນ້າບືນຕົວມາຮຽນຫນັງສື. ເຂົາໄດ້ອ່ານຫນັງສືເປັນຈຳນວນຫລວງຫລາຍ ແລະ ກວ້າງຂວາງ, ຮຽນປະຫວັດສາດດ້ວຍຄວາມເອົາໃຈໃສ່, ໄດ້ຮັບເອົາຄວາມຮູ້ຢ່າງອຸດົມສົມບູນ, ຄວາມຮູ້ໄດ້ຄືບຫນ້າໄປຢ່າງໃຫຍ່ຫລວງ. ເຂົາເຄີຍເຂົ້າ-ອອກນະຄອນຫລວງລໍ້ຢ້າງເປັນຫລາຍຄັ້ງ, ຜູ້ທີ່ເຄີຍສຳຜັດກັບເຂົານັ້ນລ້ວນແຕ່ພາກັນເວົ້າວ່າຈູຖີ້ເປັນຜູ້ມີຄວາມສາມາດຜູ້ຫນຶ່ງເພື່ອຊ່ອຍອົງກະສັດປົກຄອງປະເທດ. ເວລາຈູຖີ້ມີອາຍຸ 24 ປີ, ເຄີຍມີຄົນສະເຫນີຕົວໃຫ້ເຂົາໄປເປັນເຈົ້ານາຍ, ແຕ່ເຂົາບໍ່ຮັບ, ຍັງສືບຕໍ່ຮຽນຫນັງສືດ້ວຍຄວາມມານະພະຍາຍາມຢ່າງບໍ່ລົດລະ.

ພາຍຫລັງມາ, ຈູຖີ້ ກັບລີ້ວຄຸ່ນທີ່ເປັນເພື່ອນມິດດີນຳກັນເວລາຍັງເປັນໄວເຍົານັ້ນພ້ອມກັນດຳລົງຕຳແຫນ່ງເປັນເຈົ້າຫນ້າທີ່ຝ່າຍຂີດຂຽນຂັ້ນສູງຂອງແຂວງ. ຄວາມຮັກແພງກັນລະຫວ່າງເຂົາກັບລີ້ວຄຸ່ນແມ່ນແຫນ້ນແຟ້ນທີ່ສຸດ, ບໍ່ພຽງແຕ່ມັກນອນຢູ່ຕຽງດຽວກັນ, ຫົ່ມຜ້າຜືນດຽວກັນ, ແລະຍັງມີອຸດົມຄະຕິອັນຍາວໄກນຳກັນອີກ, ເພື່ອສ້າງຄຸນງາມຄວາມດີໃຫ້ແກ່ການຟື້ນຟູປະເທດຈິນໃຫ້ຈະເລີນຮຸ່ງເຮືອງ, ກາຍເປັນບຸກຄະລາກອນທີ່ເປັນອື່ເປັນແປໃຫ້ ແກ່ປະເທດຊາດ.

ໃນທ່ຽງຄືນຂອງຄັ້ງຫນຶ່ງເວລາຈູຖີ້ຍັງນອນຫລັບນອນຝັນຢູ່ນັ້ນໄດ້ຍິນສຽງໄກ່ຜູ້ຂັນ, ເຂົາຟ້າວເອົາຕີນເຕະລີ້ວຄຸ່ນປຸກລີ້ວ ຄຸ່ນໃຫ້ຕື່ນຂຶ້ນມາແລ້ວເວົ້ານຳເຂົາວ່າ: "ຄົນອື່ນລ້ວນແຕ່ຖືວ່າຫຼັງທ່ຽງຄືນແລ້ວໄດ້ຍິນສຽງໄກ່ຜູ້ຂັນແມ່ນບໍ່ເປັນມົງຄຸນ, ເຮົາຊ້ຳບໍ່ຄິດຄືແນວນັ້ນ, ພວກເຮົາຕໍ່ໄປເມື່ອຫາກໄດ້ຍິນສຽງໄກ່ຂັນແລ້ວກໍລຸກຂຶ້ນມາຫັດຟ້ອນດາບຈະດີບໍ່?" ລີ້ວຄຸ່ນເຫັນດີທັນທີໂລດ. ສະນັ້ນພວກເຂົາເຈົ້າແຕ່ລະວັນເມື່ອໄດ້ຍິນສຽງໄກ່ຂັນແລ້ວກໍ່ລຸກຂຶ້ນມາຮຽນຟ້ອນດາບ, ແສງດາບຫຍິບຫຍັບແວວວາວໄປຕາມແບບຟ້ອນ, ສຽງຂອງດາບຕ່ອຍກັນດັງແຊ່ງໆ. ລະດູບານໃຫມ່ ຜ່ານໄປລະດູຫນາວຫມູນວຽນມາເຖິງ, ຍາມຫນາວມາຍາມຮ້ອນໄປການຮຽນດາບຂອງເຂົາເຈົ້າບໍ່ເຄີຍໄດ້ຢຸດເຊົາຈັກເທື່ອ. ຄວາມມານະມີເທົ່າໃດຄວາມສຳເລັດກໍ່ມີເທົ່ານັ້ນ, ຜ່ານການຮ່ຳຮຽນ ແລະ ຝຶກຫັດຢ່າງທໍລະຫົດອົດທົນເປັນເວລາຍາວນານຂອງພວກ ເຂົາເຈົ້າທັງສອງ, ສຸດທ້າຍກໍ່ໄດ້ກາຍມາ ເປັນຜູ້ມີຄວາມຮູ້ທາງດ້ານການຂີດຂຽນແລະທາງດ້ານຍຸດທະວິທີຢ່າງຄົບຖ້ວນບໍລິບູນ, ສາມາດຂຽນບົດຄວາມອັນຍອດຢ້ຽມອອກມາ ແລະ ທັງສາມາດນຳພາກອງທັບໄປສູ້ຮົບເອົາຊະນະຂ້າເສິກ. ຈູຖີ້ຖືກແຕ່ງຕັ້ງເປັນນາຍພົນເຈິ້ນຊີ່, ເຮັດໃຫ້ຄວາມມຸ່ງມາດປາຖະຫນາຮັບໃຊ້ປະເທດຊາດຂອງເຂົາປະກົດຜົນເປັນຈິງ; ລີ້ວຄຸ່ນໄດ້ເປັນນາຍພົນປາບຂ້າເສິກພາກເຫນືອພ້ອມທັງເປັນຜູ້ຄຸ້ມຄອງການທະຫານ 3 ແຂວງຄື: ແຂວງປີ້ງ, ແຂວງອີ້ ແລະ ແຂວງອິ່ວ, ແລະກໍ່ໄດ້ເສີມຂະຫຍາຍຄວາມຮູ້ຄວາມສາມາດທາງດ້ານການຂີດຂຽນ ແລະ ຍຸດທະວິທີຂອງເຂົາຢ່າງເຕັມທີ່.

ໄດ້ຍິນສຽງໄກ່ຂັນແລ້ວກໍລຸກຂຶ້ນຟ້ອນດາບ. ຕໍ່ມາໄດ້ເປັນຄຳອຸປະມາວ່າ: ຜູ້ທີ່ມີອຸດົມການຮັບໃຊ້ປະເທດຊາດນັ້ນຕ້ອງບຸກ ບືນກ້າວຂຶ້ນໃຫ້ທັນກັບເວລາ.







## Kunming Country Golf Club

Kunming Country Golf Club, Which is 18 holes, 6,918 yards, par 72 championship course, designed by the famous designer Mr. Les Watts from Australia, covers an area of over 1300 mu in Luoyang, Chenggong County which is surrounded by the beautiful landscape and fresh air. Among the course there are 4 about 500 yards of long distance fairways, 10 middle distance fairways within 300-400 yards and 4 short distance fairways under 200 yards.

The turf putter on the green and the fairway make the course evergreen and achieve the international standard.

The course is located near the Anshi highway, about 30 minutes' drive, 14 km from downtown, which is really a good place for leisure, intercourse and recreation. Going ahead 70 kilometers away is the Stone Forest, Jiuxiang scenic region and AHL cave.

Welcoming you with sunny sky, eternal spring weather and challenging course - Kunming Country Golf Club provides you with a truly pleasant experience and a new feeling of golfing.

Kunming Country Golf Club



Address:14 section form Anshi higuoy,kunming
Marketing and sales headquarter: ( 86-871 ) 7426698
Anteroom: ( 86-871 ) 7426666
Fax: ( 86-871 ) 7426648


Welcome to Laos... Land of Timeless Beauty
Lao Airlines
ການບິນລາວ
Lao Airlines
The Beauty of Lao Hospitality